# 3

# ເຄື່ອງມືການວິເຄາະທາງສັງຄົມ ເພື່ອການປ່ຽນແປງ

## Social Analysis and Action Tools

# 1. ກອບບົດບາດທາງເພດ - Gender Box[1]

## ຈຸດປະສົງຂອງເຄື່ອງມື

ເພື່ອລະບຸ ແລະ ວິໄຈບົດບາດທົ່ວໄປ, ພຶດຕິກຳ ແລະ ບັນທັດຖານ ທີ່ປະກອບມາຈາກ ຫຼື ເປັນຄວາມຄາດຫວັງຈາກຜູ້ຊາຍ ແລະ ແມ່ຍິງໃນຊຸມຊົນ, ພວກເຂົາມີການຮັກສາຄືແນວໃດ ແລະ ສາມາດປ່ຽນແປງໄດ້ແນວໃດ.

## ເວລາປະຕິບັດ

1 ຫາ 1.5 ຊົ່ວໂມງ

## ອຸປະກອນ ແລະ ການກະກຽມ

- ເຈ້ຍແຜ່ນໃຫຍ່, ບິກເຟີດສີ ຫຼື ບິກໃຊ້ແຕ້ມຮູບຫຼາຍສີ, ບັດເຈ້ຍ, ສະກອັດຕິດເຈ້ຍ.
- ທວນຄືນຂັ້ນຕອນຕ່າງໆໃນການອຳນວຍຄວາມສະດວກ, ແຈ້ງບົດບາດໃຫ້ຊັດເຈນ ຖ້າຫາກວ່າມີຜູ້ອຳນວຍຄວາມສະດວກຫຼາຍກວ່າໜຶ່ງຄົນ, ແລະ ຕັດສິນໃຈວ່າຈະໃຊ້ວິທີການໃດ ເພື່ອອຳນວຍຄວາມສະດວກ (ເຊັ່ນ: ແຕ່ລະກຸ່ມແຕ້ມຮູບຕົນເອງ ຫຼື ເພດກົງກັນຂ້າມ).

## ຂັ້ນຕອນ

1. ພາຍຫຼັງຕ້ອນຮັບຜູ້ເຂົ້າຮ່ວມ, ໃຫ້ຄຳແນະນຳສັ້ນໆກ່ຽວກັບກິດຈະກຳ ເຊັ່ນ: "ມື້ນີ້ພວກເຮົາ ຈະປຶກສາຫາລືກ່ຽວກັບຄວາມຄາດຫວັງ ທີ່ພວກເຮົາ, ໝູ່ເພື່ອນ, ຄອບຄົວ, ແລະ ຊຸມຊົນຂອງພວກເຮົາໃນນາມ ທີ່ເປັນແມ່ຍິງ ແລະ ຜູ້ຊາຍ. ພວກເຮົາຈະເອີ້ນ ຄວາມຄາດຫວັງເຫຼົ່ານີ້ ວ່າ 'ບົດບາດທາງເພດ' ຂອງພວກເຮົາ."
2. ແບ່ງຜູ້ເຂົ້າຮ່ວມເປັນ ກຸ່ມຍິງ ແລະ ກຸ່ມຊາຍ. ຖ້າຫາກວ່າພວກເຂົາເປັນກຸ່ມເພດດຽວກັນ, ໃຫ້ຜູ້ເຂົ້າຮ່ວມຈຳນວນເຄິ່ງໜຶ່ງ ເຮັດວຽກ ສວມບົດບາດ ເປັນເພດກົງກັນຂ້າມ (ຕົວຢ່າງ: ໃຫ້ແມ່ຍິງ ສະແດງຄວາມຄິດເຫັນຂອງຜູ້ຊາຍ ຖ້າບໍ່ມີຜູ້ຊາຍເຂົ້າຮ່ວມນຳ).
3. ບອກໃຫ້ແຕ່ລະກຸ່ມແຕ້ມຮູບສີ່ຫຼ່ຽມຂະໜາດກາງ ແລະ ບອກເຂົາເຈົ້າວ່ານີ້ແມ່ນ "ກອບບົດບາດທາງເພດ". ພາຍໃນກອບດັ່ງກ່າວ ບອກໃຫ້ກຸ່ມແມ່ຍິງ ແຕ້ມຮູບແມ່ຍິງທີ່ມີລັກສະນະ "ປົກກະຕິທົ່ວໄປ" ແລະ ກຸ່ມຜູ້ຊາຍ ແຕ້ມຮູບຜູ້ຊາຍ "ປົກກະຕິທົ່ວໄປ". ນອກຈາກນັ້ນ, ຜູ້ອຳນວຍຄວາມສະດວກສາມາດເລືອກໃຫ້ແມ່ຍິງແຕ້ມຮູບຜູ້ຊາຍ ແລະ ຜູ້ຊາຍແຕ້ມຮູບແມ່ຍິງ. ການເລືອກວິທີນີ້ ຄວນຕັດສິນໃຈ ກ່ອນຈະເລີ່ມປະຕິບັດກິດຈະກຳ.
4. ບອກໃຫ້ແຕ່ລະກຸ່ມສົນທະນາກ່ຽວກັບປະສົບການຂອງຕົນເອງທາງດ້ານບົດບາດ, ພຶດຕິກຳ, ແລະ ບັນທັດຖານທາງສັງຄົມ ຫລື ສິ່ງທີ່ສັງຄົມຄາດຫວັງ ຕໍ່ກັບແມ່ຍິງ ແລະ ຜູ້ຊາຍ ທີ່ມີລັກສະນະ "ປົກກະຕິທົ່ວໄປ" ແລະ ແຕ້ມເຄື່ອງໝາຍ ຫຼື ຂຽນຈຸດສຳຄັນຢູ່ພາຍໃນກອບ.
   a. ສຳລັບແມ່ຍິງ, ຕົວຢ່າງ: ຮູ້ຈັກດີກ່ຽວກັບວິທີປຸງແຕ່ງອາຫານ, ເບິ່ງແຍງນ້ອງໆ ແລະ ລູກນ້ອຍ, ສຳເລັດການສຶກສາ ຂັ້ນພື້ນຖານ, ແຕ່ງດອງກ່ອນໄວ, ມີລູກ/ລູກຊາຍຢ່າງໜ້ອຍໜຶ່ງຄົນ, ມີລັກສະນະຮູບຮ່າງງາມ, ມີພົມມະຈັນຈົນກ່ວາຈະແຕ່ງດອງ, ບໍ່ໄດ້ຂັດແຍ່ງ ຄວາມຄິດເຫັນກັບຜົວໃນບ່ອນສາທາລະນະ, ແລະ ອື່ນໆ.
   b. ສຳລັບຜູ້ຊາຍ, ຕົວຢ່າງ: ມີວຽກເຮັດ, ມີປະສົບການໃນການມີເພດສຳພັນ, ຮຽນຈົບຊັ້ນມັດທະຍົມສຶກສາ, ແຕ່ງດອງກ່ອນໄວອາຍຸ, ມີລູກ ຫຼື ມີລູກຊາຍ, ມີຮ່າງກາຍແຂງແຮງ, ຄວບຄຸມເມຍ, ເຂົ້າຮ່ວມກິດຈະກຳໃນຊຸມຊົນ ແລະ ອື່ນໆ.
5. ພາຍຫຼັງທີ່ໄດ້ຂຽນລາຍລະອຽດຕ່າງໆ "ພາຍໃນກອບ" ສຳເລັດແລ້ວ ໃຫ້ຖາມສະມາຊິກກຸ່ມວ່າ ຄວາມຄາດຫວັງເຫຼົ່ານັ້ນ ມາຈາກໃສ ຫຼື ຈາກບ່ອນໃດ ຫຼື ໄດ້ຮຽນຮູ້ຈາກໃຜ. ແນະນຳສະມາຊິກກຸ່ມ ໃຫ້ຂຽນແຫຼ່ງທີ່ມາຂອງຄວາມຄາດຫວັງດັ່ງກ່າວອ້ອມຮອບກອບບົດບາດທາງເພດ, ໃຫ້ໝາຍວົງມົນເອົາແຕ່ລະລາຍການ ຫຼື ແຫຼ່ງຂໍ້ມູນ.
6. ຂັ້ນຕອນຕໍ່ໄປ, ໃຫ້ຜູ້ເຂົ້າຮ່ວມສົນທະນາພາຍໃນກຸ່ມກ່ຽວກັບບົດບາດ, ພຶດຕິກຳ ແລະ ບັນທັດຖານ ທາງສັງຄົມຕ່າງໆ ຕໍ່ກັບ ແມ່ຍິງ ແລະ ຜູ້ຊາຍທີ່ສັງຄົມເຫັນວ່າມີລັກສະນະ "ບໍ່ເປັນປົກກະຕິທົ່ວໄປ" ຫຼື ເປັນສິ່ງທີ່ສັງຄົມບໍ່ໄດ້ຄາດຫວັງໃຫ້ ຜູ້ຊາຍ/ແມ່ຍິງເປັນ, ໃຫ້ກຸ່ມ ແຕ້ມຮູບ ຫຼື ຂຽນສິ່ງດັ່ງກ່າວຢູ່ນອກກອບ. ຫລັງຈາກນັ້ນໃຫ້ກຸ່ມສົນທະນາກ່ຽວກັບ ຜົນກະທົບຕໍ່ແມ່ຍິງ ແລະ ຜູ້ຊາຍ ທີ່ເກີດຈາກ ການປະຕິບັດພຶດຕິກຳນອກກອບ.

*1 ດັດປັບມາຈາກເຄື່ອງມື Together Now- ເຄື່ອງມືເລກທີ 25: International HIV/AIDS Alliance, 2006, www.aidsalliance.org*

a. ສຳລັບແມ່ຍິງ, ຕົວຢ່າງ: ແຕ່ງຕົວຄືກັບຜູ້ຊາຍ, ມີເພດສຳພັນກ່ອນແຕ່ງດອງ, ມີຄູ່ຮ່ວມເພດສຳພັນຫຼາຍກວ່າ ໜຶ່ງຄົນ, ເວົ້າດັງ ຫຼື ເວົ້າໃນບ່ອນສາທາລະນະ, ສູບຢາ ແລະ ດື່ມເຫຼົ້າ, ອອກໄປທ່ຽວໂດຍບໍ່ໄດ້ຮັບອະນຸຍາດ ຫຼື ໃນຕອນກາງຄືນ ແລະ ອື່ນໆ.

b. ສຳລັບຜູ້ຊາຍ, ຕົວຢ່າງ: ບໍ່ມີລາຍໄດ້ ຫຼື ບໍ່ມີເງິນ, ເປັນຄົນມັກເພດດຽວກັນ, ຮ້ອງໄຫ້ໃນບ່ອນສາທາລະນະ, ອ່ອນແອ, ເວົ້າຄ່ອຍໆ, ປຸງແຕ່ງອາຫານ, ຫາບນ້ຳ ຫຼື ເຮັດວຽກຄອບຄົວ ແລະ ອື່ນໆ.

7. ຫຼັງຈາກກຸ່ມໄດ້ລະບຸຄວາມຄາດຫວັງຕ່າງໆທີ່ກ່ຽວຂ້ອງກັບທັດສະນະຄະຕິ, ພຶດຕິກຳ, ນິໄສ, ຮູບຮ່າງໜ້າຕາ ທີ່ມີລັກສະນະ "ປົກກະຕິ" ແລະ "ບໍ່ປົກກະຕິ", ແລະ ອື່ນໆແລ້ວ, ໃຫ້ກຸ່ມຜູ້ຊາຍ ແລະ ກຸ່ມແມ່ຍິງ ນຳສະເໜີກ່ຽວກັບ ກອບບົດບາດທາງເພດ ຂອງເຂົາເຈົ້າ. ໃຫ້ຄົນອື່ນໆທີ່ເປັນເພດດຽວກັນ ມີຄວາມຄິດເຫັນເພີ່ມເຕີມ, ແລ້ວສະເໜີໃຫ້ທັງສອງກຸ່ມ ໄດ້ມີໂອກາດຊີ້ແຈງ ຫຼື ປະກອບຂໍ້ສັງເກດການ ຂອງເຂົາເຈົ້າ.

8. ຫຼັງຈາກສຳເລັດການນຳສະເໜີແລ້ວ, ໃຫ້ຖາມຜູ້ເຂົ້າຮ່ວມ 3 ຫາ 6 ຄຳຖາມສົນທະນາ ດັ່ງຕໍ່ໄປນີ້:

- ມີພາລະບົດບາດ ແລະ ຄວາມຄາດຫວັງແບບໃດແດ່ທີ່ຖືກມອບໝາຍໃຫ້ແມ່ຍິງ? ຜູ້ຊາຍ? ສິ່ງເຫຼົ່ານັ້ນແມ່ນຄືກັນ ຫຼື ແຕກຕ່າງກັນ? ເປັນຫຍັງຈຶ່ງເກີດມີຄວາມແຕກຕ່າງເຫຼົ່ານັ້ນ?
- ຄວາມຄາດຫວັງເຫຼົ່ານັ້ນສາມາດຊ່ວຍ ຫຼື ສ້າງປະໂຫຍດບໍ່? ຖ້າມັນສາມາດສ້າງປະໂຫຍດ, ມັນໄດ້ຊ່ວຍ ຫລື ສ້າງປະໂຫຍດແກ່ໃຜແດ່ ແລະ ມັນຊ່ວຍ ຫລື ສ້າງປະໂຫຍດແນວໃດ?
- ຄວາມຄາດຫວັງເຫຼົ່ານັ້ນ**ສ້າງຜົນກະທົບທາງລົບ ແລະ** ເປັນອັນຕະລາຍບໍ່? ຖ້າເປັນ, ມັນໄດ້ທຳຮ້າຍໃຜແດ່ ແລະ ທຳຮ້າຍແນວໃດ?
- ຄວາມຄາດຫວັງທີ່ມີລັກສະນະ ປົກກະຕິ ແລະ ບໍ່ປົກກະຕິເຫຼົ່ານັ້ນແຕກຕ່າງກັນ ສຳລັບກຸ່ມຄົນໃດໜຶ່ງບໍ່? ຄົນກຸ່ມໃດ ແລະ ແຕກຕ່າງກັນແນວໃດ?
- ຄົນໃນຊຸມຊົນຂອງພວກເຮົາໄດ້ມີການບັງຄັບ ໃຫ້ແມ່ຍິງ ແລະ ຜູ້ຊາຍ ປະຕິບັດຕາມບາງບົດບາດ, ພຶດຕິກຳ ແລະ ບັນທັດຖານບາງຢ່າງ ທີ່ສັງຄົມຄາດຫວັງ ບໍ່? ຖ້າມີ, ແມ່ນໃຜ, ຍ້ອນຫຍັງ ແລະ ບັງຄັບແນວໃດ?
- ອີງຕາມທັດສະນະຄະຕິ ແລະ ພຶດຕິກຳຕ່າງໆທີ່ຢູ່ນອກກອບ, ຜົນທີ່ຕາມມາ (ທັງດ້ານບວກ ແລະ ດ້ານລົບ) ທີ່ຄົນເຮົາຈະໄດ້ປະສົບພົບພໍ້ ເມື່ອ "ກ້າວອອກນອກ" ກອບ ມີຫຍັງແດ່? ຜົນທີ່ຕາມມາເຫລົ່ານີ້ແມ່ນຄືກັນບໍ່ ສຳລັບຜູ້ຊາຍ ແລະ ແມ່ຍິງ?
- ມັນມີຄ່າໃຊ້ຈ່າຍ (ເງື່ອນໄຂຂອງຄ່າໃຊ້ຈ່າຍທາງສັງຄົມ, ຄ່າໃຊ້ຈ່າຍຕໍ່ກັບໂອກາດທີ່ໄດ້ມາ, ຄ່າໃຊ້ຈ່າຍທາງການເງິນ, ຄ່າໃຊ້ຈ່າຍດ້ານສິດທິ ແລະ ອື່ນໆ) ຕໍ່ບົດບາດ, ພຶດຕິກຳ ແລະ ບັນທັດຖານທາງສັງຄົມຕ່າງໆ ທີ່ມີຢູ່ໃນຊຸມຊົນ ຂອງທ່ານບໍ່?
- ໃຜມີອິດສະລະຫຼາຍກວ່າກັນທີ່ຈະ "ກ້າວອອກນອກ" ກອບ? ມັນມີຜົນປະໂຫຍດຫຍັງແດ່ເມື່ອຢູ່ນອກກອບ?
- ທ່ານໄດ້ປະຕິບັດຕາມຄວາມຄາດຫວັງຂອງສັງຄົມໃນການເປັນ ແມ່ຍິງ ຫຼື ຜູ້ຊາຍທີ່ມີລັກສະນະ "ປົກກະຕິ" ບໍ່? ເປັນຫຍັງ/ເປັນຫຍັງຈຶ່ງບໍ່ປະຕິບັດຕາມ?
- ເວລາໃດທີ່ທ່ານເລືອກ "ຢູ່ໃນກອບ" ແລະ ເວລາໃດທີ່ທ່ານເລືອກ "ກ້າວອອກຈາກກອບ"? ເປັນຫຍັງ?

9. ຫຼັງຈາກສຳເລັດການສົນທະນາ, ຖາມຜູ້ເຂົ້າຮ່ວມ ວ່າພວກເຂົາມີຄຳຖາມ ຫຼື ຈຸດສຳຄັນອື່ນໆ ທີ່ຢາກຈະຍົກຂຶ້ນມາເພື່ອສົນທະນາອີກຫລືບໍ່. ຈາກນັ້ນ, ຂອບໃຈຜູ້ເຂົ້າຮ່ວມໃນການປະກອບສ່ວນ ແລະ ຊ່ວຍເຫຼືອ ເພື່ອໃຫ້ທຸກຄົນເຂົ້າໃຈຫຼາຍຂຶ້ນກ່ຽວກັບສະພາບຂອງກັນ ແລະ ກັນ. ໃນຂະນະທີ່ແຈ້ງໃຫ້ຜູ້ເຂົ້າຮ່ວມຮູ້ວ່າຂໍ້ມູນ, ເລື່ອງສ່ວນຕົວ ແລະ ປະສົບການທີ່ໄດ້ແບ່ງປັນກັນ ໃນລະຫວ່າງການສົນທະນາ ຄວນຮັກສາໄວ້ ຢູ່ໃນກຸ່ມ, ໃຫ້ຊຸກຍູ້ໃຫ້ຜູ້ເຂົ້າຮ່ວມ ແບ່ງປັນບັນຫາຕ່າງໆທີ່ໄດ້ຖືກສົນທະນາ ແລະ ສິ່ງທີ່ເຂົາເຈົ້າ ໄດ້ຮຽນຮູ້ຈາກ ຄອບຄົວ ແລະ ໝູ່ເພື່ອນ ຜູ້ທີ່ບໍ່ໄດ້ເຂົ້າຮ່ວມການຝຶກອົບຮົມຄັ້ງນີ້ ຖ້າຫາກເຂົາເຈົ້າ ຮູ້ສຶກສະບາຍໃຈທີ່ຈະແບ່ງປັນ. ສຸດທ້າຍ, ບອກໃຫ້ຜູ້ເຂົ້າຮ່ວມຄິດເຖິງວິທີແກ້ໄຂກັບສິ່ງທ້າທາຍຕ່າງໆ ທີ່ໄດ້ສົນທະນາກັນໃນລະຫວ່າງ ການສົນທະນາກຸ່ມ ເຊິ່ງມັນຈະຊ່ວຍໃນການສືບຕໍ່ການສົນທະນາໃນພາກຕໍ່ໄປ.

### ໝາຍເຫດສຳລັບຜູ້ອຳນວຍຄວາມສະດວກ

1. ກອບບົດບາດທາງເພດ ເປັນເຄື່ອງມືພື້ນຖານທີ່ດີເພື່ອສະແດງໃຫ້ເຫັນຢ່າງຈະແຈ້ງເຖິງຄວາມຄາດຫວັງ ທາງດ້ານບົດບາດທາງເພດ ແລະ ສັງຄົມຂອງແມ່ຍິງ ແລະ ຜູ້ຊາຍ, ເດັກຊາຍ ແລະ ເດັກຍິງ ແລະ ເພື່ອໃຫ້ເຫັນຄວາມໝາຍສຳຄັນເຖິງວິທີທີ່ແມ່ຍິງ ແລະ ຜູ້ຊາຍໄດ້ຮັບຜົນປະໂຫຍດ ມາຈາກໃສ ແລະ ຖືກຈຳກັດໂດຍບັນທັດຖານເຫຼົ່ານັ້ນ ແນວໃດແດ່.

2. ພວກເຮົາ ຕ້ອງຮູ້ເຖິງຜົນສະທ້ອນ ແລະ ຄວາມສ່ຽງ ຂອງການປ່ຽນແປງ. ຖ້າຜູ້ເຂົ້າຮ່ວມ ບໍ່ພ້ອມທີ່ຈະ ປ່ຽນແປງ, ພວກເຮົາຕ້ອງເຂົ້າໃຈ ເຫດຜົນຂອງເຂົາເຈົ້າ ໂດຍບໍ່ຟ້າວໄປຕັດສິນ (ວິພາກວິຈານ) ເຂົາເຈົ້າ. ເມື່ອໃດທີ່ພວກເຂົາພ້ອມທີ່ຈະຍ້າຍອອກຈາກກອບບົດບາດທາງເພດ, ພວກເຂົາຮູ້ວ່າ ພວກເຂົາສາມາດຊອກຫາການສະໜັບສະໜູນໄດ້ຢູ່ໃສ.

3. ອີກທາງເລືອກໜຶ່ງສໍາລັບການອໍານວຍຄວາມສະດວກເຄື່ອງມືນີ້ ແມ່ນບອກໃຫ້ແຕ່ລະກຸ່ມສົນທະນາ ກ່ຽວກັບບັນທັດຖານທາງສັງຄົມ ແລະ ບົດບາດທາງເພດ ທີ່ກ່ຽວຂ້ອງກັບຫົວຂໍ້ໃດໜຶ່ງ. ຕົວຢ່າງ: ບົດບາດ ຫຼື ພຶດຕິກໍາທີ່ກ່ຽວຂ້ອງກັບການມີເພດສໍາພັນ, ການສຶກສາ, ການໃຊ້ຄວາມຮຸນແຮງທາງເພດ, ແລະ ໂພຊະນາການ. ນອກຈາກການປຽບທຽບທັດສະນະຄະຕິຂອງແມ່ຍິງ ແລະ ຜູ້ຊາຍ ສໍາລັບແຕ່ລະຫົວຂໍ້, ຜູ້ອໍານວຍຄວາມສະດວກ ຍັງສາມາດຊ່ວຍໃຫ້ກຸ່ມວິເຄາະວິໄຈເຖິງວິທີທີ່ແມ່ຍິງ ແລະ ຜູ້ຊາຍ, ເດັກຊາຍ ແລະ ເດັກຍິງ ມີທັດສະນະຄະຕິ ແລະ ພຶດຕິກໍາທີ່ແຕກຕ່າງກັນກ່ຽວກັບສິ່ງທີ່ແຕກຕ່າງກັນ.

## ຕົວຢ່າງຂອງກອບບົດບາດທາງເພດ

ບໍ່ມີລາຍຮັບ

ຮັກຮ່ວມເພດດຽວກັນ

ເວົ້າຄ່ອຍຫຼາຍ

ໄປຫາບເອົານໍ້າ

ຮ້ອງໄຫ້ໃນສະຖານທີ່ສະທາລະນະ

ອ່ອນແອ

ບໍ່ມີສ່ວນຮ່ວມໃນກິດຈະກໍາຂອງຊຸມຊົນ

ແຕ່ງດອງກ່ອນໄວອາຍຸ

ມີວຽກເຮັດ

ມີປະສົບການໃນການມີເພດສໍາພັນ



ມີລູກ ຫຼື ມີລູກຜູ້ຊາຍ

ມີຮ່າງກາຍແຂງແຮງ

ຈົບຊັ້ນມັດທະຍົມສຶກສາ

ເຂົ້າຮ່ວມກິດຈະກໍາຂອງຊຸມຊົນ

ຄວບຄຸມເມຍ

ຮູ້ວິທີປຸງແຕ່ງອາຫານເປັນຢ່າງດີ

ເບິ່ງແຍງອ້າຍເອື້ອຍນ້ອງ ແລະ ລູກນ້ອຍ

ຈົບການສຶກສາຂັ້ນພື້ນຖານ



ມີລູກ/ລູກຊາຍ ຢ່າງໜ້ອຍໜຶ່ງຄົນ

ແຕ່ງດດອງກ່ອນໄວອາຍຸ

ມີໜ້າຕາສວຍງາມດີ

ບໍ່ຕໍ່ຕ້ານຄວາມຄິດເຫັນຂອງຜົວ

ມີພົມມະຈັນຈົນກວ່າແຕ່ງດອງ

ແຕ່ງຕົວຄ້າຍຄືຜູ້ຊາຍ

ເວົ້າແຮງຫຼາຍໃນສະຖານທີ່ສາທາລະນະ

ອອກໄປທ່ຽວໂດຍບໍ່ໄດ້ຮັບອະນຸຍາດ

ສູບຢາ ແລະ ດື່ມເຫຼົ້າ

ມັກມີເພດສໍາພັນ ກ່ອນແຕ່ງດອງ

ເປັນໝັນ

ຢ່າຮ້າງ

## ການນໍາໃຊ້ ແລະ ການດັດປັບຂອງເຄື່ອງມື

**ການດັດປັບ ກອບບົດບາດທາງເພດ ໃຫ້ສອດຄ່ອງກັບແຕ່ລະຂັ້ນຕອນ ໃນວົງຈອນຂອງຂະບວນການ SAA**

### ການປັບປຸງຄວາມສາມາດຂອງພະນັກງານ

ເຄື່ອງມືນີ້ສາມາດນໍາໃຊ້ເພື່ອເຂົ້າໃຈ ແລະ ສະທ້ອນໃຫ້ເຫັນເຖິງຄວາມເຂົ້າໃຈຂອງພະນັກງານ ກ່ຽວກັບບົດບາດທາງເພດ ໃນສະຖານທີ່ ທີ່ແຕກຕ່າງກັນ ເຊັ່ນ: ບ້ານ, ຫ້ອງການ, ຊຸມຊົນ, ສັງຄົມ, ການຄຸ້ມຄອງ, ແລະ ອື່ນໆ.

### ການຖອດຖອນບົດຮຽນກັບຊຸມຊົນ

ກອບບົດບາດທາງເພດສາມາດນໍາໃຊ້ເພື່ອອໍານວຍຄວາມສະດວກໃນການສົນທະນາກັບກຸ່ມຊຸມຊົນ ເພື່ອສ້າງຄວາມເຂົ້າໃຈ ແລະ ເພີ່ມຈິດສໍານຶກກ່ຽວກັບຄວາມຄາດຫວັງທີ່ແຕກຕ່າງກັນຂອງຜູ້ຊາຍ ແລະ ແມ່ຍິງ (ເດັກຊາຍ ແລະ ເດັກຍິງ) ແລະ ສະທ້ອນໃຫ້ເຫັນວ່າ ສິ່ງນັ້ນຈະມີຜົນກະທົບແນວໃດແດ່ຕໍ່ຜົນໄດ້ຮັບຂອງການພັດທະນາສະເພາະໃດໜຶ່ງ.

### ແຜນປະຕິບັດ

ໃຫ້ລວມເອົາຄໍາຖາມສົນທະນາຕໍ່ໄປນີ້ເຂົ້າໃນການສົນທະນາ ເພື່ອລະບຸສິ່ງກີດຂວາງທີ່ອາດຈະເກີດຂຶ້ນ ແລະ ຜູ້ສະໜັບສະໜູນຕໍ່ກັບການປ່ຽນແປງ ແລະ ກິດຈະກໍາຕ່າງໆທີ່ອາດຈະເປັນໄປໄດ້ ທີ່ຈະຊ່ວຍປັບປຸງຄວາມຄາດຫວັງທີ່ຈໍາກັດຂອງຜູ້ຊາຍ ແລະ ແມ່ຍິງໃຫ້ດີຂຶ້ນ:

- ແມ່ນໃຜເປັນຄົນສໍາຄັນໃນຊຸມຊົນຂອງເຮົາ ທີ່ສະໜັບສະໜູນ ບັນທັດຖານທີ່ມີຢູ່ແລ້ວ ຫຼື ບັນທັດຖານຕາມປະເພນີ? ແມ່ນໃຜທີ່ອາດຈະສະໜັບສະໜູນການປ່ຽນແປງ ໃນບັນທັດຖານທີ່ມີຢູ່ແລ້ວ ຫຼື ບັນທັດຖານຕາມປະເພນີດັ່ງກ່າວນັ້ນ?
- ພວກເຮົາເປັນສະມາຊິກຂອງຄົນກຸ່ມນີ້ ຫຼື ສາມາດເຂົ້າເຖິງກຸ່ມນີ້ໄດ້ບໍ່? ມີຫຍັງແດ່ທີ່ພວກເຮົາຈະສາມາດເຮັດວຽກຮ່ວມກັບຄົນສໍາຄັນເພື່ອສະໜັບສະໜູນການປ່ຽນແປງໃນທາງທີ່ດີຂຶ້ນ, ແລະ ດ້ວຍວິທີໃດ?
- ເປັນໄປໄດ້ບໍ່ ທີ່ຈະແກ້ໄຂ ແລະ ປ່ຽນແປງ ຄວາມບໍ່ສະເໝີພາບໃນບົດບາດ, ພຶດຕິກໍາ ແລະ ບັນທັດຖານຕ່າງໆ? ຖ້າເປັນໄປໄດ້,ຈະປ່ຽນແປງຫລືແກ້ໄຂແນວໃດ?

## ການດັດປັບ ກອບບົດບາດທາງເພດ ໃຫ້ສອດຄ່ອງກັບຂະແໜງການຕ່າງໆ

### ສິດທິ ແລະ ສຸຂະພາບຈະເລີນພັນ(SRHR)

**ຂັ້ນຕອນ:**

- ໃນເວລາທີ່ ບອກໃຫ້ກຸ່ມສົນທະນາກ່ຽວກັບບົດບາດ, ຄວາມຄາດຫວັງ, ແລະ ພຶດຕິກຳຂອງແມ່ຍິງ ແລະ ຜູ້ຊາຍ, ສ້າງຂອບເຂດຈຸດສຸມໃນການສົນທະນາທີ່ກ່ຽວຂ້ອງກັບ ສິດທິ ແລະ ສຸຂະພາບຈະເລີນພັນ(SRHR). ຍົກຕົວຢ່າງ:
  - ແມ່ນຫຍັງທີ່ໝາຍເຖິງ ການມີວຽກເຮັດງານທຳ, ການປະຕິບັດ ແລະ ຄວາມຮັບຮູ້ຂອງເດັກຍິງ /ເດັກຊາຍໄວໜຸ່ມ ທີ່ກ່ຽວຂ້ອງກັບການແຕ່ງດອງ?
  - ຄວາມຄາດຫວັງຂອງແມ່ຍິງ ແລະ ຜູ້ຊາຍ ທີ່ກ່ຽວຂ້ອງກັບການໃຊ້ຢາຄຸມກຳເນີດແມ່ນຫັຍງ?
  - ຄວາມຄາດຫວັງຂອງແມ່ຍິງ ແລະ ຜູ້ຊາຍ ທີ່ກ່ຽວຂ້ອງກັບເພດສຳພັນແມ່ນຫັຍງ?
  - ບົດບາດ, ການປະຕິບັດ ແລະ ຄວາມເຂົ້າໃຈຂອງຜູ້ຊາຍ ແລະ ແມ່ຍິງ ທີ່ກ່ຽວຂ້ອງກັບການວາງແຜນຄອບຄົວ ແມ່ນຫຍັງ?

**ຄຳຖາມສົນທະນາ:**

- ຄວາມຄາດຫວັງດັ່ງກ່າວຂອງແມ່ຍິງ ແລະ ຜູ້ຊາຍ ມີຜົນກະທົບແນວໃດຕໍ່ຄວາມສາມາດໃນການຊອກຫາ ການຮັກສາສຸຂະພາບ ກ່ຽວກັບສຸຂະພາບຈະເລີນພັນທາງເພດ?
- ພວກເຮົາໄດ້ກ່າວເຖິງຜົນກະທົບທາງລົບຈຳນວນໜຶ່ງຂອງ "ການກ້າວອອກຈາກກອບ". ຜົນກະທົບເຫຼົ່ານັ້ນ ສົ່ງຜົນຕໍ່ ຄວາມສາມາດຂອງແມ່ຍິງ ຫຼື ຜູ້ຊາຍ ໃນການມີສາຍສຳພັນທາງເພດທີ່ດີ ແລະ ທີ່ປອດໄພບໍ່?
- ຈະເຮັດແນວໃດເພື່ອຫຼຸດຜ່ອນຜົນກະທົບທາງລົບດັ່ງກ່າວ ເພື່ອໃຫ້ຜູ້ຄົນສາມາດຕັດສິນໃຈທີ່ຈະເຂົ້າຮັບ ການບໍລິການດ້ານສຸຂະພາບທາງເພດ, ການສືບພັນ, ແລະ ການຮັກສາສຸຂະພາບແມ່?

### ຂອບເຂດຄວາມສາມາດດ້ານເສດຖະກິດຂອງແມ່ຍິງ (WEE)

**ຂັ້ນຕອນ:**

- ໃນເວລາທີ່ ບອກໃຫ້ກຸ່ມສົນທະນາກ່ຽວກັບບົດບາດ, ຄວາມຄາດຫວັງ, ແລະ ພຶດຕິກຳຂອງແມ່ຍິງ ແລະ ຜູ້ຊາຍ, ໃຫ້ສ້າງ ຂອບເຂດຈຸດສຸມໃນການສົນທະນາທີ່ກ່ຽວຂ້ອງກັບ ຂອບເຂດຄວາມສາມາດດ້ານເສດຖະກິດ ຂອງແມ່ຍິງ (WEE). ຍົກຕົວຢ່າງ:
  - ບົດບາດ, ການປະຕິບັດ ແລະ ຄວາມເຂົ້າໃຈຂອງແມ່ຍິງ ຫຼື ຜູ້ຊາຍ ທີ່ກ່ຽວຂ້ອງກັບການເຮັດວຽກນອກບ້ານ/ການຄວບຄຸມລາຍຮັບໃນຄົວເຮືອນ ແມ່ນຫຍັງ?

**ຄຳຖາມສົນທະນາ:**

- ຄວາມຄາດຫວັງດັ່ງກ່າວຂອງແມ່ຍິງ ແລະ ຜູ້ຊາຍ ມີຜົນກະທົບແນວໃດຕໍ່ຄວາມສາມາດໃນການ ເຮັດວຽກນອກເຮືອນ? ຫຼື ສ້າງລາຍຮັບ ແລະ ຈັດການລາຍຮັບ?
- ພວກເຮົາໄດ້ກ່າວເຖິງຜົນກະທົບທາງລົບຈຳນວນໜຶ່ງງຂອງ "ການກ້າວອອກຈາກກອບ". ຜົນທີ່ຕາມມາເຫຼົ່ານັ້ນ ສົ່ງຜົນກະທົບຕໍ່ແມ່ຍິງ ຫຼື ຜູ້ຊາຍໃນການສ້າງລາຍຮັບຂອງເຂົາເຈົ້າ ຫຼື ການຕັດສິນໃຈກ່ຽວກັບວິທີການໃຊ້ເງິນ ໃນຄອບຄົວຂອງເຂົາເຈົ້າບໍ່?

### ການຮັບປະກັນດ້ານສະບຽງອາຫານ ແລະ ໂພຊະນາການ (FNS)

**ຂັ້ນຕອນ:**

- ໃນເວລາທີ່ ບອກໃຫ້ກຸ່ມສົນທະນາກ່ຽວກັບບົດບາດ, ຄວາມຄາດຫວັງ, ແລະ ພຶດຕິກຳຂອງແມ່ຍິງ ແລະ ຜູ້ຊາຍ, ໃຫ້ສ້າງຂອບເຂດຈຸດສຸມໃນການສົນທະນາທີ່ກ່ຽວຂ້ອງກັບ ການຮັບປະກັນດ້ານສະບຽງອາຫານ ແລະ ໂພຊະນາການ (FNS). ຍົກຕົວຢ່າງ:
  - ໜ້າວຽກ, ບົດບາດ ແລະ ຄວາມເຂົ້າໃຈຂອງຊາວກະສິກອນທີ່ເປັນແມ່ຍິງ ແລະ ຜູ້ຊາຍ?
  - ແມ່ນຫຍັງທີ່ໝາຍເຖິງ ບົດບາດ ແລະ ລັກສະນະຂອງແມ່ຍິງ ແລະ ຜູ້ຊາຍ ທີ່ກ່ຽວຂ້ອງກັບອາຫານ ແລະ ໂພຊະນາການ?

**ຄຳຖາມສົນທະນາ:**

- ຄວາມຄາດຫວັງດັ່ງກ່າວຂອງແມ່ຍິງ ແລະ ຜູ້ຊາຍມີຜົນກະທົບແນວໃດຕໍ່ຄວາມສາມາດໃນການຊື້ ຫຼື ການເພີ່ມອາຫານທີ່ມີໂພຊະນາການ?
- ຄວາມຄາດຫວັງດັ່ງກ່າວຂອງແມ່ຍິງ ແລະ ຜູ້ຊາຍມີຜົນກະທົບແນວໃດຕໍ່ການເຂົ້າເຖິງອາຫານທີ່ມີໂພຊະນາການຂອງເດັກ ນ້ອຍ?
- ພວກເຮົາໄດ້ກ່າວເຖິງຜົນກະທົບທາງລົບບາງຢ່າງຂອງ "ການກ້າວອອກຈາກກອບ". ແມ່ນຫຍັງທີ່ເປັນປັດໃຈສຳຄັນ? ຜົນທີ່ຕາມມາດັ່ງກ່າວສົ່ງຜົນກະທົບຕໍ່ຄວາມສາມາດຂອງແມ່ຍິງ ແລະ ຜູ້ຊາຍໃນການສະໜອງອາຫານໃຫ້ພຽງພໍ ສຳລັບຄອບຄົວຂອງເຂົາເຈົ້າບໍ່? ຫຼື ຈັດຫາສຸຂະພາບທີ່ດີ ແລະ ສະໜອງອາຫານທີ່ມີໂພຊະນາການ ໃຫ້ແກ່ຄອບຄົວຂອງເຂົາເຈົ້າ?

## ການນຳໃຊ້ກອບບົດບາດທາງເພດ ຕໍ່ກັບວຽກງານຕ້ານການໃຊ້ຄວາມຮຸນແຮງທາງເພດ (GBV)

ເຄື່ອງມືດັ່ງກ່າວ ສາມາດນຳໃຊ້ເພື່ອສົນທະນາກ່ຽວກັບປະສົບການ ຂອງຜູ້ຊາຍ ແລະ ແມ່ຍິງ ກ່ຽວກັບຄວາມຮຸນແຮງ – ທັງເປັນຜູ້ຖືກເຄາະຮ້າຍ ແລະ ຜູ້ກະທຳຜິດ. ບັນທັດຖານ ແລະ ຫົວຂໍ້ສົນທະນາ ຂ້າງລຸ່ມ ນີ້ ແມ່ນມີຈຸດປະສົງກວ້າງ , ແຕ່ໂດຍທົ່ວໄປແລ້ວ, ໂຄງການທີ່ໃຊ້ເຄື່ອງມືນີ້ ເພື່ອສົນທະນາ ກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ ຄວນມີ ຄວາມເຂົ້າໃຈຢ່າງເລິກເຊິ່ງ ກ່ຽວກັບສະພາບການ , ຮູບແບບ , ແລະ ການແຜ່ລາມຂອງ ຄວາມຮຸນແຮງ ໃນຂອບ ເຂດການຈັດຕັ້ງປະຕິບັດ ເພື່ອປັບປຸງກິດຈະກຳ ແລະ ຄຳຖາມດັ່ງກ່າວ ໃຫ້ເໝາະສົມ.

**ຂັ້ນຕອນ:**

- ໃນເວລາທີ່ ບອກໃຫ້ກຸ່ມ ສົນທະນາກ່ຽວກັບບົດບາດ, ຄວາມຄາດຫວັງ, ແລະ ພຶດຕິກຳຂອງແມ່ຍິງ ແລະ ຜູ້ຊາຍ, ໃຫ້ກຳນົດຂອບເຂດຈຸດສຸມ ໃນການສົນທະນາທີ່ກ່ຽວຂ້ອງກັບ ຄວາມຮຸນແຮງທາງເພດ (GBV) ຍົກຕົວຢ່າງ:

- ຄວາມຄາດຫວັງຂອງແມ່ຍິງ ແລະ ຜູ້ຊາຍ ໃນການປ້ອງກັນຄວາມຮຸນແຮງ ແມ່ນຫຍັງ?
- ແມ່ຍິງ ແລະ ຜູ້ຊາຍ ຄາດວ່າຈະຕອບໂຕ້ແນວໃດ (ເວົ້າອອກມາ, ທ້າທາຍ, ມີປະຕິກິລິຍາໂຕ້ຕອບ) ຕໍ່ຄວາມຮຸນແຮງ ໂດຍອີງຕາມບັນທັດຖານທາງສັງຄົມ ?
- ບົດບາດທີ່ຄາດຫວັງດັ່ງກ່າວຂອງແມ່ຍິງ ແລະ ຜູ້ຊາຍ ຈະນຳໄປສູ່ ຄວາມຮຸນແຮງຫຼາຍຂຶ້ນ ຫຼື ໜ້ອຍລົງ?
- ພວກເຮົາໄດ້ກ່າວເຖິງຜົນກະທົບທາງລົບຈຳນວນໜຶ່ງຂອງ "ການກ້າວອອກຈາກກອບ". ມັນໝາຍເຖິງຫຍັງແດ່? ຜົນທີ່ຕາມມາເຫຼົ່ານີ້ພາໃຫ້ເກີດຄວາມຮຸນແຮງຫຼາຍຂຶ້ນ ຫຼື ໜ້ອຍລົງ?

## 2. ການຈັດໝວດບົດບາດ ຍິງ-ຊາຍ - Pile Sorting

ໝາຍເຫດ: ການໃຊ້ເຄື່ອງມືໃນການປະຕິບັດ, ເບິ່ງວີດີໂອ: *"SAA in Action: Pile Sorting for Challenge"(ໄລຍະເວລາ ປະມານ 3 ນາທີ)* http://www.youtube.com/watch?v=mjFQMxBmpNA

### ຈຸດປະສົງຂອງເຄື່ອງມື

ເພື່ອລະບຸ ແລະ ຖອດຖອນບົດຮຽນທີ່ສໍາຄັນ ກ່ຽວກັບ:

- ບົດບາດທາງເພດ ແລະ ການຕັດສິນໃຈໃນຄົວເຮືອນ ແລະ ສະພາບການອື່ນໆ (ກຸ່ມ, ຄະນະ, ອົງການ)
- ເປັນຫຍັງບົດບາດດັ່ງກ່າວຈຶ່ງມີຢູ່? ບົດບາດດັ່ງກ່າວມີຄວາມເທົ່າທຽມກັນບໍ່, ສາມາດປະຕິບັດໄດ້ ຫຼືບໍ່, ແລະ ສົ່ງເສີມຊີວິດການເປັນຢູ່ຂອງບຸກຄົນ ແລະ ຄອບຄົວ ຫຼືບໍ່
- ມັນເປັນໄປໄດ້ບໍ່ທີ່ພວກເຮົາຈະປະຕິບັດໃນທາງທີ່ແຕກຕ່າງ ແລະ ຖ້າເປັນໄປໄດ້, ພວກເຮົາຈະເຮັດແນວໃດ

### ເວລາປະຕິບັດ

1 ຫາ 1.5 ຊົ່ວໂມງ

### ອຸປະກອນ ແລະ ການກະກຽມອື່ນໆທີ່ຈໍາເປັນ

ບົດເຝິກຫັດ ມີຢູ່ສອງພາກ ຄື – ພາກ A: ໜ້າວຽກ ແລະ ພາກ B: ການຕັດສິນໃຈ.

ສໍາລັບພາກ  A, ໃຫ້ກະກຽມ ບັດເຈ້ຍ 10 ຫາ 15 ບັດ ທີ່ມີລາຍການວຽກ ໃນຄົວເຮືອນທີ່ແຕກຕ່າງກັນ ລະບຸໄວ້ແລ້ວ ຫຼື ມີຮູບພາບໃນບັດດັ່ງກ່າວ, ແລະ ຈາກນັ້ນກະກຽມ 3 ບັດ ທີ່ມີຫົວຂໍ້ວ່າ: "ຜູ້ຊາຍ," "ແມ່ຍິງ," ແລະ "ທັງສອງເພດ". ເບິ່ງຕົວຢ່າງແນະນໍາ "ໜ້າວຽກ" ໃນກອບຂໍ້ຄວາມຂ້າງລຸ່ມນີ້.

ສໍາລັບພາກ B, ກະກຽມ ບັດເຈ້ຍ 10 ຫາ 12 ບັດ ທີ່ມີລາຍການໃນການຕັດສິນໃຈທີ່ແຕກຕ່າງກັນ ຂອງຄອບຄົວ ຫຼື ມີຮູບພາບຢູ່ໃນບັດດັ່ງກ່າວ. ຜູ້ອໍານວຍຄວາມສະດວກຈະຕ້ອງມີບັດ 3 ບັດ ທີ່ມີຫົວຂໍ້ແບບພາກ A, "ຜູ້ຊາຍ", "ແມ່ຍິງ," ແລະ "ທັງສອງເພດ." ເບິ່ງຕົວຢ່າງ "ການຕັດສິນໃຈ" ໃນກອບຂໍ້ຄວາມຂ້າງລຸ່ມນີ້.

**ຄໍາແນະນໍາສໍາລັບໜ້າວຽກ (ພາກ A)**

- ການເບິ່ງແຍງລູກເວລາເຈັບປ່ວຍ
- ການຫາເງິນເພື່ອຊື້ອາຫານ
- ການບໍາລຸງຮັກສາເຮືອນ
- ການປູກພືດຜັກເສດຖະກິດ
- ການປູກພືດຜັກບໍລິໂພກພາຍໃນຄອບຄົວ
- ການເບິ່ງແຍງສັດລ້ຽງ
- ການກະກຽມລູກໄປໂຮງຮຽນ
- ການປຸງແຕ່ງອາຫານ
- ການຂາຍອາຫານຢູ່ຕະຫຼາດ
- ການລົງວິໄນເວລາລູກກະທໍາຜິດ
- ການມີສ່ວນຮ່ວມໃນກິດຈະກໍາຊຸມຊົນ
- ການຫາບນໍ້າ

**ຄໍາແນະນໍາສໍາລັບການຕັດສິນໃຈ (ພາກ B)**

- ການຊື້ຂາຍຂະໜາດໃຫຍ່ສໍາລັບຄົວເຮືອນ
- ການເຂົ້າຮຽນຂອງລູກ
- ການແຕ່ງດອງຂອງລູກ
- ການຊື້ອາຫານການກິນປະຈໍາວັນ
- ຈໍານວນລູກທີ່ຕ້ອງການ
- ການນໍາໃຊ້ການວາງແຜນຄອບຄົວ
- ເມື່ອໃດທີ່ຈະໄປສຸກສາລາ
- ເມື່ອໃດທີ່ຈະມີເພດສໍາພັນ
- ໃຜທີ່ຈະສັງສັນທາງສັງຄົມນໍາ
- ການຂາຍສິນຄ້າທີ່ສໍາຄັນ

## ຂັ້ນຕອນ

1. ແນະນຳກ່ຽວກັບກິດຈະກຳ. "ໃນທຸກໆຄົວເຮືອນ, ກຸ່ມຄົນ ຫຼື ຄະນະ, ມີຫຼາຍໜ້າວຽກທີ່ຕ້ອງໄດ້ເຮັດໃຫ້ສຳເລັດ ແລະ ມີຫລາຍບັນຫາທີ່ຕ້ອງໄດ້ຕັດສິນໃຈໃນແຕ່ລະມື້. ພວກເຮົາ ຈະຄົ້ນຄວ້ານຳກັນເບິ່ງວ່າການຕັດສິນໃຈບາງຢ່າງເຫຼົ່ານັ້ນ ແມ່ນຫຍັງ; ແມ່ນໃຜເປັນຜູ້ທີ່ຕັດສິນໃຈ ແລະ ຍ້ອນເຫດໃດ; ວິທີການຕັດສິນໃຈ; ແລະ ສິ່ງທີ່ເປັນວຽກງານປົກກະຕິຂອງແມ່ຍິງ ແລະ ຜູ້ຊາຍ."
2. ສະແດງໃຫ້ຜູ້ເຂົ້າຮ່ວມເຫັນວ່າ ມີ 3 ໝວດ (ການຈັດໝວດບົດບາດຍິງ-ຊາຍ) ທີ່ຈະນຳໃຊ້ຄື: ໝວດທີ 1 ແມ່ນສຳລັບຜູ້ຊາຍ, ໝວດທີ 2 ແມ່ນສຳລັບແມ່ຍິງ, ແລະ ໝວດທີ 3 ແມ່ນສຳລັບທັງສອງເພດ.
3. ໃຫ້ຜູ້ເຂົ້າຮ່ວມເບິ່ງ ບັດໜ້າວຽກທີ່ຕ້ອງເຮັດ (ພາກ A) ແລະ ອະທິບາຍຊີ້ແຈ້ງໜັງສື ຫຼື ຮູບພາບ (ສຳລັບກຸ່ມທີ່ບໍ່ຮູ້ໜັງສື), ເພື່ອເຮັດໃຫ້ແນ່ໃຈວ່າທຸກຄົນມີຄວາມເຂົ້າໃຈຢ່າງກະຈ່າງແຈ້ງ ໃນຄວາມໝາຍຂອງແຕ່ລະບັດໜ້າວຽກ.
4. ບອກໃຫ້ຜູ້ເຂົ້າຮ່ວມຈັດປະເພດບັດ ຂອງພາກ A: ບັດໜ້າວຽກ ແລະ ວາງບັດໄວ້ແຕ່ລະໝວດ ອີງຕາມໜ້າວຽກນັ້ນວ່າໂດຍທົ່ວໄປ ປົກກະຕິແລ້ວແມ່ນໃຜເປັນຄົນເຮັດ, ໝວດທີ 1 (ຜູ້ຊາຍ), ໝວດທີ 2 (ແມ່ຍິງ), ຫຼື ໝວດທີ 3 (ທັງສອງເພດ)

   **ໝາຍເຫດ:** ສິ່ງສຳຄັນ ແມ່ນຕ້ອງຊຸກຍູ້ໃຫ້ຜູ້ເຂົ້າຮ່ວມ ລະບຸວ່າ ຕາມປົກກະຕິແລ້ວ ແມ່ນໃຜເປັນຜູ້ ເຮັດໜ້າວຽກດັ່ງກ່າວໃນຄອບຄົວ ຫຼື ສ່ວນໃຫຍ່ແລ້ວຜູ້ໃດເຮັດໜ້າວຽກນັ້ນເລື້ອຍໆ ບໍ່ແມ່ນລະບຸວ່າ ຜູ້ໃດສາມາດ ເຮັດໜ້າວຽກນັ້ນໄດ້. ນີ້ຈະຊ່ວຍໃຫ້ແນ່ໃຈວ່າວຽກທັງໝົດບໍ່ໄດ້ຖືກວາງໄວ້ໃນ ໝວດທີ 3: "ທັງສອງເພດ"
5. ຖາມຜູ້ເຂົ້າຮ່ວມ ຖ້າຫາກວ່າມີໜ້າວຽກໃດທີ່ຍັງບໍ່ຄົບ. ຖ້າຍັງມີ, ໃຫ້ແຕ້ມບັດເພີ່ມເຕີມ ແລະ ບອກໃຫ້ຜູ້ເຂົ້າຮ່ວມວາງບັດໄວ້ໃນໝວດທີ່ຖືກຕ້ອງ.
6. ນຳໃຊ້ 3 ຫາ 6 ຄຳຖາມຕໍ່ໄປນີ້ ເພື່ອອຳນວຍຄວາມສະດວກໃນການສົນທະນາ ກັບບັນດາຜູ້ເຂົ້າຮ່ວມ:
   - ແມ່ນໃຜສຳເລັດໜ້າວຽກຫຼາຍກວ່າໝູ່? ເປັນຫຍັງ?
   - ຖ້າກຸ່ມໜຶ່ງມີໜ້າວຽກຫຼາຍກວ່າ, ແມ່ນຫຍັງຈະເປັນຜົນຕາມມາ ຫຼື ຜົນກະທົບ ຂອງການແບ່ງໜ້າວຽກທີ່ບໍ່ເທົ່າທຽມກັນ?
   - ບອກໃຫ້ຜູ້ເຂົ້າຮ່ວມເລືອກເອົາ 3 ຫາ 4 ໜ້າວຽກທີ່ສຳຄັນທີ່ສຸດ ແລ້ວຖາມວ່າ, "ໃຜເປັນຜູ້ເຮັດ "ວຽກທີ່ສຳຄັນ" ຫຼາຍກວ່າ, ແລະ ເປັນຫຍັງ?"
   - ໜ້າວຽກໃດທີ່ແມ່ຍິງບໍ່ໄດ້ເຮັດ? ໜ້າວຽກໃດທີ່ຜູ້ຊາຍບໍ່ໄດ້ເຮັດ? ເປັນຫຍັງ?
   - ມີໜ້າວຽກ ແລະ ໜ້າທີ່ຮັບຜິດຊອບໃດແດ່ ທີ່ທ່ານຕ້ອງການແບ່ງ ໃຫ້ສະມາຊິກຄົນອື່ນໆໃນຄອບຄົວຮັບຜິດຊອບບໍ່? ເປັນຫຍັງ?
7. ບອກໃຫ້ ອາສາສະມັກ ເລືອກເອົາໜ້າວຽກໃນໝວດທີ 1 ແລະ ໝວດທີ 2 ແລະ ໃຫ້ຜູ້ເຂົ້າຮ່ວມສົນທະນານຳກັນວ່າ ຈະສາມາດວາງໄວ້ ໃນໝວດທີ 3 ຫຼືບໍ່. ສາມາດນຳໃຊ້ຄຳຖາມ ດັ່ງຕໍ່ໄປນີ້ ເຂົ້າໃນການສົນທະນາ:
   - ຜູ້ຊາຍເຄີຍເຮັດວຽກຂອງແມ່ຍິງ ແລະ ແມ່ຍິງເຄີຍເຮັດວຽກຂອງຜູ້ຊາຍບໍ່? ເປັນຫຍັງ?
   - ມີຫຍັງເກີດຂຶ້ນ ຖ້າຜູ້ຊາຍໄດ້ເຮັດວຽກຂອງແມ່ຍິງ ແລະ ແມ່ຍິງໄດ້ເຮັດວຽກຂອງຜູ້ຊາຍ? ເປັນຫຍັງ?
   - ມີຄວາມຫຍຸ້ງຍາກຫຍັງແດ່ ໃນການຍ້າຍໜ້າວຽກ ໄປໄວ້ໃນໝວດທີ 3?
   - ຜູ້ຊາຍ ແລະ ແມ່ຍິງ ຈະເຕັມໃຈເຮັດວຽກທີ່ຖືກຍ້າຍໄປໄວ້ໃນໝວດທີ 3 ບໍ່?
   - ຖ້າສາມາດເຮັດວຽກທີ່ຖືກຍ້າຍໄປໝວດທີ່ 3ໄດ້, ເຫດຜົນທີ່ເຮັດບໍ່ໄດ້ມາຈົນເຖິງປັດຈຸບັນ ແມ່ນຍ້ອນຫຍັງ? ຖ້າບໍ່ໄດ້, ເຫດຜົນແມ່ນຫຍັງ?
   - ມີຜົນປະໂຫຍດຫຍັງແດ່ ສຳລັບຜູ້ຊາຍ ແລະ ແມ່ຍິງທີ່ຈະສຳເລັດໜ້າວຽກດັ່ງກ່າວ?
8. ບອກໃຫ້ຜູ້ເຂົ້າຮ່ວມສົນທະນາກ່ຽວກັບບັດໃນພາກ B: ບັດການຕັດສິນໃຈ ແລະ ປະຕິບັດຕາມຂັ້ນຕອນດຽວກັນໃນພາກ A:ບັດໜ້າວຽກ -/ ຕາມຂັ້ນຕອນທີ່ 1 ຫາ 7 ຕາມຂັ້ນຕອນຂ້າງເທິງ..

**ໝາຍເຫດ:** ມັນເປັນສິ່ງສຳຄັນ ທີ່ຈະຊຸກຍູ້ຜູ້ເຂົ້າຮ່ວມ ໃຫ້ລະບຸວ່າ ແມ່ນໃຜເປັນຜູ້ຕັດສິນໃຈຊີ້ຂາດ ຖ້າຫາກວ່າມີຄວາມບໍ່ເຫັນດີນຳກັນ ເພື່ອໃຫ້ແນ່ໃຈວ່າບັດການຕັດສິນໃຈທັງໝົດ ຈະບໍ່ຖືກວາງໄວ້ໃນໝວດ 3 "ທັງສອງເພດ".

**9.** ບອກໃຫ້ຜູ້ເຂົ້າຮ່ວມສົນທະນາກ່ຽວກັບການຕັດສິນໃຈ "ຮ່ວມກັນ" ທີ່ເຮັດໃຫ້ເກີດການໂຕ້ຖຽງ, ແລະ ການຕັດສິນໃຈ "ຮ່ວມກັນ" ທີ່ກໍ່ໃຫ້ເກີດການຕົກລົງເຫັນດີພ້ອມພຽງກັນ.

- ການຕັດສິນໃຈຮ່ວມກັນດັ່ງກ່າວ ເກີດຂຶ້ນແນວໃດ? ໃຜເປັນຜູ້ຕັດສິນໃຈຊີ້ຂາດ?
- ປົກກະຕິແລ້ວ ທັງສອງຝ່າຍໄດ້ອອກຄຳຄິດເຫັນເທົ່າທຽມກັນ ໃນຂະບວນການຕັດສິນໃຈຕ່າງໆຫລືບໍ່?

**10.** ຖ້າຍັງມີເວລາເຫຼືອ, ໃຫ້ຖາມຜູ້ເຂົ້າຮ່ວມ 2 ຫາ 3ຄຳຖາມການສົນທະນາ ດັ່ງຕໍ່ໄປນີ້:

- ກິດຈະກຳ ດັ່ງກ່າວນີ້ ສະທ້ອນເຖິງພຶດຕິກຳສ່ວນຕົວໃນຄອບຄົວຂອງຕົນເອງບໍ່? ຖ້າບໍ່, ເປັນ ຫຍັງເຮົາຈຶ່ງຄາດຫວັງສິ່ງທີ່ແຕກຕ່າງພາຍໃນເຮືອນຂອງເຮົາ ເມື່ອສົມທຽບກັບ ສິ່ງທີ່ເຮົາເຫັນຢູ່ໃນຊຸມຊົນຂອງເຮົາ?
- ພຶດຕິກຳສ່ວນບຸກຄົນຂອງເຮົາແຕກຕ່າງຈາກສິ່ງທີ່ເຮົາເຫັນຕາມປົກກະຕິໃນຊຸມຊົນ ຂອງເຮົາບໍ່?
- ຮູ້ສຶກແນວໃດທີ່ເບິ່ງລາຍການໜ້າວຽກ ແລະ ການຕັດສິນໃຈດັ່ງກ່າວ ໃນຖານະທີ່ເປັນຜູ້ຊາຍ/ແມ່ຍິງ? ຍຸດຕິທຳບໍ່? ເປັນຫຍັງຈຶ່ງວ່າຍຸຕິທຳ ຫຼື ເປັນຫຍັງຈຶ່ງບໍ່ຍູຕິທຳ?
- ທ່ານປາຖະໜາໃຫ້ ການແບ່ງໜ້າວຽກ ແລະ ການມີສ່ວນຮ່ວມໃນການຕັດສິນໃຈ ແຕກຕ່າງຈາກນີ້ບໍ່? ເປັນຫຍັງ?

11. ໃນຂະນະທີ່ແຈ້ງ ໃຫ້ຜູ້ເຂົ້າຮ່ວມຮູ້ວ່າຂໍ້ມູນ, ເລື່ອງສ່ວນຕົວ ແລະ ປະສົບການທີ່ໄດ້ແບ່ງປັນກັນ ໃນລະຫວ່າງການສົນທະນາ ຄວນຮັກສາໄວ້ ຢູ່ໃນກຸ່ມ, ໃຫ້ຊຸກຍູ້ ໃຫ້ຜູ້ເຂົ້າຮ່ວມ ແບ່ງປັນບັນຫາຕ່າງໆທີ່ໄດ້ຖືກສົນທະນາ ແລະ ສິ່ງທີ່ເຂົາເຈົ້າ ໄດ້ຮຽນຮູ້ຈາກ ຄອບຄົວ ແລະ ໝູ່ເພື່ອນ ຜູ້ທີ່ບໍ່ໄດ້ເຂົ້າຮ່ວມການຝຶກອົບຮົມຄັ້ງນີ້ ຖ້າຫາກເຂົາເຈົ້າ ຮູ້ສຶກສະບາຍໃຈທີ່ຈະແບ່ງປັນ. ສຸດທ້າຍ, ບອກໃຫ້ຜູ້ເຂົ້າຮ່ວມຄິດເຖິງວິທີແກ້ໄຂກັບສິ່ງທ້າທາຍຕ່າງໆ ທີ່ໄດ້ສົນທະນາກັນໃນລະຫວ່າງ ການສົນທະນາກຸ່ມ ເຊິ່ງມັນຈະຊ່ວຍໃນການສືບຕໍ່ການສົນທະນາໃນພາກຕໍ່ໄປ.

## ຕົວຢ່າງ ການຈັດໝວດບົດບາດຍິງ-ຊາຍ (Pile Sorting)

|  |  |  |
|---|---|---|
| ຕັດຟືນ~~ຄັ່ງໄຟ~~ | ລ່າສັດ | ເບິ່ງແຍງ<u>ການ</u> ສັດລ້ຽງ |
| ຫາບນ້ຳ | ຄິດແບບມີຍຸດທະສາດ | ບູລະນະສ້ອມແປງເຮືອນ |
| ປຸງແຕ່ງອາຫານ | ຮັກສາຄວາມປອດໄພຂອງ ຄອບຄົວ | ປູກພືດບໍລິໂພກ |
| ເອົາລູກໄປໂຮງ ຮຽນ | ເຮັດວຽກນອກ ເຮືອນ (ວຽກຫ້ອງການ) | ຫາລາຍໄດ້ |
| ເບິ່ງແຍງລູກເວລາ ເຈັບປ່ວຍ | ເປັນຜູ້ຕັດສິນໃຈ | ລ້ຽງວີໄນລູກ |

## ຄໍາແນະນໍາສໍາລັບຜູ້ອໍານວຍຄວາມສະດວກ

1. ຂັ້ນຕອນທໍາອິດ ຂອງກິດຈະກໍາ ແມ່ນເພື່ອຊ່ວຍໃຫ້ຜູ້ເຂົ້າຮ່ວມໄດ້ເຂົ້າໃຈເຖິງ ການແບ່ງໜ້າວຽກຕາມບົດບາດທາງເພດ ແລະ ການຕັດສິນໃຈ. ສ່ວນທີ່ສໍາຄັນຂອງເຄື່ອງມືນີ້ ແມ່ນການຈັດລຽງບັດໃຫ້ເປັນໝວດໝູ່: ຜູ້ອໍານວຍຄວາມສະດວກ ຄວນຖາມຄໍາຖາມເຈາະຈົ້ມ ເພື່ອຊ່ວຍໃຫ້ຜູ້ເຂົ້າຮ່ວມເຂົ້າໃຈເຖິງ ບັນທັດຖານ ແລະ ຄຸນຄ່າ ທີ່ຕິດພັນກັບໜ້າວຽກ ແລະ ການຕັດສິນໃຈ ທີ່ຖືກມອບໝາຍ ໃຫ້ຜູ້ຊາຍ ແລະ ແມ່ຍິງ. ຍົກຕົວຢ່າງ, ຖ້າຜູ້ເຂົ້າຮ່ວມ ໃຫ້ຂໍ້ສັງເກດວ່າ "ແມ່ຍິງເຮັດວຽກເຮືອນຫຼາຍກວ່າຜູ້ຊາຍ ເພາະວ່າສິ່ງດັ່ງກ່າວ ແມ່ນວຽກງານຂອງແມ່ຍິງ", ຜູ້ອໍານວຍຄວາມສະດວກ ສາມາດຖາມວ່າ "ເປັນຫຍັງວຽກງານດັ່ງກ່າວ ຈຶ່ງເປັນວຽກສໍາລັບແມ່ຍິງ ເທົ່ານັ້ນ?" ແລ້ວອາດຈະຖາມຕໍ່ກ່ຽວກັບ ຜົນທີ່ຕາມມາຂອງບັນທັດຖານນີ້. ສິ່ງດັ່ງກ່າວໄດ້ບົ່ງບອກໃຫ້ເຫັນວ່າ ເຄື່ອງມືການວິເຄາະທາງສັງຄົມເພື່ອການປ່ຽນແປງ (SAA) ມີຄວາມແຕກຕ່າງຈາກເຄື່ອງມືອື່ນໆ, ເນື່ອງຈາກມັນອໍານວຍຄວາມສະດວກ ໃຫ້ແກ່ການສ້າງແນວຄວາມຄິດໃນການປະເມີນວ່າ ເປັນຫຍັງ ສິ່ງຕ່າງໆຈຶ່ງເປັນແບບທີ່ເປັນຢູ່
2. ຖ້າເຮົາຢາກຊຸກຍູ້ໃຫ້ ຜູ້ເຂົ້າຮ່ວມ ປ່ຽນແປງ ການແບ່ງໜ້າວຽກ ແລະ ການຕັດສິນໃຈບໍ່ສະເໝີພາບ, ພວກເຮົາຕ້ອງໄດ້ປະເຊີນກັບ ບັນທັດຖານ ແລະ ຄຸນຄ່າ ຂອງບົດບາດທາງເພດ ທີ່ຕິດພັນກັນ. ໝາຍຄວາມ ວ່າ ກິດຈະກໍາໃນລະດັບຊຸມຊົນ ທີ່ສ້າງການປ່ຽນແປງທາງດ້ານໂຄງສ້າງ ຄວນຈະເກີດຂຶ້ນໃນເວລາດຽວກັນ ເພື່ອສົ່ງເສີມການປ່ຽນແປງຂອງບຸກຄົນ ແລະ ຄອບຄົວ.

## ການນໍາໃຊ້ ແລະ ການດັດປັບຂອງເຄື່ອງມື

### ການດັດປັບການຈັດໝວດບົດບາດຍິງຊາຍ ທີ່ມີຫຼາຍຂັ້ນຕອນໃນຂະບວນການຂອງເຄື່ອງມື SAA

#### ການປັບປຸງຄວາມສາມາດຂອງພະນັກງານ

ເຄື່ອງມືດັ່ງກ່າວ ຊ່ວຍໃຫ້ພະນັກງານສາມາດລະບຸເຖິງການແບ່ງໜ້າວຽກ ແລະ ການຕັດສິນໃຈເກີດຂຶ້ນໃນຄອບຄົວ ແລະ ຊຸມຊົນຂອງເຂົາເຈົ້າເອງ, ແລະ ສາມາດສະແດງໃຫ້ເຫັນເຖິງ ວິທີທີ່ເຂົາເຈົ້າ ອາດຈະປະຕິບັດຕາມບົດບາດທາງເພດ ແບບດຽວກັນກັບຊຸມຊົນທີ່ເຂົາເຈົ້າເຮັດວຽກຢູ່. ນອກຈາກນັ້ນ, ເຄື່ອງ ມືດັ່ງກ່າວຍັງຊ່ວຍໃຫ້ພະນັກງານຄິດທົບທວນຕົນເອງ ກ່ຽວກັບບັດໃຈສໍາຄັນ ຂອງການການແບ່ງໜ້າວຽກ ແລະ ການຕັດສິນໃຈ ທີ່ບໍ່ສະເໝີພາບກັນ ໃນການດໍາລົງຊີວິດຂອງຕົນເອງ ແລະ ໃນຂອບເຂດການຈັດຕັ້ງປະຕິບັດໂຄງການ.

#### ການຖອດຖອນບົດຮຽນກັບຊຸມຊົນ

ການຈັດໝວດບົດບາດຍິງຊາຍ ສາມາດນໍາໃຊ້ໃນລະຫວ່າງການວິເຄາະດ້ານບົດບາດທາງເພດ ແລະ ອໍານາດການຕັດສິນໃຈ ເພື່ອສ້າງຄວາມເຂົ້າໃຈກ່ຽວກັບການປະຕິບັດ ແລະ ຄວາມເຊື່ອຕໍ່ກັບ ການແບ່ງໜ້າວຽກ ຕາມບົດບາດທາງເພດ ແລະ ການຕັດສິນໃຈ ທີ່ຈະໄດ້ຮັບການຄົ້ນຫາ ໃນການຈັດຕັ້ງປະຕິບັດໂຄງການ.

#### ແຜນປະຕິບັດງານ

ເຄື່ອງມືດັ່ງກ່າວສາມາດນໍາໃຊ້ເພື່ອລະບຸສິ່ງທີ່ຈໍາເປັນທີ່ຕ້ອງການປ່ຽນແປງ, ເປັນຫຍັງຈຶ່ງຈໍາເປັນຕ້ອງປ່ຽນແປງ, ແລະ ຈະປ່ຽນແປງດ້ວຍວິທີໃດ.
ໃຫ້ລວມເອົາຄໍາຖາມສົນທະນາຕໍ່ໄປນີ້ ເຂົ້າໃນຕອນທ້າຍຂອງການສົນທະນາ:

- ເຮົາສັງເກດເຫັນຫຍັງແດ່ ຈາກກິດຈະກໍາການຈັດໝວດ? ທ່ານປາດຖະໜາຢາກເຫັນ ສິ່ງໃດປ່ຽນແປງ? ເປັນຫຍັງ?
- ສິ່ງໃດທີ່ສາມາດປ່ຽນ ຫຼື ບໍ່ສາມາດປ່ຽນແປງໄດ້ ແລະ ຍ້ອນສາຍເຫດໃດ?
- ຈະຕ້ອງເຮັດແນວໃດ ເພື່ອປ່ຽນແປງໜ້າວຽກ ແລະ ການຕັດສິນໃຈ ໃນເຮືອນຂອງທ່ານເອງ?
- ທ່ານຈະຕ້ອງການສິ່ງສະໜັບສະໜູນຈາກພາຍນອກເຮືອນຂອງທ່ານ ເພື່ອເຮັດໃຫ້ເກີດມີການປ່ຽນແປງບໍ່? ການສະໜັບສະໜູນ ແບບໃດ?
- ແລະ ແມ່ນໃຜຢູ່ໃນຊຸມຊົນທີ່ສາມາດໃຫ້ການສະໜັບສະໜູນ? ແມ່ນໃຜຈະເປັນອຸປະສັກ?

#### ການຕິດຕາມ ແລະ ການປະເມີນຜົນ

ເຄື່ອງມືດັ່ງກ່າວ ສາມາດນໍາໃຊ້ເຂົ້າໃນຈຸດທີ່ແຕກຕ່າງກັນ ໃນການຈັດຕັ້ງປະຕິບັດໂຄງການ ເພື່ອປຽບທຽບບ່ອນທີ່ ບັດຖືກວາງໄວ້ໃນຈຸດທີ່ແຕກຕ່າງກັນ ພາຍໃນເວລາທີ່ກໍານົດ. ຕົວຢ່າງ: ໃນລະຫວ່າງ ການທົບທວນໄລຍະກາງ ຫຼື ການປະເມີນໄລຍະທ້າຍໂຄງການ, ບອກໃຫ້ຜູ້ເຂົ້າຮ່ວມເຮັດກິດຈະກໍາດັ່ງກ່າວ ແລ້ວໃຫ້ສະຫຼຸບຄືນວ່າມີ ການປ່ຽນແປງໃດໆຈາກການແບ່ງວຽກ ຫຼື ຄວາມຮັບຜິດຊອບໃນການຕັດສິນໃຈ ລະຫວ່າງຍິງ-ຊາຍ ນັບແຕ່ເລີ່ມຕົ້ນປະຕິບັດໂຄງການ.
ໃຫ້ຖາມວ່າ "ເປັນຫຍັງ?" ເພື່ອສ້າງຄວາມເຂົ້າໃຈວ່າ ການປ່ຽນແປງດັ່ງກ່າວ ສາມາດສົ່ງເສີມໃນການພັດທະນາໂຄງການໄດ້ຫລືບໍ່? ການຖາມຄໍາຖາມວ່າ "ເປັນຫຍັງ?" ສ້າງໂອກາດທີ່ຈະຮຽນຮູ້ ກ່ຽວກັບສິ່ງທີ່ເປັນການສົ່ງເສີມໃຫ້ມີການປ່ຽນແປງ ຫຼື ສິ່ງກີດຂວາງຂອງການປ່ຽນແປງທີ່ມີຢູ່, ຊີ້ໃຫ້ເຫັນເຖິງການປັບປຸງທີ່ຈໍາເປັນໃນກິດຈະກໍາ SAA. ໃຫ້ສັງເກດວ່າ ກິດຈະກໍາດັ່ງກ່າວ ແລະ ຜົນຂອງການຄົ້ນຄວ້າ ເມື່ອໃຊ້ໃນເຄື່ອງມືການຕິດຕາມ, ການປະເມີນ ແລະ ການຮຽນຮູ້ (MEL) ສາມາດປະກອບເປັນຂໍ້ມູນໂດຍກົງໃຫ້ກັບ ຕໍ່ກັບ “ຕົວຊີ້ວັດ 1 ການປ່ຽນແປງລະດັບສາກົນ ກ່ຽວກັບກະບອກສຽງຂອງແມ່ຍິງ ແລະ ຄວາມສະເໝີພາບທາງດ້ານບົດບາດທາງເພດ” (ເບິ່ງພາກທີ 4 ສໍາລັບການແນະນໍາເພີ່ມເຕີມ).

## ການດັດປັບການຈັດໝວດບົດບາດຍິງຊາຍ ຂອງຫຼາຍຂະແໜງການທີ່ແຕກຕ່າງກັນ

ນອກຈາກ ຄວາມຮັບຜິດຊອບລະດັບຄອບຄົວທີ່ໄດ້ລະບຸໄວ້ໃນເຄື່ອງມືຫລັກຂ້າງເທິງແລ້ວ, ສາມາດເພີ່ມເຕີມໜ້າວຽກສະເພາະຂອງຂະແໜງການ ແລະ ບັດຕັດສິນໃຈຕ່າງໆລຸ່ມນີ້ ໄດ້.

### ສິດທິ ແລະ ສຸຂະພາບຈະເລີນພັນ(SRHR)

**SRHR-ໜ້າວຽກສະເພາະ:**

- ໄປຄລີນິກເພື່ອປຶກສາການວາງແຜນຄອບຄົວ
- ເຂົ້າຮ່ວມການຝາກທ້ອງກ່ອນເກີດລູກ ແລະ ຫຼັງເກີດລູກ
- ການລິເລີ່ມມີເພດສຳພັນ
- ການກະກຽມການເກີດລູກ
- ການຊອກຫາຂໍ້ມູນກ່ຽວກັບການຄຸມກຳເນີດ ແລະ ການບໍລິການດ້ານສຸຂະພາບຈະເລີນພັນ
- ການໃຊ້ຢາຄຸມກຳເນີດ

**SRHR-ການຕັດສິນໃຈສະເພາະ:**

- ການແຕ່ງດອງຂອງລູກສາວ
- ເມື່ອໃດຈະຖືພາ
- ຈຳນວນລູກທີ່ຢາກຈະມີ
- ໄລຍະຫ່າງຂອງການເກີດລູກ
- ຈະມີເພດສຳພັນຫຼືບໍ່
- ການໃຊ້ຢາຄຸມກຳເນີດ
- ຈະໄດ້ຮັບການເຮັດໝັນ ຫລືບໍ່ (sterilized), ປະເພດຂອງການເຮັດໝັນ (ການເຮັດໝັນຊາຍ vasectomy ຫຼື ການເຮັດໝັນຍິງ tubectomy)
- ຈະຮັບການປຶກສາຫາລືກັບທ່ານໝໍຄົນໃດ (ໝໍຢາພື້ນເມືອງແບບດັ້ງເດີມ ຫຼື ທ່ານໝໍວິຊາການ),
- ຈະຮັບການປິ່ນປົວທາງການແພດຫຼືບໍ່
- ສະຖານທີ່ຈະຊອກຫາການປິ່ນປົວທາງການແພດ
- ໃຊ້ຈ່າຍສຳລັບການບໍລິການດ້ານສຸຂະພາບຈະເລີນພັນເທົ່າໃດ?
- ການດັດແປງອະໄວຍະເພດຍິງ

### ການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ (FNS)

**FNS-ວຽກສະເພາະ:**

- ການລ້ຽງລູກດ້ວຍນົມແມ່ຢ່າງດຽວ
- ການກະກຽມ/ການປຸງແຕ່ງອາຫານ
- ການລ້ຽງລູກ
- ການຫາບນ້ຳ
- ພື້ນທີ່ສຳລັບວ່ານແນວພັນພືດ
- ການເກັບກ່ຽວຜົນຜະລິດ
- ການອະນາໄມຫຍ້າ
- ການຂົນສົ່ງຜົນຜະລິດ
- ການເຂົ້າຮ່ວມກອງປະຊຸມ
- ການຂາຍເຄື່ອງໃນຕະຫຼາດ
- ການຊອກຫາຂໍ້ມູນຕະຫຼາດ
- ການຊື້ສິນຄ້າອາຫານຈາກຕະຫຼາດ

**FNS-ການຕັດສິນໃຈສະເພາະ:**

- ເມື່ອໃດທີ່ຈະປູກ
- ເກັບກ່ຽວຜົນຜະລິດເມື່ອໃດ
- ຂາຍ ຫຼື ຊື້ສັດລ້ຽງຂະໜາດນ້ອຍ ແລະ/ຫຼື ຊັບສິນ
- ຂາຍ ຫຼື ຊື້ສັດລ້ຽງຂະໜາດໃຫຍ່ ແລະ/ຫຼື ຊັບສິນ
- ຈະລົງທຶນເທົ່າໃດສຳລັບ ວັດສະດຸ
- ສັກຢາວັກຊີນສັດຂະໜາດນ້ອຍ ຫຼື ໃຫຍ່
- ເມື່ອໃດ ແລະ ບ່ອນໃດທີ່ຈະໃຊ້ບໍລິການດ້ານສຸຂະພາບ
- ປະເພດອາຫານທີ່ຈະປຸງແຕ່ງ ແລະ ກິນໃນເຮືອນ
- ເມື່ອໃດທີ່ຈະເລີ່ມຕົ້ນການໃຫ້ອາຫານເສີມສຳລັບລູກ
- ການແຈກຢາຍອາຫານໃນເຮືອນ (ແມ່ນໃຜກິນຫຍັງ ແລະ ກິນເມື່ອໃດ)

### ຂອບເຂດຄວາມສາມາດດ້ານເສດຖະກິດຂອງແມ່ຍິງ (WEE)

**WEE-ວຽກສະເພາະ:**

- ທຸກປະເພດຂອງການເຮັດວຽກເຮືອນທີ່ບໍ່ໄດ້ຮັບຄ່າຈ້າງ
- ທຸກປະເພດຂອງວຽກງານດູແລທີ່ບໍ່ໄດ້ຮັບຄ່າຈ້າງ
- ວຽກງານຜະລິດ – ການຜະລິດກະສິກຳ/ການລ້ຽງສັດ
- ຄ່າແຮງງານພາຍໃນ/ນອກບ້ານ
- ໄປຕະຫຼາດ (ຊື້-ຂາຍ)
- ການຍົກຍ້າຍຖິ່ນຖານເພື່ອເຮັດວຽກທີ່ໄດ້ຮັບຄ່າຈ້າງ
- ໄປທະນາຄານ

**WEE-ການຕັດສິນໃຈສະເພາະ:**

- ການຕັດສິນໃຈໃນການລ້ຽງຊີບ (ເຊັ່ນ: ສິ່ງໃດ ແລະ ເວລາໃດທີ່ຈະປູກ, ເມື່ອໃດ ຈະຍົກຍ້າຍໄປເຮັດວຽກທີ່ໄດ້ຮັບຄ່າຈ້າງ)
- ເມື່ອໃດຈະຊື້-ຂາຍຊັບສິນທີ່ສຳຄັນ (ເຊັ່ນ: ລົດຈັກ, ສັດລ້ຽງ, ເຮືອນ)
- ການເອົາ ແລະ ນຳໃຊ້ເງິນກູ້/ການລົງທຶນ
- ເປີດບັນຊີທະນາຄານ ແລະ ການເຮັດທຸລະກຳທະນາຄານ
- ການເປັນເຈົ້າຂອງຊັບສິນ
- ລາຍຈ່າຍປະຈຳວັນ
- ລາຍຈ່າຍຂະໜາດໃຫຍ່ທີ່ກ່ຽວຂ້ອງກັບຄອບຄົວ ເຊັ່ນ: ສະພາວະສຸກເສີນ, ການຕາຍ, ການແຕ່ງດອງ

# 3. ການກ້າວຍ່າງຕາມຄວາມຄິດເຫັນຂອງຕົນ - Vote with your Feet[1]

## ຈຸດປະສົງຂອງເຄື່ອງມື

ເພື່ອຄົ້ນຫາຄວາມຄິດເຫັນທີ່ຫຼາກຫຼາຍກ່ຽວກັບຄວາມເຊື່ອທີ່ຍັງນັບຖືກັນທົ່ວໄປ, ເປີດເຜີຍກ່ຽວກັບຄວາມຄິດເຫັນທີ່ແຕກຕ່າງກັນຂອງຜູ້ເຂົ້າຮ່ວມ, ແລະ ເປີດໂອກາດໃຫ້ເຂົາເຈົ້າໄດ້ ທົບທວນຄືນເຖິງທັດສະນະຄະຕິຂອງຕົນຕໍ່ກັບຄວາມເຊື່ອດັ່ງກ່າວ ແລະ ທໍາຄວາມເຂົ້າໃຈ/ຮຽນຮູ້ກ່ຽວກັບຄວາມແຕກຕ່າງຕໍ່ກັບຄວາມຄິດເຫັນນັ້ນໆ.

**ໝາຍເຫດ:** ຄວນນໍາໃຊ້ເຄື່ອງມືການກ້າວຢ່າງຕາມຄວາມຄິດເຫັນຂອງຕົນ ສໍາລັບການຄົ້ນຫາສະເພາະບັນທັດຖານທາງສັງຄົມ ແລະ ຄວາມເຊື່ອທີ່ບໍ່ເປັນໄພຂົ່ມຂູ່ເທົ່ານັ້ນ. ສໍາລັບການຊຸກຍູ້ຜູ້ເຂົ້າຮ່ວມເຂົ້າໃນຫົວຂໍ້ສົນທະນາກ່ຽວກັບບັນຫາທີ່ມີຄວາມລະອຽດອ່ອນ ເຊັ່ນ: ການລຸລູກ ຫຼື ການໃຊ້ຄວາມຮຸນແຮງ ໃຫ້ນໍາໃຊ້ເຄື່ອງມື "ສີ່ແຈ" (Four Corners) ເຊິ່ງແມ່ນກິດຈະກໍາຄ້າຍຄືກັບ ການກ້າວຢ່າງຕາມຄວາມຄິດເຫັນຂອງຕົນ ແຕ່ບໍ່ລະບຸຊື່ (ເບິ່ງຄູ່ມືແນະນໍາ ການຝຶກອົບຮົມ ປີ 2007ສໍາລັບການນໍາໃຊ້ SAA ທີ່ລະບຸໄວ້ໃນ ເອກະສານຊ້ອນທ້າຍທີ 2).

## ເວລາປະຕິບັດ

30 ນາທີ ຫາ 1 ຊົ່ວໂມງ

## ອຸປະກອນທີ່ຈໍາເປັນ

ບິກເຟີດຫຼາຍສີ, ສະກ໊ອດເຈ້ຍ.

## ການກະກຽມລ່ວງໜ້າ

- ບັດຈໍານວນ 2 ບັດ ທີ່ຂຽນຄໍາວ່າ "ເຫັນດີ" ແລະ "ບໍ່ເຫັນດີ" ຫຼື ແຕ້ມຮູບ ສໍາລັບຜູ້ເຂົ້າຮ່ວມທີ່ບໍ່ຮູ້ໜັງສື. ຖ້າເຮັດວຽກຮ່ວມກັບກຸ່ມທີ່ບໍ່ຮູ້ໜັງສື ໃຫ້ຕັດສິນໃຈນໍາກັນວ່າຈະນໍາໃຊ້ ສັນຍາລັກໃດທີ່ສະແດງເຖິງ ຄວາມຮູ້ສຶກ "ເຫັນດີ" ແລະ "ບໍ່ເຫັນດີ".
- ເລືອກເອົາ 3 ຫາ 7 ຄໍາເວົ້າທີ່ກ່ຽວຂ້ອງກັບ ບັນທັດຖານທາງບົດບາດທາງເພດ, ສັງຄົມ, ແລະ ອໍານາດການຕັດສິນໃຈ ເປັນຫົວຂໍ້ສໍາລັບການຄົ້ນຫາ. ຫົວຂໍ້ເຫຼົ່ານີ້ຄວນກ່ຽວຂ້ອງກັບຜົນໄດ້ຮັບຂອງໂຄງການ ແລະ ເປັນຂໍ້ມູນທີ່ໄດ້ຈາກການຄົ້ນຄວ້າການວິເຄາະດ້ານບົດບາດທາງເພດ ແລະ ອໍານາດການຕັດສິນໃຈ. ປະໂຫຍກຕົວຢ່າງຈໍານວນໜຶ່ງທີ່ສາມາດປັບ ໃຫ້ແທດເໝາະກັບເນື້ອໃນ ແລະ ຜົນໄດ້ຮັບຂອງໂຄງການປະກອບມີ:
    - ແມ່ຍິງມີອາລົມອ່ອນໄຫວຫຼາຍເກີນໄປ, ດັ່ງນັ້ນຈຶ່ງບໍ່ເໝາະສົມທີ່ຈະເປັນຜູ້ນໍາ ຫຼື ຜູ້ຕັດສິນໃຈທີ່ສົມເຫດສົມຜົນ
    - ແມ່ຍິງບໍ່ມີຄວາມຮູ້ຄວາມສາມາດທີ່ຈະເປັນຕົວແທນຂອງຄອບຄົວໃນການປະຊຸມ
    - ຜູ້ຊາຍ ເກີດມາເພື່ອເປັນຜູ້ນໍາ ເພາະເຂົາເຈົ້າມີເຫດມີຜົນທີ່ສຸດ
    - ມີແຕ່ແມ່ຍິງເທົ່ານັ້ນທີ່ສົມຄວນ/ສາມາດເບິ່ງແຍງເດັກນ້ອຍເກີດໃໝ່ ແລະ ລູກ
    - ແມ່ຍິງ ສື່ສານກັບລູກຂອງຕົນໄດ້ ດີກວ່າຜູ້ເປັນພໍ່
    - ແມ່ຍິງຄວນ ຮັບຜິດຊອບ ຈັດການ ແລະ ສໍາເລັດວຽກງານສ່ວນໃຫຍ່ໃນຄົວເຮືອນ
    - ມັນເປັນສິ່ງສໍາຄັນຫລາຍສໍາລັບແມ່ຍິງ ທີ່ຈະເປັນສາວບໍລິສຸດ ໃນເວລາທີ່ຕົນແຕ່ງດອງ
    - ການດັດແປງອະໄວຍະວະເພດຍິງ ສາມາດຊ່ວຍໃຫ້ເດັກຍິງ ແລະ ແມ່ຍິງມີຄວາມສັດຊື່ຕໍ່ຜົວຂອງຕົນເອງ
    - ແມ່ຍິງຄວນຕັດສິນໃຈສິ່ງທີ່ສໍາຄັນກ່ຽວກັບການຜະລິດກະສິກໍາ ສໍາລັບຄອບຄົວ ແລະ ຊຸມຊົນ
    - ຜູ້ຊາຍເປັນຜູ້ທີ່ຄວນຕັດສິນໃຈໃນການເຮັດແຜນງົບປະມານ ແລະ ລາຍຈ່າຍ ສະເໝີ
    - ຂ້ອຍບໍ່ສາມາດຍອມຮັບໄດ້ ຖ້າລູກຊາຍຂອງຂ້ອຍເປັນຄົນມັກເພດດຽວກັນ
    - ແມ່ຍິງບໍ່ສາມາດບັນລຸການເປັນຄອບຄົວໄດ້ ຖ້າລາວບໍ່ມີລູກຊາຍ.
    - ຜູ້ຊາຍຕ້ອງການ ການມີເພດສໍາພັນຫຼາຍກວ່າແມ່ຍິງ.
    - ແມ່ຍິງບໍ່ຄວນເວົ້າຢ່າງເປີດເຜີຍກ່ຽວກັບການມີເພດສໍາພັນກັບຜົວຂອງຕົນ.
    - ມັນເປັນເລື່ອງໜ້າອາຍ ທີ່ຈະຂາຍບໍລິການທາງເພດ ເພື່ອທໍາມາຫາກິນ.

---

1 ອີງການ USAID. ຄູ່ມືຝຶກອົບຮົມ: ວິທີການຕ່າງໆເພື່ອບັນລຸການເຊື່ອມໂຍງດ້ານບົດບາດຍິງ-ຊາຍໃນການວາງແຜນໂຄງການ: ເຄື່ອງມືຊ່ວຍໃນການຕັດສິນໃຈສໍາລັບພະນັກງານສຶກສາ. ປີ 2007. http://pdf.usaid.gov/pdf_docs/pnado744.pdf

## ຂັ້ນຕອນ (ວິທີອຳນວຍຄວາມສະດວກການໃຊ້ເຄື່ອງມື)

1. ອະທິບາຍຈຸດປະສົງຂອງການນຳໃຊ້ເຄື່ອງມືໃຫ້ແກ່ຜູ້ເຂົ້າຮ່ວມ:

   - ນີ້ແມ່ນການຮຽນຮູ້ເປັນກຸ່ມ ເຊິ່ງທຸກຄົນໃນກຸ່ມສາມາດມີຄວາມຄິດເຫັນກ່ຽວກັບປະໂຫຍກຕ່າງໆ ແລະ ສາມາດທົບທວນຄືນເຖິງທັດສະນະຄະຕິຂອງຕົນເອງກ່ຽວກັບ ຄວາມເຊື່ອຖືທີ່ໂດຍທົ່ວໄປຍັງມີຢູ່. ຈຸດປະສົງແມ່ນເພື່ອໃຫ້ເຂົ້າໃຈ ຄວາມຫຼາກຫຼາຍຂອງຄວາມຄິດເຫັນ ແລະ ໃຫ້ທຸກຄົນມີໂອກາດທີ່ຈະທົບທວນຄືນກ່ຽວກັບທັດສະນະຄະຕິຂອງຕົນເອງ ກ່ຽວກັບຄວາມເຊື່ອຖືທີ່ໂດຍທົ່ວໄປຍັງມີຢູ່.
     - ມັນເປັນສິ່ງສຳຄັນທີ່ເຮົາຈະສະແດງຄວາມນັບຖືເຊິ່ງກັນແລະກັນ ແລະ ຫຼີກລ້ຽງການຕັດສິນຜູ້ອື່ນ, ບໍ່ຄັດເວລາຄົນອື່ນເວົ້າ ຫຼື ເວົ້າເຍາະເຍີ້ຍຄົນອື່ນ.
     - ຄຸນຄ່າ ແລະ ທັດສະນະຄະຕິຂອງພວກເຮົາບໍ່ມີ "ຖືກ" ຫຼື "ຜິດ". ມັນເປັນພຽງແວ່ນແຍງທີ່ເຮົາເບິ່ງ ໂລກຂອງເຮົາ.

1. ວາງບັດເຈ້ຍທີ່ເຫັນດີ/ບໍ່ເຫັນດີ ຢູ່ຈຸດກົງກັນຂ້າມກັບພື້ນທີ່ວ່າງ, ເພື່ອໃຫ້ທຸກຄົນເຫັນບັດໄດ້ ແລະ ໃຫ້ມີພື້ນທີ່ພຽງພໍສຳລັບຄົນທີ່ຈະສາມາດຍ້າຍໄປຢູ່ທັງສອງຂ້າງໄດ້.
2. ອ່ານປະໂຫຍກໜຶ່ງ. ແລ້ວບອກໃຫ້ຜູ້ເຂົ້າຮ່ວມທົບທວນຄືນຢ່າງງຽບໆ (ໂດຍບໍ່ໃຫ້ສົນທະນາກັນ) ຕາມທັດສະນະຄະຕິ ຫຼື ຄວາມຄິດເຫັນຂອງເຂົາເຈົ້າກ່ຽວກັບປະໂຫຍກຄຳເວົ້າດັ່ງກ່າວ, ແລ້ວຍ້າຍໄປຢືນຢູ່ໃກ້ບັດເຈ້ຍທີ່ສະແດງເຖິງຄວາມຄິດເຫັນຂອງເຂົາເຈົ້າ (ເຫັນດີ/ບໍ່ເຫັນດີ).
3. ເມື່ອຜູ້ເຂົ້າຮ່ວມທັງໝົດໄດ້ຍ້າຍໄປຢືນໃກ້ບັດເຈ້ຍດັ່ງກ່າວແລ້ວ ບອກໃຫ້ເຂົາເຈົ້າສົນທະນາ ກັບຄົນທີ່ຢູ່ໃກ້ເຂົາເຈົ້າວ່າເປັນຫຍັງເຂົາເຈົ້າຈຶ່ງເລືອກກຸ່ມນັ້ນ (ຖ້າເຂົາເຈົ້າຮູ້ສຶກສະບາຍໃຈທີ່ຈະເວົ້າ).
4. ເຊີນຜູ້ເຂົ້າຮ່ວມແຕ່ລະກຸ່ມແລກປ່ຽນເຫດຜົນນຳກັນ ກ່ຽວກັບການເຫັນດີ/ບໍ່ເຫັນດີ. ໃຫ້ຖາມວ່າ:
   - ມີໃຜສົນໃຈທີ່ຈະແລກປ່ຽນກັບອີກກຸ່ມອື່ນບໍ່ວ່າເປັນຫຍັງ ຕົນເອງຈຶ່ງເລືອກໄປຢືນຢູ່ບ່ອນທີ່ຕົນເອງຢູ່?
   - ຮູ້ສຶກແນວໃດທີ່ໄດ້ຢູ່ໃນກຸ່ມດັ່ງກ່າວ? (ໝາຍເຫດ: ກຸ່ມນ້ອຍໆອາດມີພຽງແຕ່ໜຶ່ງ ຫຼື ສອງຄົນ —ໃຫ້ຖາມວ່າມີຄວາມຮູ້ສຶກແນວໃດທີ່ໄດ້ຢູ່ໃນກຸ່ມຄົນສ່ວນໜ້ອຍ?)

6. ຫຼັງຈາກໄດ້ຮັບຟັງທັດສະນະຄວາມຄິດຂອງແຕ່ລະກຸ່ມແລ້ວ ໃຫ້ຖາມຜູ້ເຂົ້າຮ່ວມວ່າ ມີໃຜຢາກປ່ຽນບ່ອນຂອງຕົນ ແລ້ວ ຍ້າຍໄປຢູ່ບ່ອນອື່ນບໍ່?. ແລະ ຖາມຜູ້ເຂົ້າຮ່ວມ ທີ່ຍ້າຍໄປວ່າຢາກແລກປ່ຽນຄຳຄິດເຫັນບໍ່, ຜູ້ອຳນວຍຄວາມສະດວກ ຕ້ອງຄົ້ນຫາວ່າເປັນຫຍັງເຂົາເຈົ້າຈຶ່ງຍ້າຍບ່ອນ.
   - ບອກຜູ້ເຂົ້າຮ່ວມວ່າ ຈຸດປະສົງຂອງກິດຈະກຳນີ້ ບໍ່ແມ່ນໃຫ້ຖຽງກັນ ຫຼື ເຮັດໃຫ້ຜູ້ຄົນປ່ຽນຄວາມຄິດເຫັນຂອງຕົນ, ແຕ່ເພື່ອໃຫ້ທຸກຄົນເຂົ້າໃຈຢ່າງແທ້ຈິງ ແລະ ຮຽນຮູ້ກ່ຽວກັບຄວາມຄິດເຫັນທີ່ແຕກຕ່າງກັນ.
   - ຖາມຜູ້ເຂົ້າຮ່ວມ ວ່າພວກເຂົາມີຄຳຖາມ ຫຼື ຄຳອະທິບາຍກ່ຽວກັບບັນຫາທີ່ໄດ້ຍົກຂຶ້ນມາ ໃນລະຫວ່າງການສົນທະນາ ຫລືບໍ່?.
7. ໃຊ້ຄຳຖາມດັ່ງຕໍ່ໄປນີ້ເພື່ອຖອດຖອນບົດຮຽນ ສຳລັບການສົນທະນາສຳລັບປິດທ້າຍກິດຈະກຳ:
   - ທ່ານໄດ້ຮຽນຮູ້ສິ່ງໃໝ່ໆຈາກການສົນທະນາຄັ້ງນີ້ບໍ່? ຮູ້ສຶກປະຫຼາດໃຈບໍ່?
   - ການສົນທະນາຄັ້ງນີ້ໄດ້ປ່ຽນຄວາມເຂົ້າໃຈຂອງໃຜບໍ່ ກ່ຽວກັບຄວາມເຊື່ອ ແລະ ບັນທັດຖານທາງສັງຄົມ?
   - ຂໍ້ດີຂອງການສົນທະນາ, ການທ້າທາຍຄວາມເຊື່ອຂອງຕົນ ຫຼື ການປ່ຽນແປງຄວາມເຊື່ອ, ທັດສະນະຄະຕິ ຫຼື ພຶດຕິກຳຂອງເຮົາແມ່ນຫຍັງ?
   - ຂໍ້ເສຍ, ຜົນກະທົບທີ່ຕາມມາ ຫຼື ການຈຳກັດ ແມ່ນຫຍັງ?
   - ພວກເຮົາສາມາດປະກອບສ່ວນ ໃນການຊ່ວຍຄົນອື່ນປະເຊີນໜ້າກັບບັນດາຄວາມເຊື່ອທີ່ພວກເຮົາໄດ້ສົນທະນາ ແລະ ຊ່ວຍໃນການປ່ຽນແປງພຶດຕິກຳຂອງເຂົາເຈົ້າ
8. ສະຫຼຸບ, ກ່າວຂອບໃຈຜູ້ເຂົ້າຮ່ວມໃນການປະກອບສ່ວນ, ແລະ ສະຫຼຸບຈຸດສຳຄັນດັ່ງຕໍ່ໄປນີ້:
   - ພວກເຮົາທຸກຄົນມີຄວາມເຊື່ອໃນດ້ານບວກ ແລະ ດ້ານລົບ, ທັດສະນະຄະຕິ ແລະ ພຶດຕິກຳທີ່ສົ່ງຜົນກະທົບ ຕໍ່ພວກເຮົາໃນທາງທີ່ແຕກຕ່າງກັນ. ເຄື່ອງມືດັ່ງກ່າວ ສະແດງໃຫ້ເຫັນ ສິ່ງທີ່ຊຸມຊົນມີທັດສະນະ ກ່ຽວກັບບາງເລື່ອງຂອງບັນທັດຖານ ທາງດ້ານບົດບາດທາງເພດ, ສັງຄົມ, ແລະ ອຳນາດທີ່ກຳລັງຂະຫຍາຍຕົວ.
   - ທັດສະນະຄະຕິ ແລະ ຄຸນຄ່າ ຂອງພວກເຮົາ ມັກຈະມີສ່ວນກ່ຽວພັນກັນ ແລະ ຂຶ້ນກັບສະພາບການ – ມັນ ບໍ່ໄດ້ເປັນສີດຳ ແລະ ສີຂາວ, ສະນັ້ນມັນອາດຈະບໍ່ງ່າຍທີ່ຈະຮູ້ວ່າ ເຮົາຮູ້ສຶກແນວໃດ. ມັນເປັນສິ່ງສຳຄັນ ທີ່ຈະ ສັງເກດເຫັນວ່າ ທຸກຄົນ ບໍ່ຈຳເປັນຕ້ອງຖືຄຸນຄ່າ ຫຼື ຄວາມຄິດເຫັນແບບດຽວກັນ ຕໍ່ກັບບັນຫາບາງຢ່າງ ເຖິງ ແມ່ນວ່າ ສິ່ງດັ່ງກ່າວຈະເປັນການສົມມຸດຕິຖານຂຶ້ນ.
   - ແມ້ແຕ່ ບາງຄົນທີ່ຄ້າຍຄືກັບເຮົາແລະ ຜູ້ທີ່ເຮົານັບຖື ກໍ່ອາດມີຄວາມຄິດເຫັນທີ່ແຕກຕ່າງກັນ. ມັນເປັນໜ້າທີ່ຂອງເຮົາທີ່ຈະນັບຖືຄວາມແຕກຕ່າງເຫຼົ່ານັ້ນ ແລະ ເຂົ້າໃຈວ່າ ເປັນຫຍັງເຮົາຈຶ່ງມີຄວາມຄິດເຫັນດັ່ງກ່າວ.

9. ໃນຂະນະທີ່ແຈ້ງ ໃຫ້ຜູ້ເຂົ້າຮ່ວມຮູ້ວ່າຂໍ້ມູນ, ເລື່ອງສ່ວນຕົວ ແລະ ປະສົບການທີ່ໄດ້ແບ່ງປັນກັນ ໃນລະຫວ່າງການສົນທະນາ ຄວນຮັກສາໄວ້ ຢູ່ໃນກຸ່ມ, ໃຫ້ຊຸກຍູ້ ໃຫ້ຜູ້ເຂົ້າຮ່ວມ ແບ່ງປັນບັນຫາຕ່າງໆທີ່ໄດ້ຖືກສົນທະນາ ແລະ ສິ່ງທີ່ເຂົາເຈົ້າ ໄດ້ຮຽນຮູ້ຈາກ ຄອບຄົວ ແລະ ໝູ່ເພື່ອນ ຜູ້ທີ່ບໍ່ໄດ້ເຂົ້າຮ່ວມການຝຶກອົບຮົມຄັ້ງນີ້ ຖ້າຫາກເຂົາເຈົ້າ ຮູ້ສຶກສະບາຍໃຈທີ່ຈະແບ່ງປັນ. ສຸດທ້າຍ, ບອກໃຫ້ຜູ້ເຂົ້າຮ່ວມຄິດເຖິງວິທີແກ້ໄຂກັບສິ່ງທ້າທາຍຕ່າງໆ ທີ່ໄດ້ສົນທະນາກັນໃນລະຫວ່າງ ການສົນທະນາກຸ່ມ ເຊິ່ງມັນຈະຊ່ວຍໃນການສືບຕໍ່ການສົນທະນາໃນພາກຕໍ່ໄປ.

## ໝາຍເຫດສຳລັບຜູ້ອຳນວຍຄວາມສະດວກ

- ຜ່ານການວິເຄາະທາງດ້ານບົດບາດທາງເພດ ແລະ ອຳນາດການຕັດສິນໃຈ, ພະນັກງານໂຄງການ ແລະ ຜູ້ອຳນວຍຄວາມສະດວກ ຄວນໃຈ້ແຍກໃຫ້ເຫັນເຖິງບັນທັດຖານທີ່ພົ້ນເດັ່ນ ເຊິ່ງສາມາດຖອດຖອນບົດຮຽນ ແລະ ປະເຊີນໜ້າ ໃນການທົດລອງປະຕິບັດຄັ້ງນີ້. ຖ້າຈະນຳໃຊ້ປະໂຫຍກຄຳເວົ້າທີ່ໃຫ້ເປັນຕົວຢ່າງໃນປຶ້ມຄູ່ມືນີ້, ທີມງານຄວນປ່ຽນແປງ ຫຼື ດັດປັບປະໂຫຍກຄຳເວົ້າ ໂດຍອີງຕາມ ວັດທະນະທຳ ແລະ ສະພາບຂອງທ້ອງຖິ່ນ.
- ເພື່ອບໍ່ໃຫ້ສັບສົນ, ແຕ່ລະປະໂຫຍກຄວນໃຫ້ມີແຕ່ຄຳຄິດເຫັນດຽວເທົ່ານັ້ນ ແລະ ສາມາດເລືອກໄດ້ພຽງຢ່າງດຽວວ່າ (ຂາວ ຫລື ດຳ) ເພື່ອຊ່ວຍໃຫ້ຜູ້ເຂົ້າຮ່ວມ ຕັດສິນໃຈໄດ້ງ່າຍຂຶ້ນ ວ່າເຂົາເຈົ້າຈະເລືອກເຫັນດີ ຫຼື ບໍ່ເຫັນດີກັບປະໂຫຍກດັ່ງກ່າວ.
- ຜູ້ອຳນວຍຄວາມສະດວກ ຄວນເລີ່ມຕົ້ນອ່ານປະໂຫຍກທີ່ເຂົ້າໃຈງ່າຍ ແລະ ຈາກນັ້ນຈຶ່ງສືບຕໍ່ອ່ານປະໂຫຍກຄຳເວົ້າທີ່ມີລັກສະນະລະອຽດອ່ອນ ຜູ້ອຳນວຍຄວາມສະດວກ ຄວນເປັນຜູ້ທີ່ຊ່າງສັງເກດ ແລະ ບໍ່ເຄັ່ງຄັດ ເພື່ອໃຫ້ຕົນເອງສາມາດຕັດສິນໃຈໄດ້ວ່າ ຕ້ອງການສົນທະນາລົງເລິກກ່ຽວກັບບັນທັດຖານທີ່ລະອຽດອ່ອນຫຼາຍປານໃດ. ນອກຈາກນີ້ ຍັງເປັນການດີ ທີ່ຈະກຳນົດວ່າ ຈະໃຊ້ເຄື່ອງມືດັ່ງກ່າວເມື່ອໃດ ເຊິ່ງຂຶ້ນຢູ່ກັບ ຄວາມລຶ້ງເຄີຍ ແລະ ຄວາມໄວ້ວາງໃຈຂອງບັນດາສະມາຊິກໃນກຸ່ມ.
- ການນຳໃຊ້ເຄື່ອງມືດັ່ງກ່າວເຂົ້າໃນການສົນທະນາ ອາດເຮັດໃຫ້ເກີດມີສະພາບແວດລ້ອມທີ່ເຮັດໃຫ້ຜູ້ເຂົ້າຮ່ວມມີອາລົມອ່ອນໄຫວ ແລະ ໃຈຮ້າຍ. ກ່ອນທີ່ຈະເລີ່ມກິດຈະກຳ ຫລື ລະຫວ່າງມີການສົນທະນາ, ບອກ ຜູ້ເຂົ້າຮ່ວມວ່າ ຄວນສະແດງຄວາມນັບຖືເຊິ່ງກັນແລະກັນ ແລະ ຫຼີກລ້ຽງການຕັດສິນຄົນອື່ນ, ຄັດຈັ້ງວະເວລາຄົນອື່ນເວົ້າ ຫຼື ການເວົ້າເຍາະເຍີ້ຍຄົນອື່ນ.
- ມັນເປັນເລື່ອງປົກກະຕິ ທີ່ຜູ້ເຂົ້າທັງສອງຝ່າຍມີຄວາມຄິດແຕກຕ່າງກັນ ໃນລະຫວ່າງ ການດຳເນີນ ກິດຈະກຳດັ່ງກ່າວ. ເຖິງວ່າການສົນທະນາລະຫວ່າງຜູ້ເຂົ້າຮ່ວມທີ່ມີຄວາມຄິດເຫັນກົງກັນຂ້າມກັນ ຈະສາມາດຊ່ວຍໃຫ້ມີບັນທັດຖານທີ່ດີຂຶ້ນ ແລະ ຊຸກຍູ້ໃຫ້ຄົນອື່ນສະແດງຄວາມຄິດເຫັນທີ່ແຕກຕ່າງກັນກໍ່ຕາມ, ຜູ້ອຳນວຍຄວາມສະດວກຕ້ອງກຽມພ້ອມ ທີ່ຈະແຊກແຊງ ຫລື ຄວບຄຸມການສົນທະນາດັ່ງກ່າວໃນກໍລະນີການສົນທະນານັ້ນເກີດມີຄວາມຕຶງຄຽດ ແລະ ຮຸນແຮງຂຶ້ນ.
- ສິ່ງສຳຄັນອີກຢ່າງໜຶ່ງແມ່ນ ຕ້ອງແຈ້ງ ໃຫ້ຜູ້ເຂົ້າຮ່ວມຮູ້ວ່າ ພວກເຂົາຄວນເຄົາລົບຄວາມເປັນສ່ວນຕົວ ຂອງຜູ້ອື່ນ ໂດຍການຮັກສາສິ່ງທີ່ໄດ້ສົນທະນາກັນ ເປັນຄວາມລັບ. ຢ່າງໃດກໍ່ຕາມ, ເຕືອນຜູ້ເຂົ້າຮ່ວມວ່າ ພວກເຮົາບໍ່ສາມາດຮັບປະກັນວ່າຈະຮັກສາຄວາມລັບນີ້ໄດ້. ດັ່ງນັ້ນ, ຈະບໍ່ມີການບັງຄັບໃຫ້ຜູ້ເຂົ້າຮ່ວມປະກອບຄວາມຄິດເຫັນ ຫຼື ແລກປ່ຽນອັນໃດທີ່ເຂົາເຈົ້າບໍ່ສະບາຍໃຈຢາກສົນທະນາ ແລະ ເຂົາເຈົ້າສາມາດເລືອກທີ່ຈະບໍ່ເຂົ້າຮ່ວມຕອບຄຳຖາມ ຫຼືເຂົ້າຮ່ວມກິດຈະກຳໃດໆເລີຍ.
- ຄວາມແຕກຕ່າງ ແມ່ນເປັນສິ່ງທີ່ຍອມຮັບໄດ້! ກິດຈະກຳນີ້ ສະແດງໃຫ້ເຫັນວ່າ ເຖິງ ແມ່ນວ່າ ເຮົາ ມີຄວາມຄິດ ແລະ ຄວາມເຊື່ອທີ່ແຕກຕ່າງກັນ ຢູ່ໃນກຸ່ມ, ແຕ່ເຮົາກໍ່ສາມາດຢູ່ຮ່ວມ ກັນ ຢ່າງສະຫງົບ ແລະ ດ້ວຍຄວາມເຄົາລົບນັບຖືເຊິ່ງກັນ ແລະ ກັນ.

## ການນຳໃຊ້ ແລະ ການດັດປັບເຄື່ອງມື

**ການສະແດງຄວາມຄິດເຫັນຂອງຕົນ ສຳລັບຂະແໜງການຕ່າງໆໃນ ຂະບວນການຂອງ SAA**

**ການປັບປຸງຄວາມສາມາດຂອງພະນັກງານ**

ສາມາດນຳໃຊ້ເຄື່ອງມືນີ້ ເພື່ອເຂົ້າໃຈຄວາມຄິດເຫັນທີ່ແຕກຕ່າງກັນ ຕໍ່ບັນຫາທີ່ພະນັກງານມີຄຳຖາມຕ່າງໆ ແລະ ສາມາດຊ່ວຍໃຫ້ເຂົາເຈົ້າກວດສອບຄວາມຄິດເຫັນຂອງຕົນເອງ ແລະ ຮູ້ວ່າເປັນຫຍັງ ຕົນເອງຈຶ່ງມີຄຳຖາມດັ່ງກ່າວ. ທ່ານຈະປະເຊີນກັບສິ່ງທ້າທາຍຫຍັງແດ່ ຕໍ່ກັບກິດຈະກຳດັ່ງກ່າວ ຫຼື ການສົນທະນາກ່ຽວກັບ ຄວາມເຊື່ອໃນຊຸມຊົນ? ພວກເຮົາເຄີຍມີປະສົບການບໍ່ທີ່ຄວາມເຊື່ອເຮົາໄດ້ເລືອກ ມັນສົ່ງຜົນກະທົບຕໍ່ໂຄງການທີ່ເຮົາຈັດຕັ້ງປະຕິບັດ? ສົ່ງຜົນກະທົບແນວໃດ? ເຮົາຈະເຮັດແນວໃດເພື່ອຮັບປະກັນໃຫ້ມີຄວາມຍຸດຕິທຳ ແລະ ມີຄວາມນັບຖືຕໍ່ກັບຄວາມຄິດເຫັນທີ່ແຕກຕ່າງກັນໃນຊຸມຊົນ ແລະ ບໍ່ໃຊ້ຄວາມຄິດເຫັນຂອງຕົນເອງຕັດສິນຄວາມຄິດເຫັນເຫລົ່ານັ້ນ?

## ການຖອດຖອນບົດຮຽນກັບຊຸມຊົນ

ສາມາດນຳໃຊ້ເຄື່ອງມື ເພື່ອຊ່ວຍໃຫ້ຊຸມຊົນ ເຂົ້າໃຈຄວາມຄິດເຫັນ ແລະ ຄວາມເຊື່ອຂອງຕົນເອງກ່ຽວກັບ ບັນຫາຕ່າງໆທີ່ໂຄງການຈະຕ້ອງເອົາໃຈໃສ່ ແລະ ສາມາດກໍ່ໃຫ້ເກີດມີຂະບວນການທົບທວນ ຄືນຕົນເອງ ໂດຍການ ສ້າງສະພາບພື້ນທີ່ ທີ່ປອດໄພ ສຳລັບການສົນທະນາ. ນອກຈາກນັ້ນ ຍັງຊ່ວຍໃຫ້ຊຸມຊົນເຂົ້າໃຈ ຄວາມຄິດເຫັນທີ່ແຕກຕ່າງຕໍ່ກັບບັນຫາ ພ້ອມທັງສາມາດຄິດຢ່າງຮອບຄອບກ່ຽວກັບຜົນທີ່ຕາມມາ, ຊ່ວຍໃຫ້ເຂົ້າໃຈວ່າມີຄວາມຄິດເຫັນທີ່ແຕກຕ່າງກັນໃນ ກຸ່ມຄົນ ແລະ ຊຸມຊົນຂອງຕົນເອງ
ກິດຈະກຳນີ້ ຍັງເປີດໂອກາດໃຫ້ຊຸມຊົນສາມາດຄິດຢ່າງຮອບຄອບກ່ຽວກັບຜົນກະທົບ ຂອງການຮັກສາ ຫລື ໃຫ້ຄຸນຄ່າ ແລະ ການປະຕິບັດບາງຢ່າງ ທີ່ໄດ້ສົນທະນາ.

## ແຜນປະຕິບັດງານ

ໃຫ້ລວມເອົາຄຳຖາມສົນທະນາຕໍ່ໄປນີ້ເຂົ້າໃນການສົນທະນາ ໃນຕອນທ້າຍຂອງກິດຈະກຳເພື່ອລະບຸໃຫ້ເຫັນການປ່ຽນແປງທີ່ເປັນໄປໄດ້, ໂອກາດ ແລະ ສິ່ງກີດຂວາງທີ່ກ່ຽວຂ້ອງກັບ ການປ່ຽນແປງເຫຼົ່ານັ້ນ:

ທ່ານຕ້ອງການປ່ຽນແປງຫຍັງແດ່ຕໍ່ກັບ ຄຸນຄ່າ ຫຼື ການປະຕິບັດບາງຢ່າງ ທີ່ພວກເຮົາໄດ້ປຶກສາຫາລືກັນມາ ແລ້ວ? ອັນໃດແດ່ ແລະ ຍ້ອນຫຍັງ? ຂໍ້ເສຍ, ຜົນຕາມມາ, ຫຼື ການຈຳກັດຕ່າງໆ ທີ່ຈະ ປ່ຽນແປງການປະຕິບັດເຫຼົ່ານັ້ນ ແມ່ນຫຍັງ? ຈະໃຫ້ການຊ່ວຍເຫຼືອແນວໃດແກ່ຜູ້ອື່ນ
ເພື່ອປະເຊີນໜ້າກັບຄວາມເຊື່ອທີ່ໄດ້ປຶກສາຫາລືນຳກັນໃນກິດຈະກຳນີ້ ແລະ ປ່ຽນແປງພຶດຕິກຳ ເພື່ອສົ່ງເສີມຊີວິດການເປັນຢູ່ຂອງເຂົາເຈົ້າ?

## ການຕິດຕາມ ແລະ ການປະເມີນຜົນ

ຜູ້ອຳນວຍຄວາມສະດວກ ສາມາດນຳໃຊ້ເຄື່ອງມືດັ່ງກ່າວໃນຂັ້ນຕອນທີ່ແຕກຕ່າງກັນຂອງໂຄງການ ເພື່ອສັງເກດຄວາມແຕກຕ່າງເປີເຊັນຂອງຜູ້ທີ່ "ເຫັນດີ" ແລະ "ບໍ່ເຫັນດີ" ສຳລັບປະໂຫຍກຄຳເວົ້າທີ່ກ່ຽວຂ້ອງກັບບັນຫາຄວາມສຳຄັນທີ່ພົບເຫັນ ໂດຍຜ່ານການວິເຄາະທາງດ້ານບົດບາດທາງເພດ ແລະ ອຳນາດການຕັດສິນໃຈ. ເພື່ອໃຫ້ເຫັນຄວາມແຕກຕ່າງນີ້, ຜູ້ອຳນວຍຄວາມສະດວກ ຄວນຕ້ອງໃຊ້ປະໂຫຍກຄຳເວົ້າດຽວກັນໃນແຕ່ລະຄັ້ງທີ່ນຳໃຊ້ເຄື່ອງມືເພື່ອການປຽບທຽບທີ່ກ່ຽວຂ້ອງ. ນອກນັ້ນ, ຜູ້ອຳນວຍຄວາມສະດວກ ຈະຕ້ອງຈົດບັນທຶກການສົນທະນາທີ່ເກີດຂຶ້ນກ່ຽວກັບກິດຈະກຳ ເພາະຂໍ້ມູນທີ່ບັນທຶກນີ້ຈະຊ່ວຍເພີ່ມຄວາມໝາຍໃສ່ຂໍ້ມູນທາງດ້ານປະລິມານທີ່ກ່ຽວຂ້ອງກັບ ການເຫັນດີ ຫຼື ບໍ່ເຫັນດີ. ຕົວຢ່າງ: ຄວາມເຄັ່ງຕຶງມີຫຼາຍຂຶ້ນໃນຕອນເລີ່ມຕົ້ນ ຫຼືບໍ່ເມື່ອທຽບໃສ່ ຕອນທ້າຍຂອງການຈັດຕັ້ງປະຕິບັດ? ມີການ ເປີດກວ້າງຕໍ່ທັດສະນະອື່ນໆຫຼາຍຂຶ້ນ ຫຼືບໍ່ ກ່ຽວກັບການເຫັນດີ ຫຼື ບໍ່ເຫັນດີ
ຈົນເຖິງໄລຍະສຸດທ້າຍຂອງໂຄງ ການ? ຂະບວນການປ່ຽນແປງ ຮູບແບບໃດທີ່ມີ ກ່ຽວກັບການມີສ່ວນຮ່ວມຂອງປະຊາຊົນ, ຄວາມຄິດ, ຫຼື ຄວາມປາດຖະໜາເພື່ອອະທິບາຍຄວາມຄິດເຫັນຂອງເຂົາເຈົ້າ?

### ການສະແດງຄວາມຄິດເຫັນຂອງຕົນ ສຳລັບຂະແໜງການທີ່ແຕກຕ່າງກັນ

ກິດຈະກຳຫຼັກຍັງຄົງຄືເກົ່າ, ແຕ່ຜູ້ອຳນວຍຄວາມສະດວກ ສາມາດເລືອກເອົາປະໂຫຍກຄຳເວົ້າສະເພາະຂອງຂະແໜງການຕໍ່ໄປນີ້
ສຳລັບສັດສ່ວນການລົງຄະແນນຂອງການກິດຈະກຳ

#### ສຸຂະພາບຈະເລີນພັນ ແລະ ສິດທິຕ່າງໆ (SRHR)

**SRHR-ປະໂຫຍກຄຳເວົ້າສະເພາະ:**

- ເປັນໜ້າທີ່ຂອງເມຍໃນການເບິ່ງແຍງລູກ
- ແມ່ຍິງທີ່ພົກພາຖົງຢາງອະນາໄມ ແມ່ນມີປະສົບການການມີເພດສຳພັນ
- ຜູ້ຊາຍຕ້ອງການມີເພດສຳພັນຫຼາຍກວ່າແມ່ຍິງ
- ຜູ້ຊາຍຄວນເຄົາລົບໃນທາງເລືອກຂອງແມ່ຍິງທີ່ຈະເລືອກຄຸມກຳເນີດ
- ແມ່ຍິງຕ້ອງບໍ່ໃຫ້ນົມລູກຈາກເຕົ້າໃນສະຖານທີ່ສາທາລະນະ
- ບັນຫາປະຈຳເດືອນແມ່ນເປັນເລື່ອງສ່ວນຕົວຫຼາຍ, ເດັກຍິງບໍ່ຄວນເວົ້າຢ່າງເປີດເຜີຍໃນທີ່ສາທາລະນະ
- ເດັກຍິງທີ່ປະພຶດດີ ບໍ່ຕິດເຊື້ອພະຍາດທາງເດີນ/ທໍ່ຍ່ຽວອັກເສບ
- ການດັດແປງອະໄວຍະວະເພດຍິງ ແມ່ນສິ່ງທີ່ຖືກຕ້ອງທີ່ຈະເຮັດສຳລັບເດັກຍິງ
- ແມ່ຍິງຕ້ອງມີລູກຈົນກວ່າຈະກຳເນີດລູກຊາຍ
- ບົດບາດຫຼັກຂອງແມ່ຍິງແມ່ນການສືບພັນ
- ແມ່ຍິງທີ່ບໍ່ສາມາດມີລູກ ແມ່ນໄດ້ຮັບຜົນກະທົບຈາກວິນຍານຊົ່ວຮ້າຍ
- ເປັນຄວາມຜິດຂອງແມ່ຍິງ ຖ້າລາວບໍ່ສາມາດມີລູກໄດ້
- ຜູ້ຊາຍສາມາດຢ່າຮ້າງແມ່ຍິງໄດ້ ຖ້າແມ່ຍິງບໍ່ສາມາດກຳເນີດລູກຊາຍໃຫ້ໄດ້
- ຜູ້ຊາຍບໍ່ສາມາດຄວບຄຸມເລື່ອງເພດຂອງຕົນໄດ້ (ເຊັ່ນການກະຕຸ້ນທາງເພດ, ຄວາມຕ້ອງການ)
- ແມ່ຍິງບໍ່ຄວນມີເພດສຳພັນກ່ອນແຕ່ງດອງ

## ຄວາມເຂັ້ມແຂງທາງດ້ານເສດຖະກິດຂອງແມ່ຍິງ (WEE)

**WEE-ປະໂຫຍກຄຳເວົ້າສະເພາະ:**

- ແມ່ຍິງຕ້ອງບໍ່ລືມກັບຜູ້ຊາຍນອກສະຖານທີ່ເຮັດວຽກ
- ແມ່ຍິງທີ່ໜ້ານັບຖື ບໍ່ເຮັດວຽກຕອນກາງຄືນ
- ແມ່ຍິງທີ່ຂໍພັກເພື່ອອອກລູກ ຄວນໄດ້ຮັບການພັກວຽກໂດຍບໍ່ເສຍຄ່າ
- ມີແຕ່ຜູ້ຊາຍເທົ່ານັ້ນທີ່ສາມາດເປັນ ຜູ້ຂັບຂີ່ລົດ ແລະ ເປັນ ເຈົ້າໜ້າທີ່ຮັກສາຄວາມປອດໄພ
- ຜູ້ຊາຍທີ່ເຮັດ "ວຽກຂອງແມ່ຍິງ" ເປັນຄົນມັກຄົນເພດດຽວກັນ
- ເປັນເລື່ອງໜ້າອາຍທີ່ຈະລ້ຽງຊີບຕົນເອງໂດຍການບໍລິການທາງເພດ
- ໂດຍທົ່ວໄປແລ້ວ ແມ່ຍິງບໍ່ເກັ່ງໃນການບໍລິຫານເງິນ
- ແມ່ຍິງຕ້ອງບໍ່ເດີນທາງຄົນດຽວໄປເຮັດວຽກ
- ຜູ້ຊາຍເຮັດໄດ້ດີກວ່າໃນການພົວພັນກັບທະນາຄານ ແລະ ການຮັກສາບັນຊີທະນາຄານ
- ແມ່ຍິງເປັນຜູ້ຈັດການທີ່ດີກວ່າຜູ້ຊາຍ
- ວຽກຂອງແມ່ຍິງແມ່ນ "ເບົາ", ວຽກຜູ້ຊາຍແມ່ນ "ໜັກ"
- ແມ່ຍິງຕ້ອງຂໍອະນຸຍາດຈາກຜົວໃນການໃຊ້ຈ່າຍເງິນ
- ຜູ້ຊາຍທຸກຄົນຕ້ອງເຮັດວຽກ

## ການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ (FNS)

**FNS-ປະໂຫຍກຄຳເວົ້າສະເພາະ:**

- ຜູ້ຊາຍຄວນຮັບຜິດຊອບຈັດການກັບ ວິຊາການສົ່ງເສີມກະສິກຳ
- ແມ່ຍິງບໍ່ແມ່ນຊາວກະສິກອນ ເພາະພວກເຂົາບໍ່ໄດ້ເຮັດວຽກຄາດ-ໄຖ
- ຜູ້ຊາຍຄວນຂາຍເຄື່ອງໃນຕະຫຼາດ
- ມີແຕ່ແມ່ຍິງເທົ່ານັ້ນທີ່ຄວນເບິ່ງແຍງ ແລະ ລ້ຽງລູກນ້ອຍ
- ແມ່ຍິງສື່ສານກັບລູກຂອງຕົນໄດ້ດີກ່ວາຜູ້ຊາຍ
- ແມ່ຍິງຄວນຕັດສິນໃຈບັນຫາສຳຄັນກ່ຽວກັບການຜະລິດກະສິກຳ ແລະ ຄວາມຕ້ອງການອາຫານໃນຊຸມຊົນ ແລະ ຄົວເຮືອນຂອງເຂົາເຈົ້າ
- ຜູ້ຊາຍຄວນຕັດສິນໃຈດ້ານງົບປະມານ ແລະ ລາຍຈ່າຍສະເໝີ
- ແມ່ຍິງຕ້ອງກິນອາຫານເປັນຄົນສຸດທ້າຍ ຫຼັງຈາກທີ່ແນ່ໃຈວ່າຄົນອື່ນໆໄດ້ກິນອາຫານຄົບໝົດທຸກຄົນແລ້ວ
- ຜູ້ຊາຍຕ້ອງການໂພຊະນາການຫຼາຍກວ່າ ເພາະເຂົາເຈົ້າເຮັດວຽກໜັກທຸກຢ່າງ
- ເດັກຊາຍຕ້ອງເຕີບໃຫຍ່ເຂັ້ມແຂງ, ດັ່ງນັ້ນພວກເຂົາຈຶ່ງສົມຄວນໄດ້ຮັບອາຫານທີ່ດີທີ່ສຸດ
- ມີແຕ່ແມ່ຍິງເທົ່ານັ້ນທີ່ສາມາດແຕ່ງກິນໄດ້
- ແມ່ຍິງຕ້ອງບໍ່ກິນອາຫານຫລາກຫລາຍຢ່າງ ທີ່ແຕກຕ່າງກັນ ຖ້າເຂົ້າເຈົ້າຖືພາ, ມີປະຈຳເດືອນ, ຫຼື ເປັນໝ້າຍ
- ແມ່ຍິງຕ້ອງອົດອາຫານໃນຫຼາຍໆໂອກາດ, ເຖິງແມ່ນວ່າຈະຢູ່ໃນໄລຍະຖືພາກໍ່ຕາມ
- ແມ່ຍິງຕ້ອງປຸງແຕ່ງອາຫານທີ່ຜູ້ຊາຍມັກ

## ການນຳໃຊ້ກິດຈະກຳນີ້ ສຳລັບໃຊ້ຄວາມຮຸນແຮງບົນພື້ນຖານທາງເພດ (GBV)

ດັ່ງທີ່ໄດ້ກ່າວມາຂ້າງເທິງ ໃນພາກແນະນຳຂອງເຄື່ອງມື , ກິດຈະກຳ ແລະ ປະໂຫຍກຄຳເວົ້າຕ່າງໆ ສະເພາະເຈາະຈົງກ່ຽວກັບ GBV ຄວນນຳໃຊ້ດ້ວຍຄວາມລະມັດລະວັງ ເນື່ອງຈາກວ່າ ມັນອາດຈະສົ່ງເສີມໃຫ້ຜູ້ເຂົ້າຮ່ວມມີການໂຕ້ ຖຽງກັນ ແລະ ການໂຕ້ຕອບດ້ວຍອາລົມ. .

**GBV-ປະໂຫຍກຄຳເວົ້າ:**

- ບໍ່ຄວນນຳເອົາການຂົ່ມຂືນມາໃຫ້ຄວາມຮູ້ໃນສະຖານທີ່ສາທາລະນະ
- ແມ່ຍິງທີ່ແຕ່ງຕົວແບບກະຕຸ້ນອາລົມ ອາດຈະໄດ້ຮັບການລວນລາມທາງເພດ ຫຼື ການຂົ່ມຂືນ
- ຜູ້ຊາຍຕ້ອງຕີເມຍໃນບາງຄັ້ງເພື່ອໃຫ້ຕົນເອງສາມາດຄວບຄຸມເມຍໄດ້
- ຜູ້ຊາຍທີ່ຕີເມຍ ແມ່ນຮັກເມຍຫຼາຍ
- ບໍ່ມີການຂົ່ມຂືນໃນຊີວິດຄູ່ສົມລົດ
- ແມ່ຍິງທີ່ປະຕິເສດການມີເພດສຳພັນກັບຜົວ ສົມຄວນທີ່ຈະຖືກຕີ
- ພໍ່ແມ່ຕ້ອງຕີລູກເພື່ອເຮັດໃຫ້ລູກເຊື່ອຟັງ
- ແມ່ຍິງທີ່ບໍ່ສາມາດມີລູກຊາຍ ຄວນຖືກຫ້າມບໍ່ໃຫ້ມີສ່ວນຮ່ວມໃນໜ້າທີ່ຂອງຄອບຄົວ
- ຊາຍ/ຍິງທີ່ມີຄວາມສົນໃຈຄົນເພດດຽວກັນ ຕ້ອງໄດ້ຮັບການ "ປິ່ນປົວ" ດ້ວຍຢາ ຫຼື ການບັງຄັບ

# 4.ການສ້າງແຜນວາດຂອງຮ່າງກາຍ - Body Mapping

## ຈຸດປະສົງຂອງເຄື່ອງມື

1. ເພື່ອຄົ້ນຄວ້າການພົວພັນລະຫວ່າງບົດບາດທາງເພດ, ເພດສຳພັນ, ຄວາມຮຸນແຮງ, ແລະ ອຳນາດ
2. ເພື່ອໃຫ້ມີຄວາມເຂົ້າໃຈຫຼາຍຂຶ້ນ ແລະ ເວົ້າຢ່າງເປີດເຜີຍກ່ຽວກັບຫົວຂໍ້ທີ່ລະອຽດອ່ອນ
3. ເພື່ອສ້າງເຫດຜົນວ່າ ຍ້ອນຫຍັງການທີ່ຈະເວົ້າກ່ຽວກັບສິ່ງເຫຼົ່ານັ້ນ ແມ່ນກ່ຽວຂ້ອງກັບວຽກງານ ຂອງຜູ້ເຂົ້າຮ່ວມ ແລະ ຊີວິດຂອງເຂົາເຈົ້າ

ຫົວຂໍ້ຕໍ່ໄປນີ້ແມ່ນເໝາະສົມທີ່ສຸດສຳລັບເຄື່ອງມືນີ້:

- ບາງສ່ວນຂອງຮ່າງກາຍທີ່ປະສົບກັບຄວາມເພິ່ງພໍໃຈ, ອຳນາດ, ຄວາມເຈັບປວດ, ຄວາມອັບອາຍ, ການດູຖູກ, ແລະ ອື່ນໆ
- ບັນທັດຖານທາງດ້ານບົດບາດທາງເພດ ແລະ ຄວາມຄາດຫວັງຂອງສັງຄົມຕໍ່ ຜູ້ຊາຍ ແລະ ແມ່ຍິງ
- ແນວຄວາມຄິດທີ່ຫຼາກຫຼາຍກ່ຽວກັບຮ່າງກາຍໃນບັນດາຜູ້ຊາຍ ແລະ ແມ່ຍິງ
- ຄວາມຢູ່ດີກິນດີ ແລະ ຄວາມເຈັບປ່ວຍ

## ເວລາປະຕິບັດ

1 ຫາ 1.5 ຊົ່ວໂມງ

## ອຸປະກອນ ແລະ ການກະກຽມອື່ນໆທີ່ຈຳເປັນ

- ນຳໃຊ້ ເຈ້ຍແຜ່ນໃຫຍ່, ບິກເຝີດ ຫຼື ບິກສີ, ເຈ້ຍບັດຄຳ, ສະກ໋ອດເຈ້ຍ, ສໍສີ ຫຼື ສໍຂາວ
- ຜູ້ອຳນວຍຄວາມສະດວກຄວນກຳນົດຫົວຂໍ້ຫຼັກ ຫຼື ຈຸດສຸມ ຂອງແຜນວາດຂອງຮ່າງກາຍ (ເບິ່ງລາຍການຂ້າງເທິງ)

---

## ຂັ້ນຕອນ (ວິທີການນຳໃຊ້ເຄື່ອງມື)

1. ຈັດແບ່ງຜູ້ເຂົ້າຮ່ວມອອກເປັນກຸ່ມຍິງ ແລະ ກຸ່ມຊາຍ, ປະມານ 4 ຫາ 8 ຄົນຕໍ່ກຸ່ມ. ກຸ່ມແມ່ຍິງຄົ້ນຄວ້າກ່ຽວກັບແຜນວາດຂອງຮ່າງກາຍເພດຍິງ, ແລະ ກຸ່ມຜູ້ຊາຍຄົ້ນຄ້ວາກ່ຽວກັບແຜນວາດຂອງຮ່າງກາຍຊາຍ. ນອກຈາກນັ້ນ, ຜູ້ອຳນວຍຄວາມສະດວກສາມາດບອກໃຫ້ຜູ້ເຂົ້າຮ່ວມ ປະກອບສ່ວນໃສ່ແຜນວາດຂອງເພດກົງກັນຂ້າມໃຫ້ສົມບູນ ເພື່ອສົນທະນາແລກປ່ຽນກ່ຽວກັບ ຄວາມຮັບຮູ້ເຊິ່ງກັນແລະກັນ ຂອງແມ່ຍິງ ແລະ ຜູ້ຊາຍ.
2. ບອກໃຫ້ຜູ້ເຂົ້າຮ່ວມແຕ້ມຮູບຮ່າງຂອງຮ່າງກາຍມະນຸດເທິງເຈ້ຍແຜ່ນໃຫຍ່ ຫຼື ກະດານ. ອີງຕາມເຄື່ອງມືປະກອບການຝຶກອົບຮົມທີ່ມີ ອົງປະກອບຂອງແຜນວາດຂອງຮ່າງກາຍສາມາດລວມມີ:
   - ແມ່ຍິງ
   - ຜູ້ຊາຍ
   - ຄົນຫຼາກຫຼາຍທາງເພດ
   - ຊາຍ/ຍິງ ຜູ້ທີ່ຂາຍບໍລິການທາງເພດ
   - ແມ່ຍິງຖືພາ ຫຼື ແມ່ຍິງລ້ຽງລູກດ້ວຍນ້ຳນົມ
   - ແມ່ຍິງທີ່ມີຄວາມພິການ
3. ຂຶ້ນກັບຈຸດສຳຄັນຂອງການສົນທະນາ, ບອກໃຫ້ແຕ່ລະກຸ່ມສ້າງລາຍການໃສ່ແຜນວາດຂອງຮ່າງກາຍ ກ່ຽວກັບຄຸນລັກສະນະໃດໜຶ່ງທີ່ສົນທະນາກັນຕາມຈຸດປະສົງຂອງເຄື່ອງມື.
   - ຍົກຕົວຢ່າງ: ຖ້າຫາກວ່າຈຸດປະສົງແມ່ນເພື່ອວິເຄາະກ່ຽວກັບ ຄວາມເພິ່ງພໍໃຈ ແລະ ຄວາມເຈັບປວດ ຫຼື ເພື່ອເຂົ້າໃຈກ່ຽວກັບຄວາມຮຸນແຮງ ຫຼື ບັນທັດຖານທາງດ້ານບົດບາດທາງເພດຕໍ່ຍິງ ແລະ ຊາຍ, ຜູ້ເຂົ້າຮ່ວມຈະໝາຍໃສ່ ຮ່າງກາຍບ່ອນທີ່ສິ່ງເຫຼົ່ານັ້ນມີຄວາມຮູ້ສຶກ ຫຼື ຜ່ານປະສົບການ.
   - ໃຊ້ສີທີ່ແຕກຕ່າງກັນເພື່ອໝາຍສ່ວນຕ່າງໆຂອງຮ່າງກາຍທີ່ໃຊ້ເພື່ອຄວາມເພິ່ງພໍໃຈ, ຄວາມເຈັບປວດ, ແລະ ຄວາມຮຸນແຮງ.
4. ໃນແຕ່ລະກຸ່ມ, ໃຫ້ຜູ້ເຂົ້າຮ່ວມຖອດຖອນບົດຮຽນຈາກແຜນວາດຂອງຮ່າງກາຍ ແລະ ສົນທະນາກັນ:
   - ຍ້ອນຫຍັງ ຜູ້ຊາຍຈິ່ງຕ້ອງການມີເພດສຳພັນ? ຜູ້ຊາຍຮູ້ສຶກຮ້າຍຕໍ່ເມຍ/ຄູ່ຮັກ ຂອງຕົນເອງເມື່ອໃດ? ຜູ້ຊາຍຈະຮູ້ສຶກແນວໃດຖ້າຖືກລ່ວງລະເມີດ? ຜູ້ຊາຍຮູ້ສຶກແນວໃດເມື່ອມີຄວາມເພິ່ງພໍໃຈ?
   - ຍ້ອນຫຍັງ ແມ່ຍິງຈິ່ງຕ້ອງການມີເພດສຳພັນ? ແມ່ຍິງຮູ້ສຶກຮ້າຍຕໍ່ຜົວ/ຄູ່ຮັກ ຂອງຕົນເອງເມື່ອໃດ? ແມ່ຍິງຮູ້ສຶກແນວໃດ ເມື່ອຖືກລ່ວງລະເມີດ? ແມ່ຍິງຮູ້ສຶກແນວໃດ ເມື່ອມີຄວາມເພິ່ງພໍໃຈ
   - ການມີເພດສຳພັນ ຖືກນຳໃຊ້ເປັນເຄື່ອງມືເພື່ອໃຫ້ບັນລຸເປົ້າໝາຍບາງຢ່າງບໍ່? ຖ້າເປັນເຊັ່ນນັ້ນ ສິ່ງເຫຼົ່ານີ້ແມ່ນຫຍັງ? ຜູ້ຊາຍໃຊ້ການມີເພດສຳພັນ ເພື່ອໃຫ້ໄດ້ຮັບສິ່ງຕ່າງໆແນວໃດ? ແມ່ຍິງໃຊ້ການມີເພດສຳພັນ ແນວໃດ?
   - ຍ້ອນຫຍັງ ເຮົາຄວນເວົ້າເຖິງເລື່ອງການມີເພດສຳພັນ?

5. ຖ້າສະດວກ, ຜູ້ເຂົ້າຮ່ວມສາມາດນຳສະເໜີແຜນວາດຂອງຮ່າງກາຍຂອງຕົນເອງ. ຖ້າຜູ້ເຂົ້າຮ່ວມບໍ່ເຕັມໃຈ, ຜູ້ອຳນວຍຄວາມສະດວກສາມາດສົນທະນາກ່ຽວກັບແຜນວາດຂອງຮ່າງກາຍ ແລະ ຊີ້ແຈງເລື່ອງລາວໃຫ້ຊັດເຈນ ຫຼື ຄວາມເຂົ້າໃຈຜິດໃດໆທີ່ມີກ່ຽວກັບຮ່າງກາຍ.

6. ອຳນວຍຄວາມສະດວກໃນການສົນທະນາໂດຍໃຊ້ຄຳຖາມເພື່ອຖອດຖອນບົດຮຽນ ດັ່ງຕໍ່ໄປນີ້:
   - ຄວາມຄ້າຍຄື ແລະ ຄວາມແຕກຕ່າງກັນ ລະຫວ່າງ ແຜນວາດຂອງຮ່າງກາຍຂອງແມ່ຍິງ ກັບ ຜູ້ຊາຍ ແມ່ນຫຍັງ?
   - ມີຄວາມແຕກຕ່າງກັນໃນແຜນວາດຂອງຮ່າງກາຍຂອງຜູ້ຊາຍ ແລະ ແມ່ຍິງ ບໍ່?
   - ຖ້າມີ, ເຫດຜົນຂອງຄວາມແຕກຕ່າງນັ້ນແມ່ນຫຍັງ?
   - ຄວາມແຕກຕ່າງອັນໃດ ທີ່ເກີດຈາກຊີວະສາດ ແລະ ອັນໃດເກີດຈາກຄວາມຄາດຫວັງ ຫຼື ຄວາມຮັບຮູ້ຂອງຄົນທີ່ຢູ່ອ້ອມຂ້າງ?
   - ຄວາມຮັບຮູ້ເຫຼົ່ານັ້ນ ສົ່ງຜົນກະທົບແນວໃດຕໍ່ ຊີວິດ ແລະ ຄວາມເປັນຢູ່ທີ່ດີຂອງຜູ້ຊາຍ ແລະ ແມ່ຍິງ?

7. ພາຍຫຼັງສຳເລັດການສົນທະນາ, ຊີ້ແຈງໃຫ້ຊັດເຈນສຳລັບຄຳຖາມ ແລະ ແກ້ໄຂຂໍ້ມູນທີ່ບໍ່ຖືກຕ້ອງ. ສະຫຼຸບ, ຂໍຂອບໃຈຜູ້ເຂົ້າຮ່ວມໃນການປະກອບສ່ວນ ແລະ ທີ່ໄດ້ເປີດໃຈເວົ້າກ່ຽວກັບຮ່າງກາຍຂອງພວກເຮົາ. ສະຫຼຸບຫຍໍ້ ດ້ວຍຈຸດສຳຄັນດັ່ງຕໍ່ໄປນີ້:
   - ກິດຈະກຳນີ້ ຊ່ວຍໃຫ້ພວກເຮົາຮຽນຮູ້ກ່ຽວກັບຕົນເອງຫຼາຍຂຶ້ນ ສະນັ້ນເຮົາຈຶ່ງສາມາດຮຽນຮູ້ເພີ່ມເຕີມ ກ່ຽວກັບຊຸມຊົນ ແລະ ວິທີການປັບປຸງຊີວິດຂອງເຮົາ.
   - ການວາງໂຕໃຫ້ສະບາຍ ໃນການເວົ້າກ່ຽວກັບຫົວຂໍ້ທີ່ລະອຽດອ່ອນ ຈະສາມາດຊ່ວຍເຮົາໃນການລະບຸ ສິ່ງທ້າທາຍເພື່ອການພັດທະນາ ແລະ ສ້າງການປ່ຽນແປງເພື່ອປັບປຸງຊີວິດການເປັນຢູ່ຂອງແມ່ຍິງ ແລະ ຜູ້ຊາຍ.
   - ກິດຈະກຳນີ້ ສະແດງໃຫ້ເຫັນວ່າ ເຖິງແມ່ນວ່າເຮົາມັກຈະຄິດວ່າແມ່ຍິງ ແລະ ຜູ້ຊາຍ ຕ່າງກັນຫຼາຍ ແຕ່ເຮົາກໍ່ມີຫຼາຍຢ່າງທີ່ຄ້າຍຄືກັນ. ແມ່ຍິງ ແລະ ຜູ້ຊາຍ ຕ່າງກໍ່ປະສົບກັບຄວາມເພິ່ງພໍໃຈ ແລະ ຄວາມເຈັບປວດ, ທັງສອງເພດຕ່າງມີຄວາມຕ້ອງການທາງອາລົມ ແລະ ຕ້ອງການທີ່ຈະໄດ້ຮັບຄວາມຮັກ ແລະ ຄວາມເຄົາລົບນັບຖື.

8. ກ່ອນທີ່ຈະປິດການສົນທະນາ, ຢ້ຳຜູ້ເຂົ້າຮ່ວມວ່າເລື່ອງສ່ວນຕົວ ແລະ ປະສົບການທີ່ໄດ້ແບ່ງປັນກັນ ໃນລະຫວ່າງການສົນທະນາ ຄວນຮັກສາໄວ້ຢູ່ໃນກຸ່ມ, ແຕ່ຄວນຊຸກຍູ້ໃຫ້ຜູ້ເຂົ້າຮ່ວມແບ່ງປັນບັນຫາຕ່າງໆທີ່ໄດ້ຖືກສົນທະນາ ແລະ ສິ່ງທີ່ເຂົາເຈົ້າໄດ້ຮຽນຮູ້ ກັບຄອບຄົວ ແລະ ໝູ່ເພື່ອນທີ່ບໍ່ໄດ້ເຂົ້າຮ່ວມ ຖ້າຫາກເຂົາເຈົ້າຮູ້ສຶກສະບາຍໃຈຍາກຈະແບ່ງປັນ. ສຸດທ້າຍ, ບອກໃຫ້ຜູ້ເຂົ້າຮ່ວມຄິດເຖິງວິທີແກ້ໄຂກັບສິ່ງທ້າທາຍຕ່າງໆ ທີ່ໄດ້ສົນທະນາກັນໃນລະຫວ່າງການສົນທະນາກຸ່ມ ເຊິ່ງຈະຊ່ວຍສືບຕໍ່ການສົນທະນາໃນພາກຕໍ່ໄປ.

## ຄຳແນະນຳສຳລັບຜູ້ອຳນວຍຄວາມສະດວກ

ແຜນວາດຂອງຮ່າງກາຍມີປະສິດທິຜົນຫຼາຍໃນການອຳນວຍຄວາມສະດວກ ເພື່ອຊຸກຍູ້ການມີສ່ວນຮ່ວມ ແລະ ການຖອດຖອນບົດຮຽນຢ່າງເລິກເຊິ່ງ ໃນຂອບເຂດທີ່ລະອຽດອ່ອນ, ແຕ່ຜູ້ອຳນວຍຄວາມສະດວກຈຳເປັນຕ້ອງຈົດຈຳສິ່ງຕໍ່ໄປນີ້:

a. ຜູ້ເຂົ້າຮ່ວມ ອາດຈະຮູ້ສຶກສະດວກກວ່າໃນກຸ່ມເພດດຽວກັນ, ກຸ່ມຄົນທີ່ມີອາຍຸໃກ້ຄຽງກັນ ຫຼື ສະຖານະພາບການສົມລົດຄືກັນ, ແລະ ໃນສະຖານທີ່ທີ່ມີຄວາມເປັນສ່ວນຕົວ.

b. ການກຽມແຜນວາດຂອງຮ່າງກາຍ ອາດຈະເຮັດໃຫ້ເຫັນຄວາມຊົງຈຳທີ່ເຈັບປວດ ສຳລັບຜູ້ເຂົ້າຮ່ວມບາງຄົນ. ຕົວຢ່າງ: ຄົນທີ່ຖືກທຳຮ້າຍ ຫຼື ປະສົບກັບຄວາມຮຸນແຮງ.

c. ຖ້າຫາກມີການສົນທະນາກ່ຽວກັບຄວາມເຈັບປວດ ແລະ/ຫຼື ການໃຊ້ຄວາມຮຸນແຮງທາງເພດ ແລະ ມີບາງຄົນໄດ້ເປີດເຜີຍເຖິງເຫດການດັ່ງກ່າວ, ໃຫ້ຕິດຕາມກັບບຸກຄົນນັ້ນ ເພື່ອສິ່ງຕໍ່ກໍລະນີໃຫ້ພາກສ່ວນໃຫ້ການຊ່ວຍເຫຼືອ ແລະ ໃຫ້ແນ່ໃຈວ່າເຂົາເຈົ້າມີຄວາມໝັກແໜ້ນ.

d. ຜູ້ອຳນວຍຄວາມສະດວກ ຄວນພ້ອມທີ່ຈະຊ່ວຍກຸ່ມ ຄົ້ນຫາທັດສະນະຄະຕິທີ່ເປັນການດູໝິ່ນກັນທີ່ຖືກຍົກຂຶ້ນມາ ຖ້າໃຊ້ເຄື່ອງມືດັ່ງກ່າວເພື່ອຄົ້ນຫາບັນຫາຕ່າງໆ ເຊັ່ນ: ການມັກເພດດຽວກັນ ຫຼື ຂາຍບໍລິການທາງເພດ. ສິ່ງດັ່ງກ່າວ ບໍ່ສາມາດເຮັດສຳເລັດໄດ້ ໂດຍການຕອບຄຳຖາມ ແຕ່ໂດຍການຂໍໃຫ້ຜູ້ເຂົ້າຮ່ວມທົບທວນຄືນກ່ຽວກັບບັນຫາຕ່າງໆ ໂດຍຖາມວ່າ "ຍ້ອນຫຍັງ ທ່ານຄິດວ່າມັນເປັນແນວນັ້ນ?" ຫຼື "ທັດສະນະຄະຕິເຫຼົ່ານີ້ ເກີດມາຈາກໃສ?"

e. ແຜນວາດຂອງຮ່າງກາຍ ຍັງສາມາດໃຊ້ເປັນເຄື່ອງມືໃນການປະເມີນຜົນ ດ້ວຍການໃຫ້ຜູ້ເຂົ້າຮ່ວມຂຽນຄຳເຫັນກ່ຽວກັບ ສິ່ງທີ່ເຂົາເຈົ້າໄດ້ຮຽນຮູ້ຕິດໄວ້ໃກ້ກັບສ່ວນຫົວ ແລະ ສິ່ງທີ່ເຂົາເຈົ້າຮູ້ສຶກຄິດໄວ້ໃກ້ກັບສ່ວນຫົວໃຈ.

## ຕົວຢ່າງການສ້າງແຜນວາດຂອງຮ່າງກາຍ







## ການນຳໃຊ້ ແລະ ການດັດປັບຂອງເຄື່ອງມື

| ການດັດປັບແຜນວາດຂອງຮ່າງກາຍຕາມຂັ້ນຕອນໃນວົງຈອນຂອງຂະບວນການ SAA |
|---|
| **ການປັບປຸງຄວາມສາມາດຂອງພະນັກງານ** |
| ສາມາດນຳໃຊ້ເພື່ອເຂົ້າໃຈກ່ຽວກັບຄວາມຮູ້, ທັກສະ ແລະ ທັດສະນະຄະຕິ ຂອງພະນັກງານໃນຫົວຂໍ້ຕ່າງໆ ຕາມທີ່ໄດ້ລະບຸໄວ້ໃນເບື້ອງຕົ້ນຂອງເຄື່ອງມື ແຕ່ຍັງສາມາດລະບຸໃຫ້ເຫັນລັກສະນະ ແລະ ທັກສະ ຂອງຜູ້ອຳນວຍຄວາມສະດວກທີ່ເກັ່ງໄດ້ອີກດ້ວຍ. ເຄື່ອງມືນີ້ມີປະສິດທິຜົນ ສຳລັບການເພີ່ມຄວາມສະບາຍໃຈ ແລະ ຄວາມຕ້ອງການຂອງພະນັກງານ ເພື່ອອຳນວຍຄວາມສະດວກໃນການສົນທະນາກ່ຽວກັບ ບັນຫາທີ່ລະອຽດອ່ອນ; ຊ່ວຍເຂົາເຈົ້າໃຫ້ເຂົ້າໃຈກ່ຽວກັບຄວາມລຳອຽງ ແລະ ຂໍ້ຈຳກັດ ຂອງຕົນເອງ ໃນການແກ້ໄຂບັນຫາທີ່ລະອຽດອ່ອນ ເຊັ່ນ: ຄວາມເພິ່ງພໍໃຈ, ອຳນາດ ແລະ ຄວາມຮຸນແຮງ ເຊິ່ງເປັນສ່ວນໜຶ່ງຂອງຄວາມສຳພັນຂອງມະນຸດ. |
| **ການຖອດຖອນບົດຮຽນກັບຊຸມຊົນ** |
| ມັນສາມາດໃຊ້ເພື່ອຖອດຖອນບົດຮຽນກ່ຽວກັບປະສົບການຕ່າງໆ ເຊັ່ນ: ການມີເພດສຳພັນ, ຄວາມເພິ່ງພໍໃຈ, ອຳນາດ, ອາລົມ, ຄວາມຮຸນແຮງ, ບັນທັດຖານທາງສັງຄົມ, ພະຍາດ, ແລະ ອື່ນໆ. ມັນຍັງຊ່ວຍໃຫ້ຜູ້ຄົນລະນຶກວ່າ, ໃນຖານະທີ່ເປັນມະນຸດ, ທັງແມ່ຍິງ ແລະ ຜູ້ຊາຍ ມີຄວາມຕ້ອງການທີ່ຄ້າຍຄືກັນ ແລະ ປະສົບກັບສິ່ງທ້າທາຍທີ່ຄ້າຍຄືກັນ ແລະ ແຕກຕ່າງກັນ ຕໍ່ກັບຄວາມເພິ່ງພໍໃຈ, ຄວາມເຈັບປວດ ແລະ ຄວາມຮຸນແຮງ (ທາງອາລົມ, ຮ່າງກາຍ, ຈິດໃຈ). |
| **ການຕິດຕາມ ແລະ ການປະເມີນຜົນ** |
| ເຄື່ອງມືດັ່ງກ່າວ ສາມາດນຳໃຊ້ໃນຈຸດທີ່ແຕກຕ່າງກັນ ໃນການຈັດຕັ້ງປະຕິບັດຂອງໂຄງການ ເພື່ອຕິດຕາມການປ່ຽນແປງຂອງຄວາມຮັບຮູ້ ແລະ ປະສົບການຂອງຜູ້ເຂົ້າຮ່ວມ. ຍົກຕົວຢ່າງ, ເມື່ອຜູ້ເຂົ້າຮ່ວມສັງເກດເຫັນຈຸດໜຶ່ງຂອງ "ຄວາມອັບອາຍ" ຫຼື ສະຖານທີ່ຂອງ "ຄວາມພາກພູມໃຈ", ຜູ້ອຳນວຍຄວາມສະດວກ ສາມາດພິສູດໂດຍຖາມວ່າ ນີ້ແມ່ນຄວາມຮູ້ສຶກໃໝ່ ຫຼື ສິ່ງທີ່ໄດ້ປ່ຽນໄປເມື່ອບໍ່ດົນມານີ້ບໍ່. ນອກຈາກນັ້ນ, ຜູ້ອຳນວຍຄວາມສະດວກ ແລະ ພະນັກງານໂຄງການສາມາດບັນທຶກໄດ້ຕື່ມ ຖ້າຫາກວ່າມີການລະບຸວ່າເປັນ "ຄວາມເຈັບປວດ" ຫຼື "ຄວາມອັບອາຍ" ແລະ ອາດຈະແມ່ນ "ຄວາມຮູ້ສຶກທີ່ດີ" ຫຼື "ຄວາມພາກພູມໃຈ", ດັ່ງນັ້ນ ສະໜອງຂໍ້ມູນໃຫ້ຜູ້ດຳເນີນງານ ມີຄວາມເຂົ້າໃຈກ່ຽວກັບການປ່ຽນແປງໃນ ຄວາມສາມາດຂອງຕົນເອງ, ຄວາມໝັ້ນໃຈ, ການດູໝິ່ນ, ແລະ ອາດຈະເປັນຄວາມຮຸນແຮງ. ສຸດທ້າຍ, ຜູ້ອຳນວຍຄວາມສະດວກ ສາມາດບັນທຶກການປ່ຽນແປງ ດ້ານຄວາມປາດຖະໜາ ຫຼື ຄວາມຕ້ອງການຂອງຜູ້ເຂົ້າຮ່ວມ ຫຼື ຄວາມສະດວກໃນການເວົ້າເຖິງຫົວຂໍ້ດັ່ງກ່າວເລື້ອຍໆກັບໝູ່ເພື່ອນຂອງເຂົາເຈົ້າ. ຍົກຕົວຢ່າງ: ການສັງເກດທີ່ກ່ຽວຂ້ອງກັບຈຳນວນຜູ້ເຂົ້າຮ່ວມທີ່ເວົ້າ ຫຼື ມີສ່ວນຮ່ວມໃນການສົນທະນາ. |

3.4

## ການດັດປັບແຜນວາດຂອງຮ່າງກາຍສຳລັບຂະແໜງການຕ່າງໆ

ຜູ້ອຳນວຍຄວາມສະດວກຄວນເລືອກຈຸດສຳຄັນຂອງແຜນວາດຂອງຮ່າງກາຍທີ່ກ່ຽວຂ້ອງກັບເປົ້າໝາຍ ຫຼື ຈຸດປະສົງຂອງໂຄງການ ແລະ ໂດຍຮັບຮູ້ຈາກການວິເຄາະດ້ານບົດບາດທາງເພດ ແລະ ອຳນາດ.

### ສຸຂະພາບຈະເລີນພັນ ແລະ ສິດທິຕ່າງໆ

**ຂອບເຂດຈຸດສຸມທີ່ແນະນຳສຳລັບແຜນວາດຂອງຮ່າງກາຍ:**

- ຈຸດຂອງຄວາມພາກພູມໃຈ ຫຼື ຄວາມຮູ້ສຶກທີ່ດີ ໃນລະຫວ່າງການມີເພດສຳພັນ
- ຈຸດຂອງຄວາມເຈັບປວດ, ຄວາມອັບອາຍ ຫຼື ພະຍາດ ເນື່ອງຈາກການມີເພດສຳພັນ
- ຈຸດຂອງຄວາມເຈັບປວດ, ຄວາມອັບອາຍ ຫຼື ພະຍາດ ໃນລະຫວ່າງຖືພາ (ເຈັບຫຼັງ, ເຈັບຫົວເຂົ່າ ແລະ ອື່ນໆ)
- ຈຸດຂອງຄວາມພາກພູມໃຈ ຫຼື ຄວາມຮູ້ສຶກທີ່ດີ ໃນລະຫວ່າງການຖືພາ
- ຈຸດຂອງຄວາມເຈັບປວດ, ຄວາມອັບອາຍ ຫຼື ພະຍາດ ຫຼັງຈາກເກີດລູກ
- ຈຸດຂອງຄວາມພາກພູມໃຈ ຫຼື ຄວາມຮູ້ສຶກທີ່ດີ ຫຼັງຈາກເກີດລູກ
- ຈຸດຂອງຄວາມເຈັບປວດ, ຄວາມອັບອາຍ ຫຼື ພະຍາດ ເນື່ອງຈາກການເບິ່ງແຍງລູກ/ການລ້ຽງລູກດ້ວຍນົມແມ່
- ຈຸດຂອງຄວາມພາກພູມໃຈ ຫຼື ຄວາມຮູ້ສຶກທີ່ດີ ເນື່ອງຈາກ ການເບິ່ງແຍງເດັກ
- ຈຸດຂອງຄວາມເຈັບປວດ, ຄວາມອັບອາຍ ແລະ ຄວາມໂສກເສົ້າ ຫຼື ພະຍາດ ໃນເວລາທີ່ມີປະຈຳເດືອນ
- ຈຸດຂອງຄວາມເຈັບປວດ, ຄວາມອັບອາຍ ແລະ ຄວາມໂສກເສົ້າ ຫຼື ພະຍາດຕ່າງໆ ເນື່ອງຈາກ ການເປັນພະຍາດຕິດຕໍ່ ທາງເພດສຳພັນ (STI), ຕົວຢ່າງ ໂລກເອດ HIV
- ຈຸດຂອງຄວາມເຈັບປວດ, ຄວາມອັບອາຍ ແລະ ຄວາມໂສກເສົ້າ ຫຼື ພະຍາດຕ່າງໆ ເນື່ອງມາຈາກ ການເຮັດວຽກທີ່ມີປະສິດທິຜົນ

**ຄຳຖາມແນະນຳສຳລັບການສົນທະນາ:**

- ຍ້ອນຫຍັງ ຫຼື ຍ້ອນເຫດຜົນຫຍັງພະຍາດຊະນິດນັ້ນຈຶ່ງເປັນສະເພາະແມ່ຍິງ? ຜູ້ຊາຍເທົ່ານັ້ນ?
- ຜູ້ອຳນວຍຄວາມສະດວກ ຄວນພ້ອມທີ່ຈະຊີ້ແຈງເລື່ອງລາວ ໃຫ້ຊັດເຈນ ຫຼື ຄວາມເຂົ້າໃຈຜິດໃດໆທີ່ມີກ່ຽວກັບຄວາມເຈັບປວດ ແລະ ພະຍາດທີ່ແມ່ຍິງ ແລະ ຜູ້ຊາຍໄດ້ປະສົບ

### ຄວາມເຂັ້ມແຂງດ້ານເສດຖະກິດຂອງແມ່ຍິງ

ເຄື່ອງມືນີ້ສາມາດນຳໃຊ້ເພື່ອສົນທະນາກ່ຽວກັບຄວາມຄາດຫວັງ ສຳລັບແມ່ຍິງ ແລະ ຜູ້ຊາຍທີ່ເຮັດວຽກ. ເຊິ່ງສາມາດກ່ຽວຂ້ອງກັບລັກສະນະທາງດ້ານຮ່າງກາຍ, ການແຕ່ງຕົວ, ທັດສະນະຄະຕິ, ພຶດຕິກຳ, ແລະ ອື່ນໆ.

**ຂອບເຂດຈຸດສຸມທີ່ແນະນຳສຳລັບແຜນວາດຂອງຮ່າງກາຍ:**

- ສ່ວນຂອງຮ່າງກາຍທີ່ຖືກນຳໃຊ້ສຳລັບການເຮັດວຽກ
- ຜົນກະທົບຂອງການເຮັດວຽກຕໍ່ພາກສ່ວນຕ່າງໆຂອງຮ່າງກາຍ
- ສ່ວນຂອງຮ່າງກາຍທີ່ເປັນຈຸດແຂງ ຫຼື ຈຸດອ່ອນໃນການຫາລາຍຮັບໃຫ້ກັບຄອບຄົວ
- ສ່ວນຕ່າງໆຂອງຮ່າງກາຍທີ່ໃຊ້ໃນການສ້າງລາຍຮັບ/ສ້າງລາຍໄດ້ – ໂດຍຜູ້ຊາຍ? ໂດຍແມ່ຍິງ?
- ສ່ວນຂອງຮ່າງກາຍທີ່ຖືກລະເມີດ/ຖືກຂູດຮີດ ຍ້ອນອຳນາດ/ຄວາມບໍ່ສົມດຸນທາງດ້ານເສດຖະກິດ?

### ການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ

**ຂໍ້ແນະນຳຈຸດທີ່ຄວນເອົາໃຈໃສ່ສຳລັບແຜນວາດຂອງຮ່າງກາຍ::**

- ການມີອາຫານບໍ່ພຽງພໍ ແລະ ການຂາດສານອາຫານ ມີຜົນກະທົບແນວໃດຕໍ່ສ່ວນຕ່າງໆຂອງຮ່າງກາຍ?
- ມີຈຸດໃດແດ່ ທີ່ມີຄວາມພາກພູມໃຈ/ຄວາມຮູ້ສຶກດີ ຫຼື ຄວາມເຈັບປວດ/ຄວາມອັບອາຍ ເນື່ອງຈາກການຊື້-ຂາຍໃນຕະຫຼາດ?
- ມີຈຸດໃດແດ່ ທີ່ມີຄວາມພາກພູມໃຈ/ຄວາມຮູ້ສຶກດີ ຫຼື ຄວາມເຈັບປວດ/ຄວາມອັບອາຍ ຍ້ອນແຮງງານການຜະລິດກະສິກຳ?
- ສ່ວນໃດຂອງຮ່າງກາຍເຮົາ ໄດ້ປະສົບກັບຄວາມຢູ່ດີກິນດີ ແລະ ຄວາມເຈັບປ່ວຍ?
- ສ່ວນໃດຂອງຮ່າງກາຍທີ່ແຂງແຮງ ຫຼື ອ່ອນແອ ເມື່ອຄິດກ່ຽວກັບການຈັດຫາອາຫານໃຫ້ຄອບຄົວຂອງເຮົາ?

## ການໃຊ້ແຜນວາດຂອງຮ່າງກາຍ ຕໍ່ກັບການໃຊ້ຄວາມຮຸນແຮງບົນພື້ນຖານທາງເພດ (GBV)

ການເນັ້ນບັນຫາຄວາມຮຸນແຮງ ຄວນເຮັດຢ່າງລະມັດລະວັງ ແລະ ຜູ້ອຳນວຍຄວາມສະດວກຄວນໃຫ້ແນ່ໃຈວ່າພວກເຂົາໃຊ້ວິທີການ "ບໍ່ເປັນອັນຕະລາຍ" ແລະ ກຽມພ້ອມທີ່ຈະສົ່ງຕໍ່ກໍລະນີຫາໜ່ວຍງານໃຫ້ການຊ່ວຍເຫຼືອດ້ານຄວາມຮຸນແຮງທາງເພດ ຖ້າຈຳເປັນ. ພະນັກງານໂຄງການທີ່ເຮັດວຽກກ່ຽວກັບຄວາມຮຸນແຮງບົນພື້ນຖານທາງເພດ (GBV) ຄວນໄດ້ຮັບການຝຶກອົບຮົມທັກສະ ແລະ ວິທີການເຫຼົ່ານີ້ ກ່ອນທີ່ຈະອຳນວຍຄວາມສະດວກໃນການສ້າງແຜນວາດຂອງຮ່າງກາຍ. ເຄື່ອງມືນີ້ສາມາດນຳໃຊ້ເພື່ອຊີ້ໃຫ້ເຫັນວ່າ ແມ່ຍິງ ແລະ ຜູ້ຊາຍ ປະສົບກັບຄວາມຮຸນແຮງຢູ່ໃສ ແລະ ດ້ວຍວິທີໃດ ແລະ ມັນສົ່ງຜົນກະທົບຕໍ່ຊີວິດຂອງເຂົາເຈົ້າແນວໃດແດ່.

**ຂອບເຂດຈຸດສຸມທີ່ແນະນຳສຳລັບແຜນວາດຂອງຮ່າງກາຍ:**

- ສ່ວນຂອງຮ່າງກາຍທີ່ປະສົບກັບຄວາມຮຸນແຮງ
- ຜົນກະທົບຈາກຄວາມຮຸນແຮງທາງດ້ານຮ່າງກາຍ
- ສ່ວນຂອງຮ່າງກາຍທີ່ປະສົບກັບການດູໝິ່ນ ຍ້ອນການໃຊ້ຄວາມຮຸນແຮງ
- ຮ່າງກາຍທີ່ປະສົບກັບຄວາມເຈັບປ່ວຍ ຍ້ອນການໃຊ້ຄວາມຮຸນແຮງ
- ສ່ວນຂອງຮ່າງກາຍທີ່ປະສົບກັບຄວາມເພິ່ງພໍໃຈ, ຄວາມເຈັບປວດ, ຄວາມອັບອາຍ, ຄວາມລັງກຽດ, ແລະ ອື່ນໆ.
- ບົດບາດ, ສັງຄົມ, ແລະ ບັນທັດຖານທາງດ້ານອຳນາດ ແລະ ຄວາມຄາດຫວັງຂອງຜູ້ຊາຍ ແລະ ແມ່ຍິງ ແລະ ການມີເພດສຳພັນຂອງເຂົາເຈົ້າ

**ຄຳຖາມແນະນຳສຳລັບການສົນທະນາ:**

- ປະສົບການຂອງຄວາມຮຸນແຮງ ແມ່ນແຕກຕ່າງກັນສຳລັບຜູ້ຊາຍ ແລະ ແມ່ຍິງບໍ່?
- ຄວາມຮຸນແຮງໃນບາງກໍລະນີມີເຫດຜົນພຽງພໍບໍ່ ໃນຂະນະທີ່ກໍລະນີອື່ນໆບໍ່ມີ?
- ຄວາມຮຸນແຮງຕໍ່ບາງສ່ວນຂອງຮ່າງກາຍ ເປັນທີ່ຍອມຮັບໄດ້ຫຼາຍກວ່າດ້ານອື່ນໆບໍ່? ຖ້າແມ່ນ, ຍ້ອນຫຍັງ? ແມ່ນໃຜກຳນົດຄວາມແຕກຕ່າງດັ່ງກ່າວ?
- ມີເຫດຜົນອັນໃດ ທີ່ແມ່ຍິງຕ້ອງປະສົບກັບຄວາມດູຖູກ ຫຼື ຄວາມເຈັບປວດ ດ້ວຍວິທີສະເພາະໃດໜຶ່ງ ເນື່ອງຈາກການໃຊ້ຄວາມຮຸນແຮງບົນພື້ນຖານທາງເພດ?

# 5. ການວິເຄາະຕົ້ນໄມ້ບັນຫາ - Problem Tree Analysis

## ຈຸດປະສົງຂອງເຄື່ອງມື

ເພື່ອໃຫ້ເຂົ້າໃຈຢ່າງເລິກເຊິ່ງຕໍ່ກັບສາເຫດຕົ້ນຕໍຂອງບັນຫາສະເພາະ ແລະ ແກ້ໄຂ ແລະ ວິເຄາະຫາສາເຫດພື້ນຖານທີ່ກ່ຽວຂ້ອງກັບບົດບາດທາງເພດ, ບັນທັດຖານທາງສັງຄົມ ແລະ ອໍານາດ ແລະ ຄວາມເຊື່ອຖື.

## ເວລາປະຕິບັດ

1 ຊົ່ວໂມງ

## ອຸປະກອນ ແລະ ການກະກຽມອື່ນໆທີ່ຈໍາເປັນ

ເຈ້ຍແຜ່ນໃຫຍ່, ບິກເມີດຫຼາຍສີ ຫຼື ສໍສີ, ບັດຄໍາ, ໄມ້ບັນທັດ, ສະກອັດເຈ້ຍ.

## ຂັ້ນຕອນ (ວິທີການນໍາໃຊ້ເຄື່ອງມື)

1. ຕ້ອນຮັບຜູ້ເຂົ້າຮ່ວມ ແລະ ອະທິບາຍຈຸດປະສົງຂອງເຄື່ອງມື.
2. ແຕ້ມຮູບຕົ້ນໄມ້ຂະໜາດໃຫຍ່, ໃນລໍາຕົ້ນຂຽນບັນຫາທີ່ສໍາຄັນໃສ່ ບໍ່ວ່າຈະເປັນຂະແໜງການສະເພາະ ຫຼື ຂະແໜງການເຊື່ອມສານ ທີ່ກ່ຽວຂ້ອງກັບຜົນໄດ້ຮັບຂອງໂຄງການຂອງທ່ານ. ຕົວຢ່າງ: "ການແຕ່ງງານກ່ອນໄວ" ອາດເປັນບັນຫາທີ່ກຸ່ມໜຶ່ງຕ້ອງການທີ່ຈະແກ້ໄຂ.
3. ບອກໃຫ້ຜູ້ເຂົ້າຮ່ວມລະບຸທຸກໆສາເຫດຫຼັກຂອງບັນຫາ, ໃຫ້ແຕ້ມ ຫຼື ຂຽນບັນຫາເຫຼົ່ານັ້ນໃສ່ຕາມຮາກໃຫຍ່ຂອງຕົ້ນໄມ້ ເຊິ່ງຈະບົ່ງບອກວ່າມັນເປັນບັນຫາ "ຕົ້ນຕໍ".
4. ເລືອກໜຶ່ງໃນສາເຫດຫຼັກ ແລ້ວຖາມວ່າ "ຍ້ອນຫຍັງເຈົ້າຈຶ່ງຄິດວ່າບັນຫານີ້ເກີດຂຶ້ນ?". ຄໍາຖາມນີ້ຈະຊ່ວຍເຮົາສາມາດຈໍາແນກໃຫ້ເຫັນເຖິງສາເຫດສໍາຮອງ ຫຼື ພື້ນຖານ. ໃຫ້ຂຽນສາເຫດສໍາຮອງ ເປັນຮາກທີ່ນ້ອຍກວ່າທີ່ອອກມາຈາກຮາກໃຫຍ່ຂອງຕົ້ນໄມ້.
5. ເຮັດຊໍ້າຄືນຂັ້ນຕອນນີ້ ສໍາລັບສາເຫດຫຼັກອື່ນໆ.
6. ບອກໃຫ້ຜູ້ເຂົ້າຮ່ວມລະບຸເຖິງຜົນຫຼັກທີ່ຈະຕາມມາ/ຜົນກະທົບຂອງບັນຫາ, ຂຽນແຕ່ລະຜົນກະທົບເປັນກິ່ງໃຫຍ່ຂອງຕົ້ນໄມ້.
7. ເລືອກໜຶ່ງໃນຜົນທີ່ຕາມມາຫຼັກ/ຜົນກະທົບ. ເພື່ອລະບຸຜົນກະທົບສໍາຮອງ ໃຫ້ຖາມວ່າ "ສິ່ງດັ່ງກ່າວຈະນໍາໄປສູ່ຜົນທີ່ຕາມມາຫຍັງອີກ?" ຂຽນຜົນກະທົບສໍາຮອງ ເປັນກິ່ງງ່ານ້ອຍທີ່ອອກມາຈາກ ສາຂາກິ່ງໃຫຍ່ກວ່າຂອງຕົ້ນໄມ້.
8. ເຮັດຊໍ້າຄືນຂັ້ນຕອນນີ້ສໍາລັບຜົນກະທົບຫຼັກອື່ນໆ.
9. ເນັ້ນຄວາມເຊື່ອ ແລະ ບັນທັດຖານທີ່ກ່ຽວຂ້ອງກັບບົດບາດທາງເພດ ທີ່ລະບຸວ່າເປັນສາເຫດ ແລະ ຜົນກະທົບ. ເພື່ອປະຕິບັດສິ່ງດັ່ງກ່າວ, ຜູ້ອໍານວຍຄວາມສະດວກສາມາດໃຊ້ຄໍາຖາມເຈາະຈົ້ມດັ່ງນີ້:
   - ຜົນກະທົບນີ້ແມ່ນສິ່ງທີ່ເກີດຂຶ້ນໂດຍສະເພາະກັບຜູ້ຊາຍ ຫຼື ແມ່ຍິງບໍ່?
   - ສາເຫດນີ້ ກ່ຽວຂ້ອງກັບສິ່ງທີ່ມີແຕ່ຜູ້ຊາຍ ຫຼື ແມ່ຍິງເທົ່ານັ້ນທີ່ເຮັດໄດ້ ຫຼື ບໍ່?
   - ທັງຜູ້ຊາຍ ແລະ ແມ່ຍິງ ໄດ້ຮັບຜົນກະທົບຈາກຜົນທີ່ຕາມມາບໍ່?
   - ມີຈັກສາເຫດ ແລະ/ຫຼື ຜົນຮ້າຍທີ່ຕິດພັນກັບບັນທັດຖານດ້ານບົດບາດທາງເພດ, ສັງຄົມ ແລະ ອໍານາດ?
   - ແມ່ນໃຜໄດ້ຮັບຄວາມລໍາບາກຫຼາຍທີ່ສຸດຍ້ອນຜົນກະທົບ? ໃຜໄດ້ຮັບຜົນປະໂຫຍດ? ຍ້ອນຫຍັງ?

3.5

### ຕົວຢ່າງຕົ້ນໄມ້ບັນຫາ




**10.** ຈົບການສົນທະນາດ້ວຍຄຳຖາມຖອດຖອນບົດຮຽນ ດັ່ງຕໍ່ໄປນີ້:

- ສາເຫດ ແລະ ຜົນກະທົບກ່ຽວຂ້ອງກັນແນວໃດ?
- ຄວາມເຊື່ອ ແລະ ບັນທັດຖານ ເປັນສາເຫດຂອງບັນຫາບໍ່?
- ປະຊາຊົນທຸກຄົນໃນຊຸມຊົນ ຮັບຮູ້ສາເຫດຂອງບັນຫາດັ່ງກ່າວບໍ່?
- ສາເຫດຕົ້ນຕໍກ່ຽວຂ້ອງກັບການຂາດຊັບພະຍາກອນ ຫຼື ການບໍລິການບໍ? ຫຼື ເປັນຍ້ອນຄວາມຄິດ ຫຼື ຄວາມເຊື່ອສະເພາະໃດໜຶ່ງ? ທັງຜູ້ຊາຍ ແລະ ແມ່ຍິງໄດ້ແລກປ່ຽນຄວາມເຊື່ອນຳກັນບໍ່?
- ແມ່ນໃຜຕອກຍ້ຳຄວາມແຕກຕ່າງເຫຼົ່ານີ້ໃນຊຸມຊົນ?
- ແມ່ນຫຍັງທີ່ສາມາດປ່ຽນແປງໄດ້? ດ້ວຍວິທີໃດ?

**11.** ແຈ້ງຜູ້ເຂົ້າຮ່ວມວ່າເລື່ອງສ່ວນຕົວ ແລະ ປະສົບການທີ່ໄດ້ແບ່ງປັນກັນ ໃນລະຫວ່າງການສົນທະນາຄວນຮັກສາໄວ້ຢູ່ໃນກຸ່ມ, ຄວນຊຸກຍູ້ໃຫ້ຜູ້ເຂົ້າຮ່ວມແບ່ງປັນບັນຫາຕ່າງໆທີ່ໄດ້ຖືກສົນທະນາ ແລະ ສິ່ງທີ່ເຂົາເຈົ້າໄດ້ຮຽນຮູ້ກັບຄອບຄົວ ແລະ ໝູ່ເພື່ອນທີ່ບໍ່ໄດ້ເຂົ້າຮ່ວມ ຖ້າຫາກເຂົາເຈົ້າຮູ້ສຶກສະບາຍໃຈຢາກຈະແບ່ງປັນ. ສຸດທ້າຍ, ບອກໃຫ້ຜູ້ເຂົ້າຮ່ວມຄິດເຖິງວິທີແກ້ໄຂສິ່ງທ້າທາຍຕ່າງໆ ທີ່ໄດ້ສົນທະນາກັນໃນລະຫວ່າງການສົນທະນາກຸ່ມ ເຊິ່ງຈະຊ່ວຍສືບຕໍ່ການສົນທະນາໃນພາກຕໍ່ໄປ.

## ຄຳແນະນຳສຳລັບຜູ້ອຳນວຍຄວາມສະດວກ

- ໃນບາງຄັ້ງໂຄງການມັກຈະແກ້ໄຂສັນຍານຂອງບັນຫາ ແທນທີ່ຈະເປັນສາເຫດຕົ້ນຕໍຂອງມັນ. ເພາະສະນັ້ນ, ບັນຫາກໍ່ຍັງມີຕໍ່ໄປ.
- ສຳລັບແຕ່ລະສາເຫດ ໃຫ້ສືບຕໍ່ຖາມຜູ້ເຂົ້າຮ່ວມວ່າ "ແຕ່ຍ້ອນຫຍັງເລື່ອງນີ້ຈຶ່ງເກີດຂຶ້ນ?" ຈົນບໍ່ສາມາດຄິດໄດ້ເພີ່ມເຕີມ. ສິ່ງດັ່ງກ່າວຈະຊ່ວຍໃຫ້ເຂົາເຈົ້າສາມາດລະບຸໃຫ້ເຫັນບັນຫາທັງໝົດທີ່ກ່ຽວຂ້ອງ ບໍ່ແມ່ນພຽງແຕ່ບັນຫາຫຼັກເທົ່ານັ້ນ.
- ກິດຈະກຳດັ່ງກ່າວນີ້ ສາມາດເກີດຄວາມສັບສົນໄດ້! ມັນຊ່ວຍໃຫ້ຄຳແນະນຳທີ່ຊັດເຈນໃນແຕ່ລະຂັ້ນຕອນ ແທນທີ່ຈະໃຫ້ຂໍ້ມູນທັງໝົດໃນເບື້ອງຕົ້ນ.

## ການນຳໃຊ້ ແລະ ການດັດປັບເຄື່ອງມື

### ການດັດປັບຕົ້ນໄມ້ບັນຫາໃນຂັ້ນຕອນທີ່ແຕກຕ່າງຕາມຂະບວນການຂອງ SAA

#### ການປັບປຸງຄວາມສາມາດຂອງພະນັກງານ

ເຄື່ອງມືດັ່ງກ່າວສາມາດນຳໃຊ້ເພື່ອໃຫ້ເຂົ້າໃຈສາເຫດຕົ້ນຕໍຂອງບັນທັດຖານບົດບາດທາງເພດ, ສັງຄົມ ແລະ ອຳນາດ ທີ່ສົ່ງຜົນກະທົບຕໍ່ພະນັກງານ ລວມທັງສະມາຊິກໃນຊຸມຊົນ.

#### ການວິເຄາະດ້ານບົດບາດທາງເພດ ແລະ ອຳນາດການຕັດສິນໃຈ

ເຄື່ອງມືດັ່ງກ່າວສາມາດນຳໃຊ້ສຳລັບການເກັບກຳຂໍ້ມູນດ້ານຄຸນນະພາບ ແລະ ການວິເຄາະ ເພື່ອວິເຄາະຫາສາເຫດຕົ້ນຕໍຂອງບັນຫາທີ່ຈະໄດ້ຮັບການແກ້ໄຂ ໂດຍຜ່ານການອອກແບບແຜນງານ.

#### ການຖອດຖອນບົດຮຽນກັບຊຸມຊົນ

ເຄື່ອງມືດັ່ງກ່າວສາມາດນຳໃຊ້ເພື່ອວິເຄາະໂດຍລວມເຖິງບັນຫາໃດໜຶ່ງ ທີ່ໃຊ້ສາຍຕາ ຫຼື ມຸມມອງຂອງບັນທັດຖານດ້ານບົດບາດທາງເພດ, ສັງຄົມ ແລະ ອຳນາດ ແລະ ຊ່ວຍສ້າງຄວາມເຂົ້າໃຈການເຊື່ອມໂຍງລະຫວ່າງສາເຫດພື້ນຖານ ແລະ ຜົນໄດ້ຮັບໃນທາງລົບ ແລະ ກະຕຸ້ນໃຫ້ຊຸມຊົນເອົາໃຈໃສ່ໃນການແກ້ໄຂສາເຫດຕົ້ນຕໍ.

#### ແຜນປະຕິບັດງານ

ເຄື່ອງມືດັ່ງກ່າວສາມາດນຳໃຊ້ເພື່ອວາງແຜນ ກ່ຽວກັບວິທີການທີ່ຊຸມຊົນຕ້ອງການທີ່ຈະແກ້ໄຂບັນຫາ. ໃນການລະບຸສາເຫດຕົ້ນຕໍ, ຊຸມຊົນຍັງສາມາດລະບຸແຜນການປະຕິບັດ ເພື່ອແກ້ໄຂສາເຫດຕົ້ນຕໍໄດ້ເຊັ່ນກັນ. ຜູ້ອຳນວຍຄວາມສະດວກ ສາມາດລວມເອົາຄຳຖາມສົນທະນາຕໍ່ໄປນີ້ ເພື່ອຊ່ວຍວາງແຜນສຳລັບການລົງມືປະຕິບັດ:

- ສາມາດເຮັດຫຍັງໄດ້ແດ່ເພື່ອແກ້ໄຂສາເຫດຕົ້ນຕໍ?
- ພວກເຮົາຈະຕັດສາເຫດເຫຼົ່ານັ້ນອອກຈາກຊຸມຊົນໄດ້ແນວໃດ?
- ທ່ານໄດ້ຄາດຄະເນລ່ວງໜ້າເຖິງຄວາມສ່ຽງໃດໆ ໃນການປະເຊີນໜ້າກັບສາເຫດຕົ້ນຕໍຂອງບັນຫານີ້ບໍ່?
- ແມ່ນໃຜທີ່ຕອກຍ້ຳ ຫຼື ສ້າງສາເຫດຂອງບັນຫາເຫຼົ່ານັ້ນໃນຊຸມຊົນ? ແມ່ນໃຜສາມາດສົ່ງເສີມການປ່ຽນແປງ?
- ເຮົາສາມາດຕັດ ຫຼື ປ່ຽນແປງສາເຫດໄດ້ບໍ? ສາມາດເຮັດຫັຍງໄດ້?

### ການດັດປັບຕົ້ນໄມ້ບັນຫາສຳລັບຂະແໜງການຕ່າງໆ

ຖ້າຜູ້ອຳນວຍຄວາມສະດວກໃຫ້ໂຈດຂອງບັນຫາ (ເນື່ອງຈາກບໍ່ໄດ້ລະດົມຄວາມຄິດກັບຜູ້ເຂົ້າຮ່ວມເພື່ອຊອກຫາບັນຫາ) ໂຈດ ຫຼື ບັນຫານັ້ນ ຄວນເອົາມາຈາກຜົນຂອງການສຳຫຼວດຂໍ້ມູນພື້ນຖານ ແລະ/ຫຼື ການວິເຄາະດ້ານບົດບາດທາງເພດ ແລະ ອຳນາດ.

#### ສຸຂະພາບຈະເລີນພັນ ແລະ ສິດທິຕ່າງໆ (SRHR)

**ໂຈດ ຫຼື ບັນຫາສະເພາະກ່ຽວກັບສຸຂະພາບຈະເລີນພັນ ແລະ ສິດທິຕ່າງໆ:**

- **ການນຳໃຊ້ບໍລິການດ້ານສຸຂະພາບຈະເລີນພັນ ມີຂໍ້ຈຳກັດ ໂດຍເດັກໄວໜຸ່ມ/ຊາວໜຸ່ມ**
- **ຄວາມຫຍຸ້ງຍາກໃນຊ່ວງມີການຖືພາ; ຊ່ວງການເກີດລູກ**
- **ຄວາມຫ່າງຂອງການເກີດມີລູກມີຂໍ້ຈຳກັດ**
- **ການແຕ່ງດອງກ່ອນໄວອາຍຸ**
- **ການຖືພາທີ່ບໍ່ຕ້ອງການ/ບໍ່ໄດ້ວາງແຜນ**
- **ການຮ່ວມເພດກ່ອນໄວອາຍຸ**
- **ການເປັນແມ່ກ່ອນໄວ**
- **ອັດຕາການຕິດເຊື້ອພະຍາດລະບົບຖ່າຍເທອັກເສບ ມີສູງໃນແມ່ຍິງ**
- **ການທຳຄວາມສະອາດຂອງແມ່ຍິງ ແລະ/ຫຼື ເດັກຍິງ ຍັງຕ່ຳ ເວລາມີປະຈຳເດືອນ**
- **ອັດຕາການອອກໂຮງຮຽນຂອງເດັກຍິງ**
- **ອັດຕາການຕາຍຂອງແມ່ສູງ**
- **ຂາດເຂີນການບໍລິການສຸຂະພາບແມ່ທີ່ມີຄຸນນະພາບ**

3.5

## ຄວາມເຂັ້ມແຂງດ້ານເສດຖະກິດຂອງແມ່ຍິງ (WEE)

ໂຈດ ຫຼື ບັນຫາສະເພາະກ່ຽວກັບຄວາເຂັ້ມແຂງດ້ານເສດຖະກິດຂອງແມ່ຍິງ:

- ການເພິ່ງພາອາໄສທາງດ້ານການເງິນຂອງແມ່ຍິງທີ່ມີຕໍ່ຜູ້ຊາຍ
- ແມ່ຍິງບໍ່ໄດ້ຮັບອະນຸຍາດໃຫ້ເຮັດກິດຈະກໍາທາງດ້ານເສດຖະກິດໂດຍອິດສະລະ
- ເດັກຍິງຄວນໄດ້ຮັບການຝຶກອົບຮົມວິຊາຊີບ ພຽງເລັກນ້ອຍ
- ການຄວບຄຸມຂອງແມ່ຍິງຕໍ່ກັບຊັບພະຍາກອນຜົນຜະລິດ ຈໍາກັດ
- ອໍານາດການຕັດສິນໃຈຂອງແມ່ຍິງຕໍ່ກັບຊັບພະຍາກອນທາງການເງິນ ຈໍາກັດ
- ຜູ້ປະກອບການທຸລະກິດທີ່ເປັນແມ່ຍິງມີຈໍານວນໜ້ອຍ
- ແມ່ຍິງທີ່ໄດ້ຮັບການເລື່ອນຊັ້ນຕໍາແໜ່ງມີຈໍານວນໜ້ອຍ
- ເດັກຍິງບໍ່ໄດ້ຮັບການຊຸກຍູ້ ໃຫ້ເຮັດວຽກນອກເຮືອນ
- ເດັກຍິງບໍ່ສໍາເລັດການສຶກສາຊັ້ນປະຖົມ (ຫຼື ມັດທະຍົມ)

## ການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ (FNS)

ໂຈດ ຫຼື ບັນຫາສະເພາະກ່ຽວກັບການຄໍ້າປະກັນສະບຽງອາຫານ ແລະ ໂພສະນາການ:

- ຄວາມຫຍຸ້ງຍາກໃນລະຫວ່າງການຖືພາ ຫຼື ການເກີດລູກ
- ອັດຕາການເປັນໂລກເລືອດຈາງສູງໃນບັນດາແມ່ຍິງ
- ອັດຕາການຈ່ອຍຜອມສູງ ໃນບັນດາເດັກອາຍຸຕໍ່າກວ່າ 5 ປີ
- ແມ່ຍິງບໍ່ສາມາດພັກຜ່ອນໄດ້ຫຼາຍ ໃນລະຫວ່າງການຖືພາ
- ແມ່ຍິງບໍ່ສາມາດກິນອາຫານທີ່ຫຼາກຫຼາຍ ຫຼື ແຕກຕ່າງກັນໄດ້ຫຼາຍ ໃນລະຫວ່າງການຖືພາ
- ເດັກນ້ອຍບໍ່ກິນອາຫານທີ່ມາຈາກສັດ
- ສຸຂະພາບຂອງແມ່ຍິງຫຼັງເກີດລູກ ບໍ່ແຂງແຮງ
- ກໍລະນີທີ່ເປັນໂລກເບົາຫວານ ເພີ່ມຂຶ້ນ
- ເກີດພະຍາດຖອກທ້ອງສູງໃນເດັກນ້ອຍ
- ຂາດນໍ້າ ຫຼື ນໍ້າມີລາຄາແພງ
- ແມ່ຍິງມີຄວາມຫຍຸ້ງຍາກທີ່ຈະເຂົ້າເຖິງສຸກສາລາ

## ຕົ້ນໄມ້ບັນຫາສໍາລັບການວິເຄາະຄວາມຮຸນແຮງບົນພື້ນຖານທາງເພດ ແລະ ການປະເມີນຜົນ, ການຕິດຕາມ ແລະ ຮຽນຮູ້

### ການໃຊ້ຄວາມຮຸນແຮງບົນພື້ນຖານເພດ (GBV)

ຜູ້ອໍານວຍຄວາມສະດວກຄວນເອົາໃຈໃສ່ໃນການເລືອກປະໂຫຍກບັນຫາທີ່ເຫັນວ່າເປັນບັນຫາຂອງຊຸມຊົນ. ຕົວຢ່າງເຊັ່ນ: ໃນບາງຊຸມຊົນ ການຂົ່ມຂືນຄູ່ສົມລົດ ມັກຈະບໍ່ຖືວ່າເປັນບັນຫາ ເພາະເລື່ອງນີ້ຖືວ່າເປັນສິດທິຂອງຜູ້ຊາຍທີ່ມີຕໍ່ເມຍຂອງເຂົາເຈົ້າ. ດັ່ງນັ້ນ, ເລືອກໂຫຍກບັນຫາຈາກການຜົນຂອງການວິເຄາະດ້ານບົດບາດທາງເພດ ແລະ ອໍານາດ ທີ່ສະມາຊິກໃນຊຸມຊົນສະດວກໃນການເລີ່ມຕົ້ນສົນທະນາ ແລະ ຈາກນັ້ນໃຫ້ຖາມຢ່າງເຈາະຈົ້ມວ່າ, "ຍ້ອນຫຍັງສິ່ງນີ້ຈຶ່ງເກີດຂຶ້ນ" ແລະ "ມີຜົນສະທ້ອນໃນທາງລົບຕໍ່ສິ່ງດັ່ງກ່າວບໍ່"?

**ປະໂຫຍກບັນຫາສະເພາະກ່ຽວກັບຄວາມຮຸນແຮງບົນພື້ນຖານທາງເພດ:**

- ຄວາມຮຸນແຮງໃນຄອບຄົວ
- ຄວາມຮຸນແຮງຕໍ່ແມ່ຍິງ
- ການຂົ່ມຂືນ
- ການຄ້າແມ່ຍິງ ຫຼື ເດັກຍິງ
- ການຈ້າງເດັກຊາຍ ຫຼື ຊາຍໜຸ່ມເຂົ້າເປັນກຸ່ມແກ້ງ ຫຼື ກຸ່ມປະກອບອາວຸດ
- ການລວນລາມທາງເພດ (ຢູ່ຕາມຖະໜົນ, ຕະຫລາດ, ບ່ອນເຮັດວຽກ ຫຼື ໂຮງຮຽນ)
- ການແຕ່ງດອງກ່ອນໄວ
- ຄວາມສໍາພັນທີ່ເຄັ່ງຕຶງລະຫວ່າງຜົວເມຍ/ການຖຽງກັນລະຫວ່າງຜົວເມຍ ເພີ່ມຂຶ້ນ
- ການສື່ສານແບບຜິດໆລະຫວ່າງຜົວເມຍ
- ການຂ້າຕົວຕາຍ
- ຄວາມນັບຖືຕົນເອງຕໍ່າໃນບັນດາແມ່ຍິງ

### ການຕິດຕາມ, ການປະເມີນຜົນ, ແລະ ການຮຽນຮູ້ (MEL)

ເຄື່ອງມືດັ່ງກ່າວແມ່ນມີປະໂຫຍດສໍາລັບ ການວິເຄາະດ້ານບົດບາດທາງເພດ ແລະ ອໍານາດ ໃນຫຼາຍຂະແໜງການ; ປະໂຫຍກບັນຫາທີ່ນໍາໃຊ້ສາມາດເລືອກໄວ້ລ່ວງໜ້າ ຫຼື ເລືອກໂດຍຊຸມຊົນ.

ຖ້າໃຊ້ເປັນເຄື່ອງມືໃນການຕິດຕາມ (ເຊັ່ນ: ໃຊ້ໃນລະຫວ່າງການວິເຄາະດ້ານບົດບາດທາງເພດ ແລະ ອໍານາດ, ແລ້ວໃຊ້ໃນການປະເມີນໄລຍະກາງ ຫຼື ໄລຍະສຸດທ້າຍຂອງໂຄງການ), ຜູ້ອໍານວຍຄວາມສະດວກສາມາດຖາມຜູ້ເຂົ້າຮ່ວມ ຖ້າຫາກວ່າບັນຫາໄດ້ປ່ຽນແປງ, ຖ້າຫາກວ່າສາເຫດ ຫຼື ຜົນກະທົບໄດ້ປ່ຽນແປງ, ແລະ ຍ້ອນຫຍັງ.

# 6. "ຍ້ອນຫຍັງ"  "But why?"[1]

## ຈຸດປະສົງຂອງເຄື່ອງມື

ເພື່ອວິເຄາະຫາສາເຫດທີ່ເປັນພື້ນຖານຂອງບັນຫາຕ່າງໆທີ່ກ່ຽວຂ້ອງກັບບົດບາດທາງເພດ ແລະ ການມີເພດສຳພັນ ໂດຍຄຳນຶງເຖິງ ການພັດທະນາວິທີການເພື່ອແກ້ໄຂບັນຫາ

## ເວລາປະຕິບັດ

45 ນາທີ ຫາ 1 ຊົ່ວໂມງ

## ອຸປະກອນ ແລະ ການກະກຽມອື່ນໆທີ່ຈຳເປັນ

ເຈ້ຍແຜ່ນໃຫຍ່, ບິກເຟີດສີ ຫຼື ສໍສີ, ບັດຄຳ, ສະກ໋ອດເຈ້ຍ.

## ຂັ້ນຕອນ (ວິທີການນຳໃຊ້ເຄື່ອງມື)

1. ແນະນຳກິດຈະກຳໃຫ້ຜູ້ເຂົ້າຮ່ວມໂດຍການອະທິບາຍຈຸດປະສົງ
2. ແບ່ງຜູ້ເຂົ້າຮ່ວມເປັນກຸ່ມຍ່ອຍ ກຸ່ມລະປະມານ 5 ຫາ 6 ຄົນ.
3. ຜູ້ອຳນວຍຄວາມສະດວກຈະຍາຍຫົວຂໍ້ກ່ຽວກັບບັນທັດຖານທາງສັງຄົມໃຫ້ແຕ່ລະກຸ່ມເພື່ອວິເຄາະ ຫຼື ໃຫ້ແຕ່ລະກຸ່ມກຳນົດຫົວຂໍ້ບັນທັດຖານທາງສັງຄົມ ທີ່ເຂົາເຈົ້າຕ້ອງການຄົ້ນຄວ້າ. ຖ້າເປັນໄປໄດ້, ແຕ່ລະກຸ່ມຄວນຄົ້ນຄວ້າ ຫຼື ວິເຄາະຫົວຂໍ້ທີ່ແຕກຕ່າງກັນ.

   ຕົວຢ່າງຫົວຂໍ້ບັນທັດຖານທາງສັງຄົມ:

   i. ການຫ້າມເດັກຍິງ (ຫຼື ເດັກຊາຍ) ມີເພດສຳພັນກ່ອນແຕ່ງດອງ

   ii. ແມ່ຍິງຄວນເປັນຜູ້ເບິ່ງແຍງລູກແຕ່ພຽງຜູ້ດຽວ

   iii. ຜູ້ຊາຍຄວນເປັນຜູ້ຮັບຜິດຊອບໃນການຂາຍສັດລ້ຽງ
4. ໃຫ້ແຕ່ລະກຸ່ມແຕ້ມວົງກົມຢູ່ກາງເຈ້ຍແຜ່ນໃຫຍ່ ແລະ ຂຽນ ຫຼື ແຕ້ມຮູບບັນທັດຖານທາງສັງຄົມໃສ່ພາຍໃນວົງມົນເພື່ອເລີ່ມຕົ້ນການວິເຄາະ.
5. ໃຫ້ແຕ່ລະກຸ່ມສົນທະນາ "ຍ້ອນຫຍັງບັນທັດຖານດັ່ງກ່າວຈຶ່ງມີຢູ່?" ໃຫ້ຂຽນຄຳຕອບແຕ່ລະຄັ້ງ ໃສ່ໃນວົງມົນແຍກຕ່າງຫາກ ໂດຍອ້ອມຮອບວົງມົນໃຫຍ່ທີ່ຢູ່ໃຈກາງເຈ້ຍ.



1 Adapted from Checkoway, “Digging Deeper by Asking Why” 2002, http://www.wkkf.org/pubs/YouthED/Pub564.pdf

6. ເຮັດກິດຈະກຳນີ້ຊ້ຳຄືນ ສຳລັບແຕ່ລະຄຳຕອບ ແລະ ຖາມຕໍ່ໄປວ່າ "ຍ້ອນຫຍັງສິ່ງດັ່ງກ່າວຈຶ່ງເກີດຂຶ້ນ?" ຈົນກວ່າກຸ່ມຈະໝົດຄຳຕອບ ແລະ ທຸກສາເຫດຫຼັກໄດ້ຖືກລະບຸແລ້ວ.
7. ຫຼັງຈາກສຳເລັດຂັ້ນຕອນແລ້ວ ໃຫ້ແຕ່ລະກຸ່ມຍ່ອຍນຳສະເໜີແຜນວາດ "ຍ້ອນຫຍັງ" ແລະ ລິເລີ່ມການສົນທະນາພາຍໃນກຸ່ມໂດຍໃຊ້ບາງຄຳຖາມດັ່ງຕໍ່ໄປນີ້:
    - ເຫດຜົນທົ່ວໄປອັນໃດທີ່ພົບເຫັນຫຼາຍທີ່ສຸດ ສຳລັບບັນທັດຖານທີ່ໄດ້ປຶກສາຫາລືນຳກັນ? ຍ້ອນຫຍັງສິ່ງເຫຼົ່ານີ້ຈຶ່ງເຫັນຫຼາຍກ່ວາໝູ່?
    - ເຈົ້າໄດ້ຮຽນຮູ້ສິ່ງໃໝ່ໆກ່ຽວກັບບັນທັດຖານດັ່ງກ່າວຈາກກິດຈະກຳນີ້ບໍ່?
    - ບັນທັດຖານທີ່ແຕ່ລະກຸ່ມໄດ້ປຶກສານຳກັນ ມີສ່ວນພົວພັນກັນແນວໃດແດ່?
    - ມີໃຜແດ່ໄດ້ຮັບຜົນກະທົບຢ່າງຮ້າຍແຮງຈາກບັນທັດຖານດັ່ງກ່າວ?
    - ມີໃຜໄດ້ຮັບປະໂຫຍດຈາກບັນທັດຖານດັ່ງກ່າວບໍ່?
    - ມີຄວາມຈຳເປັນທີ່ຈະຕ້ອງປ່ຽນແປງບັນທັດຖານໃດໜຶ່ງ ທີ່ເຮົາໄດ້ສົນທະນາກັນບໍ່? ຍ້ອນຫຍັງ ຫຼື ຍ້ອນຫຍັງຈຶ່ງບໍ່?
    - ສາມາດເຮັດຫຍັງໄດ້ແດ່ເພື່ອປ່ຽນແປງບັນທັດຖານດັ່ງກ່າວ? ໃຜສາມາດສົ່ງເສີມການປ່ຽນແປງນີ້ໄດ້?
8. ບອກຜູ້ເຂົ້າຮ່ວມວ່າເລື່ອງສ່ວນຕົວ ແລະ ປະສົບການທີ່ໄດ້ແບ່ງປັນກັນ ໃນລະຫວ່າງການສົນທະນາ ຄວນຮັກສາໄວ້ຢູ່ໃນກຸ່ມ, ຄວນຊຸກຍູ້ໃຫ້ຜູ້ເຂົ້າຮ່ວມແບ່ງປັນບັນຫາຕ່າງໆທີ່ໄດ້ຖືກສົນທະນາ ແລະ ສິ່ງທີ່ເຂົາເຈົ້າໄດ້ຮຽນຮູ້ນີ້ ກັບຄອບຄົວ ແລະ ໝູ່ເພື່ອນທີ່ບໍ່ໄດ້ເຂົ້າຮ່ວມ ຖ້າຫາກເຂົາເຈົ້າຮູ້ສຶກສະບາຍໃຈຢາກຈະແບ່ງປັນ. ສຸດທ້າຍ, ບອກໃຫ້ຜູ້ເຂົ້າຮ່ວມຄິດເຖິງວິທີແກ້ໄຂສິ່ງທ້າທາຍຕ່າງໆ ທີ່ໄດ້ສົນທະນາກັນໃນລະຫວ່າງການສົນທະນາກຸ່ມ ເຊິ່ງຈະຊ່ວຍສືບຕໍ່ການສົນທະນາໃນພາກຕໍ່ໄປ.

## ຄຳແນະນຳສຳລັບຜູ້ອຳນວຍຄວາມສະດວກ

- ເຄື່ອງມືນີ້ຊ່ວຍໃຫ້ເຂົ້າໃຈບາງສາເຫດພື້ນຖານ, ສາເຫດທົ່ວໄປສຳລັບບັນຫາທີ່ແຕກຕ່າງກັນ. ນອກຈາກນັ້ນ ມັນຍັງຊ່ວຍລະບຸບາງບັນທັດຖານທາງສັງຄົມທົ່ວໄປທີ່ສົ່ງເສີມບາງລັກສະນະຂອງພຶດຕິກຳ ແລະ ການປະຕິບັດ.
- ໂດຍການໃຊ້ຄຳຖາມເຈາະຈົ້ມ, ຜູ້ອຳນວຍຄວາມສະດວກ ຈະຊ່ວຍວິເຄາະຫາເຫດຜົນຂອງແຕ່ລະປັດໃຈທາງສັງຄົມ ຫຼື ສິ່ງກີດຂວາງຕໍ່ພຶດຕິກຳໃນທາງບວກ.

## ການນຳໃຊ້ ແລະ ການດັດປັບຂອງເຄື່ອງມື

### ການດັດປັບເຄື່ອງມື ຍ້ອນຫຍັງ ຕາມຂັ້ນຕອນຂອງຂະບວນການ SAA

#### ການປັບປຸງຄວາມສາມາດຂອງພະນັກງານ

ມັນສາມາດນຳໃຊ້ເພື່ອຊ່ວຍໃຫ້ພະນັກງານວິເຄາະຫາສາເຫດພື້ນຖານຂອງບັນຫາ ຫຼື ສາເຫດທີ່ຕິດພັນກັບບັນຫາ ໃນລະຫວ່າງການທົບທວນຄືນຂອງພະນັກງານເອງ ຫຼື ໃນລະຫວ່າງການວິເຄາະດ້ານບົດບາດທາງເພດ ແລະ ອຳນາດ.

#### ການວິເຄາະດ້ານບົດບາດທາງເພດ ແລະ ອຳນາດ

ສາມາດນຳໃຊ້ເພື່ອວິເຄາະຫາສາເຫດຕົ້ນຕໍຂອງບັນຫາ ທີ່ໂຄງການຊອກຫາແກ້ໄຂ. ຫຼັງຈາກມີການລະບຸສາຍເຫດຕົ້ນຕໍໃນລະຫວ່າງການວິເຄາະດ້ານບົດບາດທາງເພດ ແລະ ອຳນາດ, ທີມງານໂຄງການທີ່ນຳໃຊ້ SAA ສາມາດຈັດລຳດັບຄວາມສຳຄັນຂອງສາຍເຫດດັ່ງກ່າວ ແລະ ເລືອກເຄື່ອງມືທີ່ເໝາະສົມ ເພື່ອອຳນວຍຄວາມສະດວກໃນການສົນທະນາ ແລະ ການຖອດຖອນບົດຮຽນ.

#### ການຖອດຖອນບົດຮຽນກັບຊຸມຊົນ

ເຄື່ອງມືດັ່ງກ່າວສາມາດນຳໃຊ້ເພື່ອວິເຄາະຫາສາເຫດພື້ນຖານ ຫຼື ສາເຫດທີ່ຕິດພັນກັບບັນຫາໃດໜຶ່ງໂດຍການນໃຊ້ສາຍຕາ ຫຼື ມຸມມອງດ້ານບັນທັດຖານດ້ານບົດບາດທາງເພດ, ສັງຄົມ ແລະ ອຳນາດ.

#### ແຜນປະຕິບັດງານ

ເຄື່ອງມືນີ້ສາມາດນຳໃຊ້ເພື່ອວາງຍຸດທະສາດວ່າສາຍເຫດພື້ນຖານໃດ ທີ່ຈຳເປັນຕ້ອງໄດ້ຮັບການແກ້ໄຂ ແລະ ຕ້ອງປະຕິບັດແນວໃດເພື່ອແກ້ໄຂບັນຫາ.

## ການດັດປັບ "ຍ້ອນຫຍັງ" ກັບຂະແໜງການຕ່າງໆ

ຂັ້ນຕອນຕ່າງໆຂອງເຄື່ອງມືນີ້ແມ່ນຍັງຄືເກົ່າ ບໍ່ວ່າແຜນງານສະເພາະຂອງຂະແໜງການໃດໜຶ່ງຈະນຳໃຊ້. ເຖິງຢ່າງໃດກໍ່ຕາມ, ຜູ້ອຳນວຍຄວາມສະດວກ ຄວນເລືອກບັນທັດຖານ ເພື່ອຄົ້ນຫາບັນຫາທີ່ພົບພໍ້ຈາກການວິເຄາະດ້ານບົດບາດທາງເພດ ແລະ ອຳນາດ.

### ສຸຂະພາບຈະເລີນພັນ ແລະ ສິດທິຕ່າງໆ (SRHR)

ບັນທັດຖານ**ສະເພາະກ່ຽວກັບສຸຂະພາບຈະເລີນພັນ ແລະ ສິດທິຕ່າງໆ ເພື່ອຄົ້ນຄ້ວາ**

- ເດັກຍິງຄວນເປັນສາວບໍລິສຸດເວລາແຕ່ງດອງ
- ເດັກຍິງບໍ່ມີຄຸນຄ່າ ຖ້າເຂົາບໍ່ມີພົມມະຈັນ
- ຜູ້ຊາຍບໍ່ສາມາດຄວບຄຸມການມີເພດສຳພັນຂອງເຂົາເຈົ້າໄດ້
- ສຳລັບຜູ້ຊາຍທີ່ຈະມີຄູ່ຮັກຫຼາຍຄົນແມ່ນເປັນທີ່ຍອມຮັບ
- ຖ້າຜູ້ຊາຍມີຄູ່ຮັກຫຼາຍຄົນ ລາວກໍ່ຈະຖືເປັນລູກຜູ້ຊາຍແທ້ ແລະ ໜ້າດຶງດູດໃຈ
- ແມ່ຍິງຄວນມີຄົນໄປນຳເມື່ອອອກຈາກເຮືອນ
- ແມ່ຍິງຄວນຂໍອະນຸຍາດຈາກຜົວ ເພື່ອໃຊ້ຈ່າຍເງິນໃນການປິ່ນປົວ
- ແມ່ຍິງຄວນໃຫ້ກຳເນີດລູກຢູ່ເຮືອນຫຼາຍກວ່າໃນສະຖານສຸກສາລາ
- ການໃຊ້ການຄຸມກຳເນີດເປັນບາບ
- ແມ່ຍິງທີ່ຖືຖືພາອະນາໄມ ມີປະສົບການກັບການມີເພດສຳພັນ
- ແມ່ຍິງມີຄວາມຮັບຜິດຊອບໃນການລ້ຽງລູກ
- ຜູ້ຊາຍບໍ່ຄວນເບິ່ງແຍງລູກ
- ແມ່ຍິງບໍ່ຄວນຫຼຸດຜ່ອນວຽກງານເມື່ອຖືພາ

### ຄວາມເຂັ້ມແຂງດ້ານເສດຖະກິດຂອງແມ່ຍິງ (WEE)

ບັນທັດຖານ**ສະເພາະຄວາມເຂັ້ມແຂງດ້ານເສດຖະກິດຂອງແມ່ຍິງ ເພື່ອຄົ້ນຄວ້າ**

- ແມ່ຍິງຄວນເພິ່ງພາຜູ້ຊາຍສຳລັບການດຳລົງຊີວິດຂອງເຂົາເຈົ້າ
- ແມ່ຍິງຄວນເຮັດວຽກເບົາໆ ໃນຂະນະທີ່ຜູ້ຊາຍຄວນເຮັດວຽກໜັກ ເພາະມີຄວາມເຂັ້ມແຂງ
- ຜູ້ຊາຍຄວນຈະເປັນຫຼັກໃນການຫາລ້ຽງຄອບຄົວ ຢູ່ສະເໝີ
- ແມ່ຍິງບໍ່ຄວນເຮັດກິດຈະກຳທາງດ້ານເສດຖະກິດຢ່າງເປັນອິດສະລະ
- ແມ່ຍິງຄວນເຮັດວຽກໜັກຢູ່ບ້ານ ແລະ ເຮັດໄຮ່ເຮັດນາ
- ຜູ້ຊາຍຄວນເປັນເຈົ້າຂອງຊັບສິນ
- ເດັກຍິງບໍ່ຄວນໄດ້ຮັບການສຶກສາທີ່ຊ່ວຍໃຫ້ເຂົາເຈົ້າສາມາດຈັດການກິດຈະກຳທາງດ້ານເສດຖະກິດ
- ແມ່ຍິງບໍ່ຄວນຈັດການດ້ານການເງິນໂດຍອິດສະລະ
- ແມ່ຍິງຕ້ອງໄດ້ຮັບອະນຸຍາດຈາກຜູ້ຊາຍໃນການໃຊ້ຈ່າຍເງິນ

### ການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ (FNS)

ບັນທັດຖານ**ສະເພາະການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ ເພື່ອຄົ້ນຄວ້າ**

- ແມ່ຍິງບໍ່ຄວນເປັນເຈົ້າຂອງທີ່ດິນ
- ແມ່ຍິງບໍ່ຄວນເຮັດວຽກອື່ນນອກຈາກເຮັດໄຮ່ເຮັດນາ
- ແມ່ຍິງບໍ່ຄວນຕິດຕໍ່ພົວພັນກັບວິຊາການສົ່ງເສີມກະສິກຳ
- ຜູ້ຊາຍຄວນໄດ້ຮັບອາຫານທີ່ດີທີ່ສຸດ ເພາະເປັນຫົວໜ້າຄອບຄົວ ແລະ ຜູ້ລ້ຽງຄອບຄົວ
- ແມ່ຍິງບໍ່ຄວນພັກຜ່ອນໃນລະຫວ່າງຖືພາ
- ແມ່ຍິງບໍ່ຄວນກິນອາຫານຫຼາຍ ຫຼື ແຕກຕ່າງກັນເມື່ອຖືພາ
- ແມ່ຍິງຄວນກິນເປັນຄົນສຸດທ້າຍ ເຖິງແມ່ນວ່າຈະຖືພາ
- ການຫາບນ້ຳ ແລະ ຕັດຟືນເປັນວຽກຂອງແມ່ຍິງ
- ຜູ້ຊາຍຄວນເປັນຜູ້ຕັດສິນໃຈຂັ້ນສຸດທ້າຍເມື່ອຂາຍ ຫຼື ຊື້ຊັບສິນ (ເຊັ່ນ: ເກັບກ່ຽວອາຫານ, ແນວພັນພືດ, ລ້ຽງສັດ, ອຸປະກອນ)

### ການນຳໃຊ້ເຄື່ອງມືສຳລັບການໃຊ້ຄວາມຮຸນແຮງບົນພື້ນຖານທາງເພດ (GBV)

ບັນທັດຖານ**ສະເພາະສຳລັບການໃຊ້ຄວາມຮຸນແຮງບົນພື້ນຖານທາງເພດ ເພື່ອຄົ້ນຄວ້າ**

- ຄວາມຮຸນແຮງໃນຄອບຄົວ ແມ່ນເປັນທີ່ຍອມຮັບໃນຊຸມຊົນຂອງພວກເຮົາ
- ເປັນສິ່ງທີ່ຍອມຮັບໄດ້ ທີ່ຜູ້ຊາຍຈະໃຊ້ຄວາມຮຸນແຮງເພື່ອສອນເມຍ ກ່ຽວກັບວິທີປະພຶດທີ່ຖືກຕ້ອງ
- ການດັດແປງອະໄວຍະວະເພດຍິງ ເຮັດໃຫ້ເດັກຍິງສັດຊື່
- ການດັດແປງອະໄວຍະວະເພດຍິງ ຊ່ວຍຄວບຄຸມການມີເພດສຳພັນຂອງເດັກຍິງ
- ເປັນສິ່ງທີ່ຍອມຮັບໄດ້ ທີ່ຜູ້ຊາຍຈະຮ້າຍດ່າ ຫຼື ດູຖູກເມຍ ຖ້າເຂົາປະພຶດຜິດ
- ຄວາມອາດສາມາດທີ່ຈຳກັດຂອງແມ່ຍິງ ແມ່ນເພື່ອຮັກສາໃຫ້ເຂົາເຈົ້າມີຄວາມປອດໄພ
- ຜູ້ຊາຍມີສິດທີ່ຈະມີເພດສຳພັນກັບເມຍ ເມື່ອໃດກໍ່ຕາມ ທີ່ເຂົາເຈົ້າຕ້ອງການ, ເຖິງແມ່ນວ່າ ເມຍຂອງເຂົາເຈົ້າບໍ່ຕ້ອງການ ມັນເປັນຄວາມຮັບຜິດຊອບຂອງແມ່ຍິງທີ່ຈະຕອບສະໜອງຄວາມປາຖະໜາທາງເພດຂອງຜົວ
- ເດັກຍິງຄວນແຕ່ງດອງກ່ອນອາຍຸ 17 ປີ
- ແມ່ຍິງທີ່ບໍ່ເຊື່ອຟັງຄວນຖືກລົງວິໄນດ້ວຍການຕີ/ໃຊ້ຄວາມຮຸນແຮງ
- ການທຳຮ້າຍທາງອາລົມ ເປັນສິ່ງທີ່ຍອມຮັບໄດ້ (ຕົວຢ່າງ ບໍ່ອະນຸຍາດໃຫ້ເວົ້າກັບພໍ່ແມ່; ອ້າຍເອື້ອຍນ້ອງ ຫຼື ຄົນອື່ນໆ; ການຂົ່ມຂູ່ເພື່ອໃຊ້ຄວາມຮຸນແຮງ)
- ການເອົາລູກອອກ ເປັນສິ່ງທີ່ຍອມຮັບໄດ້ ຖ້າຫາກວ່າມັນເປັນຄວາມຕັ້ງໃຈຂອງຜົວ
- ຖ້າຜູ້ຊາຍຄົນໜຶ່ງຕີເມຍ ກໍ່ສະແດງວ່າລາວຮັກເມຍຂອງລາວ

# 7. ການສ້າງແຜນວາດທາງສັງຄົມ - Social Mapping[1]

## ຈຸດປະສົງຂອງເຄື່ອງມື

ເພື່ອລະບຸ ແລະ ວິເຄາະເຖິງສະຖານທີ່ສຳຄັນ, ສະຖາບັນ ແລະ ຊັບພະຍາກອນໃນຊຸມຊົນ. ຜູ້ເປັນເຈົ້າຂອງ, ຄວບຄຸມ ແລະ ເຂົ້າເຖິງຊັບພະຍາກອນເຫຼົ່ານັ້ນ ແລະ ບັນທັດຖານທາງບົດບາດທາງເພດ, ສັງຄົມ, ແລະ ອຳນາດ ມີຜົນກະທົບແນວໃດຕໍ່ການຄວບຄຸມ, ການນຳໃຊ້ ແລະ ການເຂົ້າເຖິງ ຊັບພະຍາກອນ.

## ເວລາປະຕິບັດ

1.5 ຊົ່ວໂມງ

## ອຸປະກອນ ແລະ ການກະກຽມອື່ນໆທີ່ຈຳເປັນ

ນຳໃຊ້ ເຈ້ຍແຜ່ນໃຫຍ່, ບິກເຟີກສີ, ບັດຄຳ, ສະກ໋ອດເຈ້ຍ, ສໍສີ ຫຼື ສໍຂາວ, ຖ້າຫາກວ່າ ການສ້າງແຜນວາດ ເຮັດຢູ່ເທິງພື້ນ, ຝຸ່ນສີ ແລະ/ຫຼື ຊັບພະຍາກອນທຳມະຊາດອື່ນໆ.

## ຂັ້ນຕອນ (ວິທີການນຳໃຊ້ເຄື່ອງມື)

1. ຜູ້ອຳນວຍຄວາມສະດວກຄວນກຳນົດວ່າຜູ້ເຂົ້າຮ່ວມຄວນແບ່ງອອກເປັນກຸ່ມ ຫຼື ບໍ່ ເຊັ່ນ: ກຸ່ມທີ່ເປັນແມ່ຍິງເທົ່ານັ້ນ ແລະ ຜູ້ຊາຍເທົ່ານັ້ນ, ແບ່ງຕາມອາຍຸ ແລະ ອື່ນໆ.
2. ບອກໃຫ້ຜູ້ເຂົ້າຮ່ວມແຕ້ມແຜນວາດຂອງຊຸມຊົນເທິງພື້ນ ຫຼື ເທິງເຈ້ຍແຜ່ນໃຫຍ່. ເປັນການດີທີ່ຈະເລີ່ມຈາກສະຖານທີ່ທີ່ເຮົາກຳລັງຈັດກອງປະຊຸມກຳນີ້ ຫຼື ຈຸດອື່ນທີ່ສຳຄັນເຊັ່ນ: ເສັ້ນທາງທີ່ນຳໄປສູ່ໝູ່ບ້ານ. ອີງຕາມຈຸດປະສົງຂອງແຜນວາດ ສິ່ງດັ່ງຕໍ່ໄປນີ້ ສາມາດແຕ້ມຮູບ ຫຼື ໝາຍໃຫ້ເຫັນໄດ້ໃນແຜນວາດ, ສາມາດແຕ້ມແຕ່ລະສະຖານທີ່ ຫຼື ຈຸດທີ່ສຳຄັນທີ່ກ່ຽວຂ້ອງ ໂດຍໃຊ້ສັນຍາລັກທີ່ຊຸມຊົນສາມາດເຂົ້າໃຈໄດ້ງ່າຍ:
    - ຖະໜົນຫົນທາງ, ຮ່ອງລະບາຍນ້ຳ ແລະ ໂຄງຮ່າງພື້ນຖານອື່ນໆ
    - ສະຖາບັນທີ່ສຳຄັນຂອງລັດຖະບານ ແລະ ເອກະຊົນ ເຊັ່ນ: ສຸກສາລາ, ໂຮງໝໍ, ໂຮງຮຽນ, ເຮືອນນາຍບ້ານ/ແນວໂຮມ/ສະຫະພັນແມ່ຍິງ, ຫ້ອງການບ້ານ, ແຫຼ່ງນ້ຳດື່ມສາທາລະນະ, ສາຍໄຟຟ້າ, ຕະຫຼາດ, ຮ້ານຄ້າ, ວັດ ຫຼື ສູນສາສະໜາ ແລະ ອື່ນໆ
    - ຄົວເຮືອນແຕ່ລະຫຼັງ ໃຫ້ລະບຸໂດຍເປັນປະເພດສະເພາະ ເພື່ອເຂົ້າໃຈການແຜ່ຂະຫຍາຍຂອງກຸ່ມເປົ້າໝາຍ ເຊັ່ນ: ຄົວເຮືອນທີ່ມີເດັກຍິງເຂົ້າໂຮງຮຽນ; ຄົວເຮືອນທີ່ມີແມ່ຍິງເປັນຫົວໜ້າຄອບຄົວ; ຄົວເຮືອນທີ່ມີແມ່ຍິງເປັນຜູ້ຫາລາຍໄດ້ຫຼັກ; ຄົວເຮືອນແບ່ງຕາມປະເພດເສດຖະກິດ (ຄອບຄົວທຸກຍາກ, ຄອບຄົວຮັ່ງມີ); ແລະ ອື່ນໆ
3. ໃຊ້ສັນຍາລັກ ຫຼື ຮູບພາບເພື່ອລະບຸໃຫ້ເຫັນແຕ່ລະສະຖາບັນ ແລະ ສະຖານທີ່ສາທາລະນະ ໃນແຜນວາດ.
4. ພາຍຫຼັງການສ້າງແຜນວາດສຳເລັດແລ້ວ ໃຫ້ໃຊ້ຄຳຖາມຖອດຖອນບົດຮຽນຕໍ່ໄປນີ້ ເພື່ອອຳນວຍຄວາມສະດວກ ໃນການສົນທະນາເປັນກຸ່ມ:
    - ມີສະຖາບັນ ແລະ ຊັບພະຍາກອນໃດທີ່ເຂົ້າເຖິງໄດ້ສະເພາະຜູ້ຊາຍ ຫຼື ແມ່ຍິງເທົ່ານັ້ນບໍ່? ຍ້ອນຫຍັງ ຫຼື ຍ້ອນຫຍັງຈຶ່ງບໍ່?
    - ມີສະຖາບັນ ຫຼື ຊັບພະຍາກອນໃດທີ່ມີແຕ່ກຸ່ມອາຍຸສະເພາະ ຫຼື ຊົນຊັ້ນວັນນະໃດໜຶ່ງເທົ່ານັ້ນທີ່ສາມາດເຂົ້າເຖິງໄດ້ບໍ່?
    - ມີພື້ນທີ່ໃດແດ່ທີ່ທັງຜູ້ຊາຍ, ແມ່ຍິງ, ເດັກຊາຍ ແລະ ເດັກຍິງ ບໍ່ສາມາດເຂົ້າເຖິງໄດ້ບໍ່? ຍ້ອນຫຍັງ?
    - ສະຖາບັນ, ຫ້ອງການຂອງຜູ້ໃຫ້ບໍລິການ ແລະ ຊັບພະຍາກອນໃດແດ່ ທີ່ມີການເຂົ້າເຖິງສະເພາະແຕ່ແມ່ຍິງ ແລະ ເດັກຍິງ?
    - ໃຜຄວບຄຸມສະຖາບັນຕ່າງໆ? ໃຜຄວບຄຸມການເຂົ້າເຖິງຊັບພະຍາກອນສາທາລະນະ?

---

1 Adapted from Tools Together Now – Section B Mapping tools: International HIV/AIDS Alliance, 2006, www.aidsalliance.org

- ສະຖາບັນ ແລະ ຊັບພະຍາກອນເຫຼົ່ານັ້ນ ເປັນປະໂຫຍດຕໍ່ແມ່ຍິງ ແລະ ຜູ້ຊາຍເທົ່າທຽມກັນບໍ່? ຍ້ອນຫຍັງ ຫຼື ຍ້ອນຫຍັງຈຶ່ງບໍ່?
- ມີບ່ອນໃດແດ່ທີ່ຄົນເຮົາບໍ່ມັກໄປ ແລະ ຍ້ອນຫຍັງຈຶ່ງບໍ່ໄປສະຖານທີ່ດັ່ງກ່າວ?
- ມີບຸກຄົນໃດໜຶ່ງສະເພາະ ທີ່ບໍ່ໄດ້ຮັບອະນຸຍາດໃຫ້ເຂົ້າເຖິງບາງສະຖານທີ່ບໍ່? ມັນເປັນອັນຕະລາຍຕໍ່ພວກເຂົາຈະໄປບ່ອນນັ້ນບໍ່? ຍ້ອນຫຍັງ?
- ມີພື້ນທີ່ສະເພາະທີ່ຄົນທຸກຍາກຂອງຊຸມຊົນອາໄສຢູ່ບໍ່? ເຂົາເຈົ້າປະສົບພົບພໍ້ກັບການຈຳແນກໃດໆບໍ່?
- ມີພື້ນທີ່ສະເພາະສຳລັບຄົນຮັ່ງມີຂອງຊຸມຊົນບໍ່?
- ສະຖານທີ່ ແລະ ຊັບພະຍາກອນໃດແດ່ ທີ່ແມ່ຍິງ ຫຼື ເດັກຍິງນຳໃຊ້ຫຼາຍທີ່ສຸດ ຫຼື ຫຼາຍກ່ວາຜູ້ຊາຍ? ຍ້ອນຫຍັງ?
- ສະຖານທີ່ ແລະ ຊັບພະຍາກອນໃດແດ່ ທີ່ຜູ້ຊາຍນຳໃຊ້ຫຼາຍທີ່ສຸດ ຫຼື ຫຼາຍກ່ວາແມ່ຍິງ? ຍ້ອນຫຍັງ?
- ມີຊ່ອງຫວ່າງ ແລະ ຄວາມຂາດເຂີນຫຍັງແດ່ໃນການບໍລິການ, ໃນດ້ານຂອງຄຸນນະພາບ ແລະ ສິ່ງທີ່ມີຢູ່?

5. ພາຍຫຼັງການສົນທະນາສຳເລັດແລ້ວ, ບອກໃຫ້ຜູ້ເຂົ້າຮ່ວມທົບທວນຄືນເຖິງສິ່ງທີ່ຕົນເອງໄດ້ຮຽນຮູ້ ຫຼື ສັງເກດເຫັນຈາກການທົດລອງປະຕິບັດ.
6. ໃນຂະນະທີ່ແຈ້ງໃຫ້ຜູ້ເຂົ້າຮ່ວມຮູ້ຂໍ້ມູນ, ເລື່ອງສ່ວນຕົວ ແລະ ປະສົບການທີ່ໄດ້ແບ່ງປັນກັນ ໃນລະຫວ່າງການສົນທະນາ ຄວນຮັກສາໄວ້ຢູ່ໃນກຸ່ມ, ຄວນຊຸກຍູ້ໃຫ້ຜູ້ເຂົ້າຮ່ວມ ແບ່ງປັນບັນຫາຕ່າງໆທີ່ໄດ້ຖືກສົນທະນາ ແລະ ສິ່ງທີ່ເຂົາເຈົ້າ ໄດ້ຮຽນຮູ້ ກັບຄອບຄົວ ແລະ ໝູ່ເພື່ອນທີ່ບໍ່ໄດ້ເຂົ້າຮ່ວມ ຖ້າຫາກເຂົາເຈົ້າຮູ້ສຶກສະບາຍໃຈຢາກຈະແບ່ງປັນ. ສຸດທ້າຍ, ບອກໃຫ້ຜູ້ເຂົ້າຮ່ວມຄິດເຖິງວິທີແກ້ໄຂກັບສິ່ງທ້າທາຍຕ່າງໆ ທີ່ໄດ້ສົນທະນາກັນໃນລະຫວ່າງການສົນທະນາກຸ່ມ ເຊິ່ງຈະຊ່ວຍສືບຕໍ່ການສົນທະນາໃນພາກຕໍ່ໄປ.

## ຄຳແນະນຳສຳລັບຜູ້ອຳນວຍຄວາມສະດວກ

ການສ້າງແຜນວາດທາງສັງຄົມຊ່ວຍໃຫ້ຊຸມຊົນສະທ້ອນໃຫ້ເຫັນການເຂົ້າເຖິງ ແລະ ການນຳໃຊ້ຊັບພະຍາກອນ ແລະ ການບໍລິການ ແລະ ຄວາມອາດສາມາດຂອງປະຊາຊົນໃນຊຸມຊົນ ແລະ ມັນເປັນປະໂຫຍດໃນການເລີ່ມຕົ້ນ ການສົນທະນາກ່ຽວກັບບັນທັດຖານດ້ານບົດບາດທາງເພດ, ສັງຄົມ ແລະ ອຳນາດ.

ຖ້າຜູ້ເຂົ້າຮ່ວມຖືກແບ່ງອອກເປັນກຸ່ມແຍກຕາມເພດ, ການສົນທະນາສາມາດສຸມໃສ່ແຜນວາດທາງສັງຄົມ ຈາກມຸມມອງຂອງຜູ້ຊາຍ ແລະ ຂອງແມ່ຍິງ, ສິ່ງເຫຼົ່ານີ້ແຕກຕ່າງກັນແນວໃດ, ຄວາມແຕກຕ່າງເຫຼົ່ານີ້ແມ່ນຫຍັງ ແລະ ຍ້ອນຫຍັງ. ປະຕິບັດຄ້າຍຄືກັນ, ສາມາດຈັດແບ່ງກຸ່ມຕາມອາຍຸທີ່ແຕກຕ່າງກັນ ຫຼື ກຸ່ມທີ່ແຕ່ງດອງແລ້ວ ແລະ ບໍ່ທັນແຕ່ງດອງ ເພື່ອສົນທະນາໃນປະເດັນທີ່ຄ້າຍຄືກັນໃນແຜນວາດ.

## ຕົວຢ່າງການສ້າງແຜນວາດທາງສັງຄົມ



## ການນຳໃຊ້ ແລະ ການດັດປັບຂອງເຄື່ອງມື

### ການດັດປັບແຜນວາດທາງສັງຄົມຕາມຂັ້ນຕອນຂອງຂະບວນການ SAA

#### ການວິເຄາະດ້ານບົດບາດທາງເພດ ແລະ ອຳນາດ.

ການສ້າງແຜນວາດທາງສັງຄົມສາມາດນຳໃຊ້ເພື່ອເຂົ້າໃຈການເຂົ້າເຖິງ ແລະ ການຄວບຄຸມສະຖາບັນ ແລະ ຊັບພະຍາກອນ ແບ່ງຕາມປະຊາກອນ, ແມ່ຍິງ, ຜູ້ຊາຍ, ເດັກຍິງ ແລະ ເດັກຊາຍທີ່ດ້ອຍໂອກາດນີ້. ເຊິ່ງເປັນປະໂຫຍດ ໂດຍສະເພາະໃນການລະບຸ ແລະ ແກ້ໄຂສິ່ງກີດຂວາງຕ່າງໆທີ່ມີຕໍ່ການບໍລິການ.

#### ການຖອດຖອນບົດຮຽນກັບຊຸມຊົນ

ການສ້າງແຜນວາດທາງສັງຄົມ ຊ່ວຍໃຫ້ຊຸມຊົນແຕ້ມຮູບ ແລະ ເບິ່ງເຫັນຊຸມຊົນຂອງຕົນເອງຕາມທີ່ເປັນຢູ່, ຊ່ວຍໃຫ້ເກີດການສົນທະນາກ່ຽວກັບຄວາມບໍ່ສະເໝີພາບ. ສິ່ງດັ່ງກ່າວສາມາດນຳໄປສູ່ການສົນທະນາກ່ຽວກັບບັນທັດຖານດ້ານ ບົດບາດທາງເພດ ທີ່ສົ່ງຜົນກະທົບຕໍ່ການເຂົ້າເຖິງຂອງແມ່ຍິງ ແລະ ຜູ້ຊາຍ ແລະ ຄວບຄຸມການບໍລິການ, ຊັບພະຍາກອນ, ແລະ ສະຖາບັນຕ່າງໆ.

#### ແຜນປະຕິບັດງານ

ການສ້າງແຜນວາດທາງສັງຄົມ ຊ່ວຍໃຫ້ຊຸມຊົນມີຂອບເຂດການປ່ຽນແປງ ແລະ ວິທີການວາງແຜນການປ່ຽນແປງດັ່ງກ່າວ. ຄຳຖາມສົນທະນາຕໍ່ໄປນີ້ສາມາດໃຊ້ໄດ້ໃນໄລຍະແຜນປະຕິບັດງານ:

- ພວກເຮົາໄດ້ກຳນົດວ່າ ບາງສະຖາບັນ/ຊັບພະຍາກອນທີ່ສຳຄັນ ບໍ່ສາມາດເຂົ້າເຖິງແມ່ຍິງ/ຜູ້ຊາຍ/ເດັກຍິງ/ເດັກຊາຍ. ນີ້ແມ່ນສິ່ງທີ່ທ່ານຄິດວ່າສຳຄັນທີ່ຈະປ່ຽນແປງບໍ່? ຍ້ອນຫຍັງ? ຍ້ອນຫຍັງຈຶ່ງບໍ່?
- ຍ້ອນຫຍັງ ສະຖານທີ່/ຊັບພະຍາກອນດັ່ງກ່າວ ຈຶ່ງບໍ່ສາມາດເຂົ້າເຖິງໄດ້ໃນປັດຈຸບັນ?
- ຄວາມຫຍຸ້ງຍາກຕ່າງໆທີ່ຂັດຂວາງການຊ່ວຍໃຫ້ແມ່ຍິງ ສາມາດເຂົ້າເຖິງຊັບພະຍາກອນດັ່ງກ່າວ ແມ່ນຫຍັງ?
- ມີຊັບພະຍາກອນ ຫຼື ຄົນໃນຊຸມຊົນທີ່ສາມາດຊ່ວຍໃຫ້ແມ່ຍິງສາມາດເຂົ້າເຖິງໄດ້ບໍ?
- ສາມາດປະຕິບັດຂັ້ນຕອນໃດແດ່ ເພື່ອເພີ່ມການເຂົ້າເຖິງຊັບພະຍາກອນ/ການບໍລິການຂອງແມ່ຍິງ? ໃຜສາມາດຊ່ວຍເຮັດໃຫ້ການປ່ຽນແປງດັ່ງກ່າວເກີດຂຶ້ນໄດ້?

### ການດັດປັບການສ້າງແຜນວາດທາງສັງຄົມກັບຫຼາຍຂະແໜງການ

#### ສຸຂະພາບຈະເລີນພັນ ແລະ ສິດທິຕ່າງໆ

ຮັບປະກັນໃຫ້ລວມເອົາການບໍລິການກ່ຽວກັບສິດທິ ແລະ ສຸຂະພາບຈະເລີນພັນໃນການສ້າງແຜນວາດ ເຊັ່ນ:

- ໂຮງໝໍ/ຄລີນິກສຸຂະພາບ
- ສະຖານທີ່ຕັ້ງຂອງຜູ້ຊ່ວຍອອກລູກແບບດັ້ງເດີມ
- ສະຖານທີ່ຕັ້ງຂອງພະນັກງານສຸກສາລາ/ອາສາສະໝັກຂັ້ນບ້ານ

**ຄຳຖາມແນະນຳສຳລັບການສົນທະນາສະເພາະກ່ຽວກັບສິດທິ ແລະ ສຸຂະພາບຈະເລີນພັນທີ່ຈະໃຊ້ໃນລະຫວ່າງຂັ້ນຕອນທີ 5**

- ສະຖາບັນ, ຊັບພະຍາກອນ ຫຼື ການບໍລິການໃດແດ່ທີ່ມີ ສຳລັບຄວາມຕ້ອງການທາງເພດ, ການຈະເລີນພັນ, ແລະ ຄວາມຕ້ອງການດ້ານສຸຂະພາບຂອງແມ່? ມີຊັບພະຍາກອນທີ່ມີຄຸນນະພາບພຽງພໍ ເພື່ອຕອບສະໜອງຄວາມຈຳເປັນຂອງເດັກຍິງ, ແມ່ຍິງ, ຜູ້ຊາຍ ແລະ ເດັກຊາຍ ໃນຊຸມຊົນດັ່ງກ່າວບໍ່?
- ສິ່ງກີດຂວາງໃນການເຂົ້າເຖິງການບໍລິການດັ່ງກ່າວ (ຈາກຊຸມຊົນ, ສິ່ງອຳນວຍຄວາມສະດວກ ແລະ ຝ່າຍຜູ້ໃຫ້ບໍລິການ) ແມ່ນຫຍັງ?
- ສະຖາບັນ, ຜູ້ໃຫ້ບໍລິການ ແລະ ຊັບພະຍາກອນ ໃດແດ່ທີ່ສາມາດເຂົ້າເຖິງສະເພາະ ສຳລັບແມ່ຍິງ ແລະ ເດັກຍິງ?
- ທ່ານປະເມີນຄຸນນະພາບຂອງຜູ້ໃຫ້ບໍລິການຢູ່ສະຖາບັນດັ່ງກ່າວ ເປັນແນວໃດ (ດີເລີດ, ດີ, ປານກາງ, ບໍ່ດີ, ບໍ່ດີຫຼາຍ)? ຍ້ອນຫຍັງ?
- ທ່ານປະເມີນພຶດຕິກຳຂອງຜູ້ໃຫ້ບໍລິການຂອງສະຖາບັນດັ່ງກ່າວ ເປັນແນວໃດ (ດີເລີດ, ດີ, ປານກາງ, ບໍ່ດີ, ບໍ່ດີຫຼາຍ), ຍ້ອນຫຍັງ?
- ສະຖາບັນ ແລະ ຊັບພະຍາກອນດັ່ງກ່າວ ໃຫ້ຜົນປະໂຫຍດຫຍັງແດ່ ຕໍ່ແມ່ຍິງໃນຊຸມຊົນ?

## ຄວາມເຂັ້ມແຂງທາງດ້ານເສດຖະກິດຂອງແມ່ຍິງ (WEE)

ຕ້ອງຮັບປະກັນໃຫ້ໄດ້ກຳນົດເອົາຊັບພະຍາກອນ ແລະ ການບໍລິການກ່ຽວກັບຄວາມເຂັ້ມແຂງທາງດ້ານເສດຖະກິດຂອງແມ່ຍິງ ເຂົ້າໃນແຜນວາດ ເຊັ່ນ:

- ທົ່ງນາ ແລະ ທີ່ຢູ່ອາໄສຂອງສັດ
- ຕະຫຼາດທີ່ມີການຊື້ ແລະ ຂາຍຜະລິດຕະພັນ
- ຜູ້ຂາຍສິນຄ້າ
- ສະຖານທີ່ຕັ້ງຂອງນັກການຄ້າ/ພໍ່ຄ້າຄົນກາງ
- ສະຖານທີ່ຕັ້ງຂອງວິຊາການສົ່ງເສີມກະສິກຳ
- ສະຖາບັນການເງິນ (MFIs)
- ຊັບສິນຄົງທີ່ ແລະ ສິ່ງຂອງຂະໜາດໃຫຍ່ອື່ນຂອງຄົວເຮືອນ

**ຄຳຖາມແນະນຳສຳລັບສົນທະນາສະເພາະກ່ຽວກັບຄວາມເຂັ້ມແຂງທາງດ້ານເສດຖະກິດຂອງແມ່ຍິງ ທີ່ຈະໃຊ້ໃນລະຫວ່າງຂັ້ນຕອນທີ 5**

- ສະຖາບັນ, ການບໍລິການ ແລະ ຊັບພະຍາກອນໃດແດ່ທີ່ມີ ສຳລັບກິດຈະກຳທາງດ້ານເສດຖະກິດ ຫຼື ການດຳລົງຊີວິດ? ຜູ້ຊາຍ ແລະ ແມ່ຍິງເຂົ້າເຖິງສິ່ງດັ່ງກ່າວ ເທົ່າທຽມກັນບໍ່? ຍ້ອນຫຍັງ ຫຼື ຍ້ອນຫຍັງຈຶ່ງບໍ່?
- ທ່ານປະເມີນຄຸນນະພາບຂອງການບໍລິການ ໃນແງ່ຂອງສິ່ງອຳນວຍຄວາມສະດວກ ແລະ ປັດໃຈນຳເຂົ້າ (ການແນະນຳ, ການຝຶກອົບຮົມ, ຕະຫລາດ, ແນວພັນພືດ, ຝຸ່ນຂີ້ສັດ, ແຮງຈູງໃຈ, ແລະ ອື່ນໆ) ຂອງສະຖາບັນດັ່ງກ່າວ ເປັນແນວໃດ (ດີເລີດ, ດີ, ປານກາງ, ບໍ່ດີ, ບໍ່ດີຫຼາຍ)? ຍ້ອນຫຍັງ?
- ທ່ານປະເມີນຄຸນນະພາບຂອງຜູ້ໃຫ້ບໍລິການຢູ່ສະຖາບັນດັ່ງກ່າວ ເປັນແນວໃດ (ດີເລີດ, ດີ, ປານກາງ, ບໍ່ດີ, ບໍ່ດີຫຼາຍ)? ຍ້ອນຫຍັງ?

## ການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ (FNS)

ຕ້ອງຮັບປະກັນວ່າກຳນົດເອົາຊັບພະຍາກອນ ແລະ ການບໍລິການກ່ຽວກັບການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ ເຂົ້າໃນແຜນວາດ ເຊັ່ນ:

- ຕະຫຼາດ/ຊຸບເປີມາເກັດທີ່ສາມາດຊື້ອາຫານໄດ້
- ຕະຫຼາດທີ່ມີການຊື້ ແລະ ຂາຍຜະລິດຕະພັນ
- ທົ່ງນາ ແລະ ທີ່ຢູ່ອາໄສຂອງສັດ
- ສວນ
- ສູນຊາວກະສິກອນ/ສະຖານທີ່ທົດລອງສາທິດ
- ສູນໂພຊະນາການ/ການລ້ຽງເດັກທີ່ຂາດສານອາຫານ
- ສິ່ງອຳນວຍຄວາມສະດວກດ້ານສຸຂະພາບ

**ຄຳຖາມແນະນຳສຳລັບການສົນທະນາສະເພາະກ່ຽວກັບການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ ທີ່ຈະໃຊ້ໃນລະຫວ່າງຂັ້ນຕອນທີ 5**

- ຊັບພະຍາກອນທີ່ສຳຄັນທີ່ສຸດສຳລັບການຜະລິດອາຫານໃນຊຸມຊົນຂອງພວກເຮົາແມ່ນຫຍັງ? ໃຜມີການຄວບຄຸມສິ່ງດັ່ງກ່າວ? ຍ້ອນຫຍັງ?
- ສະຖາບັນ, ການບໍລິການ ແລະ ຊັບພະຍາກອນທີ່ມີເພື່ອການຜະລິດອາຫານແມ່ນຫຍັງ? ໃຜເຂົ້າເຖິງສິ່ງດັ່ງກ່າວຫຼາຍກວ່າ? ຍ້ອນຫຍັງ?
- ສະຖາບັນ, ຊັບພະຍາກອນ, ຫຼື ການບໍລິການໃດແດ່ ທີ່ນຳໃຊ້ເພື່ອໂພຊະນາການ? ໃຜເຂົ້າເຖິງສິ່ງດັ່ງກ່າວຫຼາຍກວ່າ? ຍ້ອນຫຍັງ?
- ຖ້າຜູ້ຊາຍ ຫຼື ແມ່ຍິງສາມາດເຂົ້າເຖິງສະຖາບັນ, ຊັບພະຍາກອນ ຫຼື ການບໍລິການຕ່າງໆຈຳນວນໜຶ່ງໄດ້ຫຼາຍຂຶ້ນ, ການຜະລິດອາຫານຈະໄດ້ຮັບການປັບປຸງດີຂຶ້ນບໍ່? ຫຼື ໂພຊະນາການໄດ້ຮັບການປັບປຸງບໍ່?
- ທ່ານປະເມີນຄຸນນະພາບຂອງການບໍລິການ ໃນແງ່ຂອງສິ່ງອຳນວຍຄວາມສະດວກ ແລະ ປັດໃຈນຳເຂົ້າ (ໂພຊະນາການ, ອາຫານ, ແຮງຈູງໃຈ, ການຝຶກອົບຮົມ, ແລະ ອື່ນໆ) ຂອງສະຖາບັນດັ່ງກ່າວ ເປັນແນວໃດ (ດີເລີດ, ດີ, ປານກາງ, ບໍ່ດີ, ບໍ່ດີ, ບໍ່ດີຫຼາຍ)? ຍ້ອນຫຍັງ?
- ທ່ານປະເມີນພຶດຕິກຳຂອງຜູ້ໃຫ້ບໍລິການຂອງສະຖາບັນດັ່ງກ່າວ ເປັນແນວໃດ (ດີເລີດ, ດີ, ປານກາງ, ບໍ່ດີ, ບໍ່ດີຫຼາຍ)? ຍ້ອນຫຍັງ?

## ການນຳໃຊ້ແຜນວາດທາງສັງຄົມ ສຳລັບການໃຊ້ຄວາມຮຸນແຮງບົນພື້ນຖານທາງເພດ (GBV)

ຖ້າຫາກວ່າກິດຈະກຳດັ່ງກ່າວ ຖືກປະຕິບັດໂດຍສຸມໃສ່ບັນຫາການໃຊ້ຄວາມຮຸນແຮງບົນພື້ນຖານທາງເພດ, ຂໍ້ມູນຈະຖືກນຳໃຊ້ເພື່ອຊີ້ໃຫ້ເຫັນແຜນວາດຂອງການສົ່ງຕໍ່ກໍລະນີການໃຊ້ຄວາມຮຸນແຮງບົນພື້ນຖານທາງເພດ ແລະ ເພື່ອໃຫ້ຮູ້ລະດັບຄວາມເຂົ້າໃຈ ຂອງສະມາຊິກຊຸມຊົນຕໍ່ກັບການບໍລິການທີ່ມີຢູ່ ແລະ ລະດັບການເຂົ້າເຖິງສິ່ງດັ່ງກ່າວ. ນອກຈາກນັ້ນ, ຂໍ້ມູນກ່ຽວກັບແຜນວາດທາງສັງຄົມ ແລະ ຂໍ້ມູນການວິເຄາະດັ່ງກ່າວ ສາມາດຖືກນຳໃຊ້ເພື່ອປັບປຸງຄວາມຮັບຮູ້ກ່ຽວກັບການບໍລິການດັ່ງກ່າວ ແລະ/ຫຼື ຄຸນນະພາບຂອງການບໍລິການ.

ຜູ້ອຳນວຍຄວາມສະດວກ ຄວນຮັບປະກັນວ່າການບໍລິການຕ່າງໆກ່ຽວກັບ ການໃຊ້ຄວາມຮຸນແຮງບົນພື້ນຖານທາງເພດ ແມ່ນລວມເຂົ້າຢູ່ໃນແຜນວາດ ເຊັ່ນ:

- ສູນໃຫ້ຄຳປຶກສາຄອບຄົວ
- ເຮືອນທີ່ປອດໄພສຳລັບຜູ້ເຄາະຮ້າຍຈາກການໃຊ້ຄວາມຮຸນແຮງບົນພື້ນຖານທາງເພດ
- ສະຖານທີ່ຕັ້ງບໍ່ເປັນທາງການ ບ່ອນທີ່ຜູ້ເຄາະຮ້າຍຈາກການໃຊ້ຄວາມຮຸນແຮງບົນພື້ນຖານທາງເພດ ສາມາດຂໍຄວາມຊ່ວຍເຫຼືອ
- ການບໍລິການໃຫ້ຄວາມຊ່ວຍເຫຼືອຜູ້ຖືກຄວາມຮຸນແຮງບົນພື້ນຖານທາງເພດ
- ຕຳຫຼວດ, ຜູ້ໃຫ້ການຊ່ວຍເຫຼືອດ້ານກົດໝາຍ, ການບໍລິການ ເພື່ອໄກ່ເກ່ຍຂໍ້ຂັດ

**ຄຳຖາມແນະນຳສຳລັບບການສົນທະນາສະເພາະກ່ຽວກັບການໃຊ້ຄວາມຮຸນແຮງບົນພື້ນຖານທາງເພດ ທີ່ຈະໃຊ້ໃນລະຫວ່າງຂັ້ນຕອນທີ 5**

- ມີສະຖານທີ່ໃດແດ່ ທີ່ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ຫຼື ຜູ້ຊາຍເປັນເລື່ອງປົກກະຕິທົ່ວໄປ? ຍ້ອນຫຍັງ?
- ໃຜຄວບຄຸມ ຫຼື ໄປຢ້ຽມຢາມສະຖານທີ່ດັ່ງກ່າວຫຼາຍທີ່ສຸດ? ຍ້ອນຫຍັງ?
- ໃຜໄດ້ຮັບຜົນກະທົບຫຼາຍທີ່ສຸດ ຈາກການໃຊ້ຄວາມຮຸນແຮງ ໃນສະຖານທີ່ດັ່ງກ່າວ? ຍ້ອນຫຍັງ? ເຂົາເຈົ້າໄດ້ຮັບຜົນກະທົບ ດ້ວຍວິທີໃດ?
- ສະຖາບັນ, ການບໍລິການ ແລະ ຊັບພະຍາກອນ ໃດແດ່ ທີ່ຊ່ວຍປ້ອງກັນ ຫຼື ຕອບໂຕ້ຕໍ່ການໃຊ້ຄວາມຮຸນແຮງ ຕໍ່ແມ່ຍິງ ຫຼື ຜູ້ຊາຍໃນຊຸມຊົນຂອງເຮົາ?
- ທ່ານປະເມີນຄຸນນະພາບຂອງສະຖາບັນ ຫຼື ການບໍລິການ ທີ່ປ້ອງກັນ ຫຼື ຕອບໂຕ້ຕໍ່ການໃຊ້ຄວາມຮຸນແຮງຕໍ່ ຜູ້ຊາຍ ຫຼື ແມ່ຍິງ (ດີເລີດ, ດີ,

| | |
|---|---|
| ແຍ່ງ<br>• ສິ່ງອຳນວຍຄວາມສະດວກສຸກສາລາ | ປານກາງ, ບໍ່ດີ, ບໍ່ດີຫຼາຍ)? ຍ້ອນຫຍັງ? |

# 8. ເລື່ອງເລົ່າຂອງນາງມິຈຸ - Story of Miju[1]

## ຈຸດປະສົງຂອງເຄື່ອງມື

ເພື່ອຄົ້ນຫາຂະບວນການປ່ຽນແປງ ແລະ ພັດທະນາແນວຄວາມຄິດກ່ຽວກັບວິທີການສົ່ງເສີມຂະບວນການປ່ຽນແປງ.

**ໝາຍເຫດ:** ຜ່ານການເລົ່າເລື່ອງຕາມເຕັກນິກປະດິດສ້າງຂອງກຸ່ມ, ການທົດລອງປະຕິບັດ ຈະສ້າງເລື່ອງເລົ່າ ທີ່ມີຫຼາຍຮູບແບບຂອງແມ່ຍິງໄວໜຸ່ມ ແລະ ຊອກຫາປັດໄຈທີ່ມີອິດທິພົນຕໍ່ຊີວິດຂອງລາວ ແລະ ຄວາມຕ້ອງການທີ່ຈະຕັດສິນໃຈກ່ຽວກັບຊີວິດຂອງລາວເອງ. ເລື່ອງເລົ່າໃນເຄື່ອງມືດັ່ງກ່າວນີ້ ຄວນຖືກດັດປັບເພື່ອສະທ້ອນໃຫ້ເຫັນເຖິງເນື້ອໃນ ແລະ ກ່ຽວຂ້ອງກັບຜູ້ເຂົ້າຮ່ວມ. ບາງຄໍາແນະນໍາສໍາລັບການປັບໃຊ້ເຄື່ອງມືນີ້ເຂົ້າໃນຂະແໜງການອື່ນ ແມ່ນໄດ້ກໍານົດໄວ້ຂ້າງລຸ່ມນີ້ ແລະ ຢູ່ໃນຕາຕະລາງໃນຕອນທ້າຍຂອງເຄື່ອງມືນີ້.

## ເວລາປະຕິບັດ

1 ຫາ 1.5 ຊົ່ວໂມງ

## ອຸປະກອນ ແລະ ການກະກຽມທີ່ຈໍາເປັນ

- ເຈ້ຍບັດຄໍາ 3 ສີທີ່ແຕກຕ່າງກັນ, ບິກເຝີດຫຼາຍສີ
- ໃຫ້ກະກຽມເຈ້ຍບັດຄໍາທີ່ຂຽນຫົວຂໍ້ ຫຼື ສິ່ງທີ່ຕ້ອງເຮັດໄວ້ກ່ອນການເລີ່ມເຮັດກິດຈະກໍາ (ສໍາລັບຂັ້ນຕອນທີ 5)

## ຂັ້ນຕອນ (ວິທີການນໍາໃຊ້ເຄື່ອງມື)

1. ບອກໃຫ້ຜູ້ເຂົ້າຮ່ວມນັ່ງເປັນວົງມົນ ແລະ ແນະນໍາເຄື່ອງມື. ໃຫ້ອະທິບາຍວ່າ ຜ່ານກິດຈະກໍາດັ່ງກ່າວນີ້ ພວກເຮົາຈະຄົ້ນຫາຂະບວນການປ່ຽນແປງ ແລະ ວິທີທີ່ພວກເຮົາສາມາດຊ່ວຍເຫຼືອບຸກຄົນໃດໜຶ່ງຕະຫຼອດຂະບວນການດັ່ງກ່າວໃນລະດັບທີ່ແຕກຕ່າງກັນ. ການປ່ຽນແປງ ເປັນຂະບວນການ ທີ່ສະຫຼັບຊັບຊ້ອນ, ມັນບໍ່ໄດ້ເປັນເສັ້ນຊື່, ບໍ່ແມ່ນເລື່ອງງ່າຍ ແລະ ມັນຕ້ອງໃຊ້ເວລາ. ໃນກິດຈະກໍາດັ່ງກ່າວນີ້, ພວກເຮົາຈະກວດສອບເບິ່ງຊີວິດ ຂອງ "ນາງ ມິຈຸ", ແລະ ການເດີນທາງຂອງລາວໂດຍຜ່ານຂະບວນການປ່ຽນແປງ.
2. ໃຫ້ເວົ້າເຖິງສະພາບການ, ສະພາບການສາມາດແຕກຕ່າງກັນໄດ້ໂດຍອີງຕາມສະພາບ ຫຼື ບໍລິບົດ (ສໍາລັບຂະແໜງການອື່ນໃຫ້ເບິ່ງຕົວຢ່າງ ໃນ ຕາຕະລາງ ໃນຕອນທ້າຍຂອງເຄື່ອງມືນີ້). ຕໍ່ໄປນີ້ແມ່ນກ່ຽວຂ້ອງກັບ ສິດທິ ແລະ ສຸຂະພາບຈະເລີນພັນ (SRHR):

*ນາງ ມິຈຸ ອາຍຸ 19 ປີ ເມື່ອບໍ່ດົນມານີ້ ລາວໄດ້ແຕ່ງດອງ ແຕ່ລາວຍັງບໍ່ຕ້ອງການມີລູກເທື່ອ.*

ບອກໃຫ້ຜູ້ເຂົ້າຮ່ວມສືບຕໍ່ສົນທະນາກ່ຽວກັບເລື່ອງດັ່ງກ່າວ: "ມີຫຍັງເກີດຂຶ້ນກັບ ມິຈຸ?" ໃຫ້ຍ່າງໄປອ້ອມຮອບວົງມົນ, ຊຸກຍູ້ໃຫ້ຜູ້ເຂົ້າຮ່ວມສ້າງ ເລື່ອງເລົ່າກັບການກະທໍາທີ່ ມິຈຸ ສາມາດເຮັດໄດ້ ແລະ ອຸປະສັກໃດໆທີ່ລາວອາດຈະປະສົບພົບພໍ້. ໃຫ້ຂຽນແຕ່ລະລັກສະນະຂອງເລື່ອງເລົ່າຂອງ ມິ ຈຸ ໃສ່ໃນບັດຄໍາ ແລະ ວາງໄວ້ຕາມແຕ່ລະໄລຍະເວລາ ຫຼື ຊ່ວງຊີວິດຂອງ ມິຈຸ. ການເຮັດກິດຈະກໍານີ້ ແມ່ນສາມາດແຕ້ມເປັນສັນຍາລັກ ສໍາລັບ ກຸ່ມທີ່ບໍ່ຮູ້ຫນັງສື. ແຕ່ລະການປະຕິບັດ ຄວນຂຽນໃສ່ບັດຄໍາໜຶ່ງສີ ແລະ ແຕ່ລະອຸປະສັກໃຫ້ຂຽນໃນໃສ່ໃນບັດຄໍາສີອື່ນໆ.

3. ສົ່ງເສີມຊຸກຍູ້ໃຫ້ຜູ້ເຂົ້າຮ່ວມມີຄວາມຄິດສ້າງສັນ. ຄໍາຕອບອາດເປັນໄປໄດ້ດັ່ງຕໍ່ໄປນີ້:
   - ນາງ ມິຈຸ ລົມກັບໝູ່ວ່າລາວຍັງບໍ່ຕ້ອງການມີລູກເທື່ອ (ການປະຕິບັດ)
   - ໝູ່ຂອງ ນາງ ມິຈຸ ແນະນໍາລາວໃຫ້ໃຊ້ການວາງແຜນຄອບຄົວຢ່າງລັບໆ (ການປະຕິບັດ)
   - ໝູ່ຂອງລາວແນະນໍາວິທີການວາງແຜນຄອບຄົວ (ການປະຕິບັດ)
   - ນາງ ມິຈຸ ໄດ້ພົບກັບຜູ້ໃຫ້ບໍລິການດ້ານການວາງແຜນຄອບຄົວ, ແຕ່ຜູ້ໃຫ້ບໍລິການແມ່ນມີຄວາມຫຍາບຄາຍຕໍ່ລາວ; ຜູ້ໃຫ້ບໍລິການບໍ່ເຂົ້າໃຈວ່າ ເປັນ ຫຍັງແມ່ຍິງທີ່ຍັງບໍ່ທັນມີລູກ ຈຶ່ງຢາກໃຊ້ການວາງແຜນຄອບຄົວ ແລະ ບອກນາງ ມິຈຸ ວ່າແມ່ຍິງບໍ່ຄວນສະແຫວງຫາ ການວາງແຜນຄອບຄົວຖ້າປາດສະຈາກຜົວຂອງຕົນ (ອຸປະສັກ)

---

[1] *ການດັດປັບຈາກ "ໂອຕົນ ສະເຕລາ Auntie Stella: ໄວຮຸ່ນເວົ້າເຖິງເລື່ອງການມີເພດສໍາພັນ, ຊີວິດ ແລະ ຄວາມສໍາພັນ ໃນໜ້າທີ 19 ຂອງຄູ່ມືການຝຶກອົບຮົມໃນການ ເອົາໃຈໃສ່ເບິ່ງແຍງຊາວໜຸ່ມ, ອົງການ ຈອນສະໂນ ສາກົນ (John Snow International)*

- ນາງ ມີຈຸ ໃຊ້ວິທີການຄຸມກຳເນີດແບບໜຶ່ງ ແຕ່ນາງບໍ່ມັກຜົນຂ້າງຄຽງຂອງມັນ (ອຸປະສັກ)
- ນາງ ມີຈຸ ເວົ້າກັບຜົວລາວກ່ຽວກັບເລື່ອງທີ່ລາວຍັງບໍ່ຕ້ອງການມີລູກເທື່ອ (ການປະຕິບັດ)
- ຜົວຂອງລາວຜິດຫວັງ ຜົວລາວບໍ່ຄິດວ່າແມ່ຍິງຄວນເວົ້າກ່ຽວກັບສິ່ງເຫຼົ່ານີ້ (ອຸປະສັກ)
- ຜົວເວົ້າກັບແມ່ຂອງລາວ (ການປະຕິບັດ)
- ຜົວຂອງ ນາງ ມີຈຸ ຕີລາວ (ອຸປະສັກ)
- ແມ່ຍ່າຂອງ ນາງ ມີຈຸ ເຂົ້າມາກ່ຽວຂ້ອງ ແລະ ກົດດັນລາວ (ອຸປະສັກ)
- ຜົວຂອງລາວເຫັນດີຕໍ່ການວາງແຜນຄອບຄົວ (ການປະຕິບັດ)
- ເມື່ອພວກເຂົາໄປຮອດທີ່ສຸກສາລາ ສະຖານທີ່ນັ້ນບໍ່ມີບໍລິການໃຫ້ຄຳປຶກສາໃຫ້ແກ່ຄູ່ຜົວເມຍ (ອຸປະສັກ)
- ຜົວຂອງລາວຖືກເຍາະເຍີ້ຍຢູ່ທີ່ສຸກສາລາ ຍ້ອນລາວພາ ມີຈຸ ໄປສຸກສາລາ (ອຸປະສັກ)

4. ບອກໃຫ້ຜູ້ເຂົ້າຮ່ວມຄົ້ນຄວ້າສິ່ງທີ່ສາມາດເຮັດໄດ້ເພື່ອຊ່ວຍເຫຼືອ ນາງ ມີຈຸ ຫຼື ມີມາດຕະການໃດແດ່ ທີ່ຈະສາມາດຊ່ວຍຊວຍເຫຼືອ ນາງ ມີຈຸ. ໃຫ້ຂຽນມາດຕະການດັ່ງກ່າວ ໃສ່ບັດຄຳທີ່ມີສີຕ່າງ ເພື່ອໄປວາງໄວ້ໃນໄລຍະເວລາ. ຕົວຢ່າງ:

- ນຳພາຊຸມຊົນ ສົນທະນາກ່ຽວກັບເລື່ອງການວາງແຜນຄອບຄົວ ແລະ ຄວາມເຂົ້າໃຈຜິດທີ່ນາງມີຈຸໄດ້ເຂົ້າຮ່ວມນຳ
- ອຳນວຍຄວາມສະດວກໃນການສົນທະນາ ເຄື່ອງມືວິເຄາະທາງສັງຄົມເພື່ອການປ່ຽນແປງ (SAA) ກັບຜູ້ໃຫ້ບໍລິການດ້ານສຸຂະພາບ ເພື່ອລະບຸ ແລະ ແກ້ໄຂບັນຫາຄວາມລຳອຽງ ແລະ ຄວາມເຊື່ອຖືຂອງຕົນເອງ (ລວມທັງ ສິດທິຂອງແມ່ຍິງ ໃນການຊອກຫາການວາງແຜນຄອບຄົວ)
- ຝຶກອົບຮົມຜູ້ໃຫ້ບໍລິການດ້ານສຸຂະພາບ ສຳລັບການໃຫ້ຄຳປຶກສາແກ່ຄູ່ຜົວເມຍເພື່ອວາງແຜນຄອບຄົວ
- ຈັດຕັ້ງການບໍລິການທີ່ເປັນມິດກັບຊາວໜຸ່ມ ແລະ ເປັນມິດກັບຜູ້ຊາຍ
- ສ້າງກຸ່ມສົນທະນາລະຫວ່າງແມ່ຍ່າ ກັບລູກໃພ້ທີ່ຫາກໍ່ແຕ່ງດອງໃໝ່
- ສົ່ງເສີມໃຫ້ຜູ້ຊາຍສົນທະນາເລື່ອງການວາງແຜນຄອບຄົວ ກັບຄູ່ຮັກຂອງເຂົາເຈົ້າ
- ໂຄສະນາເຜີຍແຜ່ລາຍລະອຽດຂອງສະຖານທີ່/ບຸກຄົນ ຜູ້ທີ່ສາມາດໃຫ້ການຄຸມກຳເນີດໄດ້ຢ່າງເປີດເຜີຍ

## ຕົວຢ່າງເລື່ອງເລົ່າ

**ສະພາບການ**

ນາງ ມີຈຸ  ອາຍຸ 19 ປີ ເມື່ອບໍ່ດົນມານີ້ ລາວໄດ້ແຕ່ງດອງ ແຕ່ລາວບໍ່ຕ້ອງການມີລູກເທື່ອ.

**ການປະຕິ**

1. ເປີດການສົນທະນາກັບຜົວຂອງລາວ.
2. ລົມກັບໝູ່ເພື່ອນ/ປ້າ.
3. ໄປຄລີນິກ/ໂຮງໝໍ ເພື່ອການວາງແຜນຄອບຄົວ

**ອຸປະສັກ**

1. ການຄັດຄ້ານຈາກຜົວ.
2. ຄວາມກົດດັນຈາກສະມາຊິກ ໃນຄອບຄົວ, ໝູ່
3. ຂາດຄວາມໝັ້ນໃຈທີ່ຈະເລີ່ມ ການສົນທະນາກັບຜົວ.
4. ສິ່ງກີດຂວາງທາງສາສະໜາ.
5. ນາງພະຍາບານໄດ້ຫຍາບຄາຍຕໍ່ລາວ.
6. ວິທີການຄຸມກຳເນີດເຮັດໃຫ້ລາວຮູ້ສຶກບໍ່ສະບາຍ.

**ອີງການແຄ**

1. ປູກຈິດສຳນຶກກ່ຽວກັບການວາງແຜນຄອບຄົວໂດຍການໃຊ້ເຄື່ອງມືແຜນວາດສະພາບການ.
2. ໃຫ້ຄຳປຶກສາແກ່ຄູ່ຜົວເມຍກ່ຽວກັບການຕັດສິນໃຈໃນຄອບຄົວ.
3. ອຳນວຍຄວາມສະດວກໃນການສົນທະນາ/SAA ກັບຜົວ ແລະ ຊຸມຊົນ.
4. ສ້າງຄວາມສາມາດໃຫ້ແມ່ຍິງ ເພື່ອເຈລະຈາສິດທິຂອງເຂົາເຈົ້າໃນລະດັບຄົວເຮືອນ.
5. ສ້າງຄວາມອາດສາມາດສຳລັບຜູ້ໃຫ້ບໍລິການດ້ານສຸຂະພາບ ເພື່ອສະເໜີການບໍລິການທີ່ມີຄຸນນະພາບ.
6. ສ້າງຄວາມເຂັ້ມແຂງໃນຕ່ອງໂສ້ການບໍລິຫານ ຜະລິດຕະພັນການວາງແຜນຄອບຄົວ.

5. ນຳໃຊ້ຄຳຖາມທົບທວນຄືນຕໍ່ໄປນີ້ ເພື່ອອຳນວຍຄວາມສະດວກໃນການສົນທະນາ:
   - ແມ່ຍິງ/ເດັກຍິງໃນຊຸມຊົນຂອງພວກທ່ານປະເຊີນໜ້າກັບສະພາບການທີ່ຄ້າຍຄືກັນກັບຂອງ ນາງ ມີຈຸ ບໍ່ ?
   - ມີຫຍັງເກີດຂຶ້ນກັບແມ່ຍິງ ຫຼື ເດັກຍິງໃນຊຸມຊົນ ເມື່ອປະເຊີນໜ້າກັບສະພາບການທີ່ຄ້າຍຄືກັນກັບ ນາງ ມີຈຸ?
   - ແມ່ຍິງໃນຊຸມຊົນ ສາມາດເຈລະຈາການປະຕິບັດບາງຢ່າງຕາມຄວາມພໍໃຈຂອງເຂົາເຈົ້າໄດ້ບໍ່?
   - ມີປັດໃຈຫຍັງແດ່ທີ່ ນາງ ມີຈຸ ມີໃນຕົວລາວເອງ, ໃນຄອບຄົວ ແລະ ໃນຊຸມຊົນ, ເຊິ່ງໄດ້ຊ່ວຍ ຫຼື ຂັດຂວາງ ນາງ ມີຈຸ ບໍ່ໃຫ້ບັນລຸເປົ້າໝາຍຂອງລາວ?
   - ຜູ້ຄົນຕ່າງໆໃນຊຸມຊົນຕອບໂຕ້ແນວໃດຕໍ່ສະພາບການທີ່ຄ້າຍຄືກັບຂອງ ນາງ ມີຈຸ?
   - ການຕອບໂຕ້ຂອງພວກເຂົາຊ່ວຍແກ້ໄຂບັນຫາຂອງ ນາງ ມີຈຸ ຫຼື ມັນເຮັດໃຫ້ບັນຫານີ້ຮຸນແຮງຂຶ້ນ?
6. ປິດການສົນທະນາໂດຍການຕອບຄຳຖາມທີ່ຍັງບໍ່ໄດ້ຮັບຄຳຕອບ ແລະ ແກ້ໄຂຂໍ້ມູນທີ່ຜິດພາດໃຫ້ຖືກຕ້ອງ. ອະທິບາຍວ່າການປ່ຽນແປງທີ່ກ່ຽວຂ້ອງກັບການຮຽນຮູ້, ການຄິດຢ່າງຮອບຄອບ, ສະທ້ອນໃຫ້ເຫັນເຖິງຄວາມສ່ຽງ ສຳລັບການປ່ຽນແປງພຶດຕິກຳ (ຕົວຢ່າງ: ເພື່ອຫຼີກລ້ຽງຄວາມລຳບາກຕໍ່ກັບຜົນກະທົບທາງລົບ ສຳລັບການປະຕິບັດທີ່ໄດ້ເຮັດໄປແລ້ວ), ແລະ ການຢັ້ງຢືນຈາກຊຸມຊົນຕໍ່ການປະຕິບັດ ຫຼື ພຶດຕິກຳໃໝ່ໆ. ການປ່ຽນແປງມັກຈະກ່ຽວພັນກັບການກ້າວໄປຂ້າງໜ້າ ແລະ ຖອຍຫຼັງ, ໄດ້ຮັບ ແລະ ບໍ່ໄດ້ຮັບຕາມຄວາມມຸ່ງມາດປາດຖະໜາຂອງເຮົາ.
7. ຂອບໃຈຜູ້ເຂົ້າຮ່ວມໃນການສ້າງເລື່ອງເລົ່າດັ່ງກ່າວ ແລະ ແບ່ງປັນປະສົບການຂອງຕົນ. ແຈ້ງໃຫ້ຜູ້ເຂົ້າວ່າເລື່ອງສ່ວນຕົວ ແລະ ປະສົບການທີ່ໄດ້ແບ່ງປັນກັນ ໃນລະຫວ່າງການສົນທະນາ ຄວນຮັກສາໄວ້ຢູ່ໃນກຸ່ມ, ຄວນຊຸກຍູ້ໃຫ້ຜູ້ເຂົ້າຮ່ວມ ແບ່ງປັນບັນຫາຕ່າງໆທີ່ໄດ້ຖືກສົນທະນາ ແລະ ສິ່ງທີ່ເຂົາເຈົ້າໄດ້ຮຽນຮູ້ ກັບຄອບຄົວ ແລະ ໝູ່ເພື່ອນທີ່ບໍ່ໄດ້ເຂົ້າຮ່ວມ ຖ້າຫາກເຂົາເຈົ້າຮູ້ສຶກສະບາຍໃຈຢາກຈະແບ່ງປັນ. ສຸດທ້າຍ, ບອກໃຫ້ຜູ້ເຂົ້າຮ່ວມຄິດເຖິງວິທີແກ້ໄຂກັບສິ່ງທ້າທາຍຕ່າງໆ ທີ່ໄດ້ສົນທະນາກັນໃນລະຫວ່າງການສົນທະນາກຸ່ມ ເຊິ່ງຈະຊ່ວຍສືບຕໍ່ການສົນທະນາໃນພາກຕໍ່ໄປ.

## ຄຳແນະນຳສຳລັບຜູ້ອຳນວຍຄວາມສະດວກ

- ໃນເວລາ ຜູ້ເຂົ້າຮ່ວມກຳລັງລະບຸກ່ຽວກັບມາດຕະການ ເພື່ອຊ່ວຍເຫຼືອ ນາງ ມີຈຸ, ຊຸກຍູ້ໃຫ້ເຂົາເຈົ້າລະບຸ ທັງມາດຕະການດ້ານເຕັກນິກວິຊາການ ແລະ ສັງຄົມ. ຕົວຢ່າງ, ມາດຕະການດ້ານເຕັກນິກວິຊາການ ອາດຈະລວມທັງ ຈັດຝຶກອົບຮົມໃຫ້ຜູ້ໃຫ້ບໍລິການ ຫຼື ການໃຫ້ບໍລິການ. ມາດຕະການທາງສັງຄົມ ອາດລວມເຖິງການຈັດການສົນທະນາເຄື່ອງມືວິເຄາະ ແລະ ການປ່ຽນແປງສັງຄົມ (SAA) ກັບແມ່ຍິງ ແລະ ຜູ້ຊາຍໃນຊຸມຊົນຂອງ ນາງ ມີຈຸ ຫຼື ອຳນວຍຄວາມສະດວກການສື່ສານຂອງຄູ່ຜົວເມຍ.
- ຖ້າໃຊ້ກິດຈະກຳນີ້ ເພື່ອການປ່ຽນແປງພະນັກງານ, ໃຫ້ອະທິບາຍວ່າ ໃນຖານະເປັນ ຜູ້ອຳນວຍຄວາມສະດວກ SAA, ພວກເຮົາສົ່ງເສີມປະຊາຊົນ ແລະ ຊຸມຊົນທີ່ຢູ່ໃນຂັ້ນຕອນທີ່ແຕກຕ່າງກັນ ຂອງຂະບວນການປ່ຽນແປງດັ່ງກ່າວ.

## ການນຳໃຊ້ ແລະ ການດັດປັບເຄື່ອງມື

### ການດັດປັບເລື່ອງເລົ່າຂອງນາງມີຈຸ ຕາມຂັ້ນຕອນຂອງຂະບວນການ SAA

#### ການປ່ຽນແປງພະນັກງານ

**ເລື່ອງຂອງ ນາງ ມີຈຸ ຊ່ວຍໃຫ້ພະນັກງານ ຄິດກ່ຽວກັບຂະບວນການປ່ຽນແປງສ່ວນບຸກຄົນ ຂອງສະມາຊິກຊຸມຊົນ ມາດຕະການອັນໃດທີ່ສາມາດ ນຳມາປະຕິບັດ ເພື່ອສົ່ງເສີມການປ່ຽນແປງ ທັງສ່ວນບຸກຄົນ ແລະ ສັງຄົມ.**

#### ແຜນປະຕິບັດງານ

ເລື່ອງເລົ່າ ຂອງ ນາງ ມີຈຸ ຊ່ວຍໃຫ້ຊຸມຊົນຄິດຢ່າງສ້າງສັນ ກ່ຽວກັບການປະຕິບັດເພື່ອແກ້ໄຂ ບັນທັດຖານດ້ານບົດບາດທາງເພດ, ເພື່ອສົນທະນາກ່ຽວກັບຈຸດແຂງ ແລະ ຈຸດອ່ອນຂອງບັນຫາ, ແລະ ສາມາດລະບຸຜູ້ມີສ່ວນຮ່ວມ ແລະ/ຫຼື ພັນທະມິດ ຜູ້ທີ່ອາດຈະຊ່ວຍ ຫຼື ກີດກັ້ນຂະບວນການປ່ຽນແປງ.

# ການດັດປັບເລື່ອງເລົ່າຂອງນາງມິຈຸ ສຳລັບຂະແໜງການຕ່າງໆ

## ສິດທິ ແລະ ສຸຂະພາບຈະເລີນພັນ

**ເລື່ອງເລົ່າກ່ຽວກັບສິດທິ ແລະ ສຸຂະພາບຈະເລີນພັນ:**

- ນາງ ມິຈຸ ອາຍຸ 19 ປີ ເມື່ອບໍ່ດົນມານີ້ລາວໄດ້ແຕ່ງງານ ແຕ່ບໍ່ຕ້ອງການມີລູກເທື່ອ.
- ນາງ ເຢຍ (Yia) ເປັນແມ່ຄັ້ງທຳອິດ (ແມ່ຫົວສາວ) ມີອາຍຸ 22 ປີ. ລາວໄດ້ເກີດລູກສາວຄົນໜຶ່ງ ເມື່ອໜຶ່ງເດືອນກ່ອນ. ລາວເຄີຍໄດ້ຍິນວ່າການໃຫ້ແຕ່ນົມແມ່ພຽງຢ່າງດຽວແກ່ລູກຂອງຕົນເອງ ມັນເປັນສິ່ງດີສຳລັບລູກ. ເຖິງຢ່າງໃດກໍ່ຕາມ ແມ່ຍ່າຢືນຢັນວ່າລູກຕ້ອງການນ້ຳ ເພາະຫິວນ້ຳ.
- ນາງ ບົວພາ (Bopha) ອາຍຸ 20 ປີ ລາວຍັງບໍ່ທັນແຕ່ງງານ ລາວອາໄສຢູ່ໃນເມືອງ. ລາວມີແຟນ ແລະ ເລີ່ມຢາກມີເພດສຳພັນ  ແຕ່ລາວຢ້ານຖືພາ.
- ນາງ ສັນຕິ (Shanti) ອາຍຸ 20 ປີ ລາວບໍ່ຢາກແຕ່ງດອງ ແຕ່ຄອບຄົວຂອງລາວ ໄດ້ກຳນົດວັນແຕ່ງດອງໃຫ້ລາວໄວ້ແລ້ວ.
- ຜົວຂອງນາງ ກຸນນາ (Gulnar) ບັງຄັບມີເພດສຳພັນກັບລາວ ໂດຍບໍ່ໃສ່ຖົງຢາງອານະໄມ ແລະ ບໍ່ຟັງການຄັດຄ້ານຂອງລາວ
- ນາງ ມີມີ (Me-Me) ຫາກໍ່ມີລູກ ແລະ ຕ້ອງກິນອາຫານທີ່ມີ ສຸຂະພາບດີ ແລະ ມີໂພຊະນາການ. ພໍ່ປູ່-ແມ່ຍ່າຂອງລາວຄິດວ່າ ລາວຄວນຫຼຸດຜ່ອນການກິນອາຫານ ເພື່ອໃຫ້ກັບມາມີຮູບຮ່າງດີຄືເກົ່າ.
- ແຟນຂອງຊຸນໄກ (Tsungai) ຢາກໃຫ້ລາວມີເພດສຳພັນນຳເພື່ອ ພິສູດຄວາມຮັກທີ່ມີຕໍ່ລາວ. ແຕ່ ນາງ ຊຸນໄກ ຍັງບໍ່ສະດວກທີ່ຈະມີເພດສຳພັນກັບແຟນຂອງລາວເທື່ອ.

## ຄວາມເຂັ້ມແຂງດ້ານເສດຖະກິດຂອງແມ່ຍິງ (WEE)

**ເລື່ອງເລົ່າກ່ຽວກັບຄວາມເຂັ້ມແຂງດ້ານເສດຖະກິດຂອງແມ່ຍິງ:**

- ນາງ ສັນຕິ (Shanti) ອາຍຸ 16 ປີ ລາວຕ້ອງການຫາເງິນເພື່ອລ້ຽງດູຄອບຄົວ. ລາວຍັງບໍ່ພ້ອມທີ່ຈະແຕ່ງດອງ  ແຕ່ຄອບຄົວຂອງລາວ ຢາກໃຫ້ລາວແຕ່ງດອງໃນໄວໆນີ້.
- ນາງ ໂຣຊາ (Rosa) ແລະ ຜົວຂອງລາວອາໄສຢູ່ໃນດິນຕອນນ້ອຍໆຕອນໜຶ່ງ. ຈາກລາຍການວິທະຍຸ, ນາງ ໂຣຊາ ໄດ້ຍິນຂ່າວກ່ຽວກັບເຕັກນິກໃໝ່ໆ ໃນການປູກກ້ວຍເພື່ອເພີ່ມຜົນຜະລິດ, ແຕ່ຜົວຂອງລາວບໍ່ຍອມ ປ່ຽນແປງວິທີປູກ ເພາະວ່າມັນເປັນວິທີທີ່ຄອບຄົວໄດ້ເຮັດມາຫຼາຍປີແລ້ວ.
- ນາງ ເຮືອງ (Huong) ເປັນແມ່ຍິງອາຍຸ 23 ປີ ທີ່ຍັງບໍ່ໄດ້ແຕ່ງດອງ  ລາວຕ້ອງການອອກຈາກໝູ່ບ້ານ ເພື່ອໄປເຮັດວຽກຢູ່ໃນໂຮງງານຢູ່ໃນເມືອງ ເພື່ອຫາເງິນເພີ່ມເຕີມເພື່ອລ້ຽງດູຄອບຄົວ. ເຖິງຢ່າງໃດກໍ່ຕາມ, ພໍ່ແມ່ຂອງລາວປະຕິເສດທີ່ຈະສົ່ງເສີມລາວ ເພາະເຂົາເຈົ້າກັງວົນວ່າລາວຈະກາຍເປັນ "ແມ່ຍິງບໍ່ດີ" ຖ້າລາວຢູ່ຫ່າງໄກຈາກຄອບຄົວ.
- ນາງ ລີ (Lia) ມີຄວາມຮັບຜິດຊອບໃນການເບິ່ງແຍງ ສວນກາເຟ ຂອງຄອບຄົວ ແລະ ລາວຕ້ອງການຮຽນຮູ້ເພີ່ມເຕີມກ່ຽວກັບການປູກກາເຟ ເພື່ອປັບປຸງຜົນຜະລິດ. ເຖິງຢ່າງໃດກໍ່ຕາມ, ເມື່ອວິຊາການສົ່ງເສີມກະສິກຳ ໄປຢ້ຽມຢາມໝູ່ບ້ານຂອງລາວ, ພວກເຂົາເຊີນແຕ່ຜົວຂອງລາວໄປເຂົ້າຮ່ວມການຝຶກອົບຮົມ.

## ການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ (FNS)

**ເລື່ອງເລົ່າກ່ຽວກັບການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ:**

- ນາງ ມິຈຸ ມີຊັບພະຍາກອນຈຳກັດ ເພື່ອສະໜອງ ອາຫານທີ່ມີໂພຊະນາການທີ່ດີທີ່ສຸດ ສຳລັບລູກຊາຍ ແລະ ລູກສາວຂອງລາວ. ຜົວຂອງລາວຢືນຢັນວ່າເງິນຂອງພວກເຂົາເຈົ້າ ເອົາໄວ້ໃຊ້ຈ່າຍຄ່າອາຫານສຳລັບລູກຊາຍ, ແທນທີ່ຈະເປັນລູກສາວ. ນາງ ມິຈຸ ບໍ່ເຫັນດີ.
- ນາງ ມີມີ (Me-Me) ຖືພາໄດ້ 4 ເດືອນ ແລະ ລາວຮູ້ວ່າລາວຄວນກິນ ອາຫານເພີ່ມໃນຂະນະທີ່ຖືພາ. ເຖິງຢ່າງໃດກໍ່ຕາມ, ພໍ່ປູ່ຂອງລາວຄິດວ່າ ລາວບໍ່ຄວນເຫັນແກ່ຕົວ ເມື່ອຄອບຄົວກຳລັງມີຄວາມລຳບາກທີ່ຈະລ້ຽງທຸກຄົນໃນຄອບຄົວ.
- ນາງ ກຸນນາ (Gulnar) ມີອາຍຸ 15 ປີ ແລະ ຖືພາໄດ້ 6 ເດືອນ. ພະນັກງານສຸກສາລາບອກລາວວ່າ  ລາວຕ້ອງພັກຜ່ອນໃນຕອນກາງເວັນ. ລາວກໍ່ຕ້ອງການປະຕິບັດຕາມຄຳແນະນຳຂອງພະນັກງານຜູ້ນັ້ນ ແຕ່ລາວກໍ່ບໍ່ຄິດວ່າຈະເຮັດໄດ້ ຍ້ອນວ່າລາວມີວຽກຫຼາຍຢ່າງຕ້ອງເຮັດເພື່ອເກັບກ່ຽວຜົນຜະລິດ.
- ນາງ ມາເຣຍ (Maria) ໄດ້ຮູ້ວ່າ ຈະມີການສັກຢາວັກຊີນສັດປີກ ໃນໄວໆນີ້ໃນໝູ່ບ້ານຂອງລາວ, ແຕ່ຜົວຂອງລາວເວົ້າວ່າ ຄ່າໃຊ້ຈ່າຍສູງເກີນໄປ.
- ນາງ ອຸສາ (Usha) ເປັນສາວອາຍຸ 15 ປີ ລາວມັກຫຼິ້ນກິລາ ແລະ ຕ້ອງການກິນອາຫານທີ່ມີສຸຂະພາບດີ ແລະ ມີໂພຊະນາການ ເພື່ອເປັນສ່ວນໜຶ່ງຂອງທີມກິລາ. ເຖິງຢ່າງໃດກໍ່ຕາມ, ແມ່ຂອງລາວເຊື່ອວ່າ ອາຫານທີ່ມີໂພຊະນາການເຫຼົ່ານັ້ນຄວນເກັບໄວ້ໃຫ້ລູກຊາຍ.

## ເລື່ອງເລົ່າກ່ຽວກັບການໃຊ້ຄວາມຮຸນແຮງບົນພື້ນຖານທາງເພດ (GBV)

**ເລື່ອງເລົ່າກ່ຽວກັບຄວາມຮຸນແຮງບົນພື້ນຖານທາງເພດ:**

- ນາງ ມິຈຸ ມີອາຍຸໄດ້ 12 ປີ ແລະ ການແຕ່ງດອງຂອງລາວ ໄດ້ຖືກກຳນົດໄວ້ແລ້ວກັບຜູ້ຊາຍທີ່ລາວບໍ່ມັກ. ແຕ່ລາວຍັງເດັກເກີນໄປ ທີ່ຄວາມຄິດເຫັນຂອງລາວ ຈະຖືກຍອມຮັບ.
- ນາງ ເຢຍ (Yia) ຖືກຄວາມຮຸນແຮງໃນຄອບຄົວທຸກມື້ຈາກຜົວຂອງລາວ. ລາວໄດ້ຮັບບາດເຈັບ ທັງທາງຮ່າງກາຍ ແລະ ຈິດໃຈ, ແຕ່ລາວບໍ່ແນ່ໃຈວ່າລາວຈະເຮັດແນວໃດໄດ້ແດ່.
- ນາງ ມີມີ (Me-Me) ມີອາຍຸ 20 ປີ ຍັງບໍ່ໄດ້ແຕ່ງດອງ ລາວອາໄສຢູ່ເຂດຊົນນະບົດ. ເມື່ອບໍ່ດົນມານີ້ ລາວເປັນຜູ້ເຄາະຮ້າຍຈາກການໃຊ້ຄວາມຮຸນແຮງທາງເພດ ແລະ ຕອນນີ້ ລາວຢາກຊອກຫາ ສູນບໍລິການດ້ານສຸຂະພາບ ພາຍຫຼັງໄດ້ຮັບຄວາມຮຸນແຮງ.
- ທ້າວ ໄກ່ (Kai) ຕີເອື້ອຍຂອງລາວຊື່ວ່າ ນາງ ນ້ອຍ (Noy) ເປັນປະຈຳ ຖ້າລາວຮູ້ສຶກວ່າເອື້ອຍລາວບໍ່ຟັງ. ນາງ ນ້ອຍ ຮູ້ສຶກເມື່ອຍ ແລະ ອັບອາຍ ແລະ ລາວຢາກໃຫ້ນ້ອງລາວຢຸດທຸບຕີ.
- ຜົວຂອງ ນາງ ຈັນ (Chan) ໄດ້ເຫັນລາວລົມກັບຜູ້ຊາຍອີກຄົນໜຶ່ງ ແລະ ຜົວຂອງລາວໄດ້ຕີລາວເພື່ອລົງໂທດ. ລາວໄດ້ຮັບບາດເຈັບທັງທາງຮ່າງກາຍ ແລະ ຈິດໃຈ, ແຕ່ລາວບໍ່ແນ່ໃຈວ່າ ລາວຈະເຮັດແນວໃດ.
- ນາງ ສັນຕິ (Shanti) ຖືກຂົ່ມຂືນໂດຍຜູ້ຊາຍທີ່ມີຖານະດີ ໃນໝູ່ບ້ານຂອງລາວເພື່ອເປັນການແກ້ແຄ້ນສາມີຂອງລາວ ທີ່ບັງເອີນເຂົ້າໄປໃນອ່າງລ້ຽງປາ ຂອງຜູ້ຊາຍຄົນນັ້ນ. ຜົວຂອງລາວຄິດວ່າ ລາວຄວນລືມເຫດການທີ່ເກີດຂຶ້ນ ແລະ ໃຊ້ຊີວິດປົກກະຕິຕໍ່ໄປ.

# 9. ໃຜໄດ້ຮັບຜົນກະທົບ ແລະ **ກະທົບແນວ**ໃດ - Who is Affected and How[1]

## ຈຸດປະສົງຂອງເຄື່ອງມື

ເພື່ອຄົ້ນຫາຜົນກະທົບທີ່ຕາມມາຂອງບັນທັດຖານທາງສັງຄົມ ແລະ ຜົນກະທົບຕໍ່ຊີວິດຂອງບຸກຄົນ (ຜູ້ຊາຍ ແລະ ແມ່ຍິງ) ໃນຊຸມຊົນ

## ເວລາປະຕິບັດ

1 ຫາ 1.5 ຊົ່ວໂມງ

## ອຸປະກອນ ແລະ ການກະກຽມອື່ນໆທີ່ຈຳເປັນ

- ບັດເຈ້ຍທີ່ມີສີແຕກຕ່າງກັນ, ເຈ້ຍແຜ່ນໃຫຍ່, ບິກເຟີດສີ ຫຼື ບິກໃຊ້ແຕ້ມຮູບມີຫຼາຍສີ, ບັດເຈ້ຍ, ສະກອັດຕິດເຈ້ຍ.
- ຂຶ້ນກັບຈຸດປະສົງຂອງເຄື່ອງມື, ມີຮູບຂອງແມ່ຍິງ, ຜູ້ຊາຍ, ເດັກຍິງ ຫຼື ເດັກຊາຍ ໃນບັດເຈ້ຍ ແລະ ວາງໃສ່ໃຈກາງຂອງແຜ່ນເຈ້ຍ. ຕົວຢ່າງ: ຖ້າເຄື່ອງມືໃຊ້ເພື່ອຄົ້ນຫາ ຜົນກະທົບທາງບັນທັດຖານ ຕໍ່ແມ່ຍິງ, ໃຫ້ມີຮູບຂອງແມ່ຍິງ; ສຳລັບເດັກຊາຍ ແມ່ນໃຫ້ມີຮູບຂອງເດັກຊາຍ.
- ຈັດກຽມບັດເຈ້ຍໄວ້ລ່ວງໜ້າ ເພື່ອໃຫ້ມີການຄົ້ນຫາຂອບເຂດບັນຫາ ເຊັ່ນ:
  - ພາລະບົດບາດ ແລະ ຄວາມຮັບຜິດຊອບ
  - ສຸຂະພາບຈະເລີນພັນ
  - ການຄວບຄຸມຮ່າງກາຍຂອງຄົນເຮົາ
  - ຕົນເອງ/ນິຕິບຸກຄົນ
  - ສະຖານະພາບທາງສັງຄົມ
  - ສະຖານະພາບເສດຖະກິດ
  - ສະຖານະພາບດ້ານໂພຊະນາການ
  - ຄວາມອາສາມາດ
  - ການເຈລະຈາກັບຜູ້ມີອຳນາດພາຍນອກຄອບຄົວ
  - ເອກະລາດ
  - ສຸຂະພາບຈິດ

## ຂັ້ນຕອນ (ວິທີອຳນວຍຄວາມສະດວກ**ນຳ**ໃຊ້ເຄື່ອງມືນີ້)

**1.** ແນະນຳເຄື່ອງມື. ສ່ວນຫຼາຍ, ຂໍ້ແນະນຳ ແລະ ກົດລະບຽບ ທີ່ຊີ້ນຳ-ນຳພາເຮົາ ແລະ ວິທີທີ່ມັນມີຜົນກະທົບຕໍ່ເຮົາ ບໍ່ໄດ້ຮັບການສັງເກດລະອຽດເທົ່າທີ່ຄວນ. ເຄື່ອງມືດັ່ງກ່າວນີ້ ຈະຊອກຫາຂໍ້ມູນກ່ຽວກັບ ການປະຕິບັດທາງສັງຄົມ ຫຼື ພຶດຕິກຳສະເພາະ ວ່າມີຜົນກະທົບຕໍ່ຊີວິດຂອງບຸກຄົນ ແນວໃດ. ນອກຈາກການເລືອກເຟັ້ນເອົາ ບັນທັດຖານທາງສັງຄົມ ທີ່ໄດ້ສົນທະນາ ນຳໃຊ້ເຄື່ອງມືນີ້ ໂດຍອີງຕາມຜົນວິເຄາະດ້ານບົດບາດທາງ ເພດ ແລະ ອຳນາດ, ຍັງມີບາງຕົວຢ່າງຂອງການປະຕິບັດ ຫລື ການປະພຶດສຳລັບຄົ້ນຄ້ວາ (ຕົວຢ່າງສະເພາະຂອງຂະແໜງການເພີ່ມເຕີມ ແມ່ນລັດຕິດໃນຕອນທ້າຍຂອງເຄື່ອງມືນີ້) ດັ່ງຕໍ່ໄປນີ້:

- *ການເລືອກລູກຊາຍ*
- *ແມ່ຍິງບໍ່ຄວນອອກໄປນອກບ້ານໃນຕອນກາງຄືນ*
- *ແມ່ຍິງຄວນເຊື່ອຟັງຜົວ ເພື່ອຮັກສາຄວາມປອງດອງໃນຄອບຄົວ (ບັນທັດຖານດັ່ງກ່າວ ມັກໃຊ້ເພື່ອໃຫ້ເຫດຜົນຊີ້ແຈງກ່ຽວກັບ ການໃຊ້ຄວາມຮຸນແຮງທາງເພດ)*
- *ເປັນທີ່ຍອມຮັບໄດ້ທີ່ຜູ້ຊາຍຈະຕີເມຍຂອງຕົນ ຖ້າເມຍບໍ່ເຊື່ອຟັງ*
- *ແມ່ຍິງຄວນກິນເປັນຄົນສຸດທ້າຍ*
- *ການຕັດແປງອະໄວຍະວະເພດຍິງ*
- *ການແຕ່ງດອງກ່ອນໄວອາຍຸ*

1 Adapted from Tools Together Now – Section B Mapping tools: International HIV/AIDS Alliance, 2006, www.aidsalliance.org

2. ສະເໜີໃຫ້ຜູ້ເຂົ້າຮ່ວມເຫັນແຜນວາດທີ່ມີຮູບພາບຂອງແມ່ຍິງ/ຜູ້ຊາຍ ຢູ່ໃຈກາງ ເຊິ່ງອ້ອມຮອບດ້ວຍຂອບເຂດບັນຫາທີ່ຂຽນໄວ້ໃນບັດເຈ້ຍ ຫຼື ເປັນສັນຍາລັກທີ່ທຸກຄົນສາມາດເຂົ້າໃຈໄດ້ງ່າຍ (ເບິ່ງຕາມແຜນວາດ). ບໍ່ຈຳເປັນທີ່ຈະສຸມໃສ່ຂອບເຂດບັນຫາດຽວກັນໃນທຸກໆການທົດລອງປະຕິບັດ.




3. ບອກກຸ່ມໃຫ້ລະດົມແນວຄວາມຄິດກ່ຽວກັບຜົນກະທົບຕໍ່ ຊີວິດຂອງແມ່ຍິງ/ຜູ້ຊາຍ ໃນແຕ່ລະຂອບເຂດດັ່ງກ່າວ. ຂຽນຄຳຕອບໃສ່ເຈ້ຍແຜ່ນໃຫຍ່. ຖາມເຈາະຈີ້ມຈົນກ່ວາ ຕົວຢ່າງສ່ວນໃຫຍ່ຈະຖືກເວົ້າອອກມາ.

## ຕົວຢ່າງ: ຊີວິດຂອງແມ່ຍິງໄດ້ຮັບຜົນກະທົບແນວໃດຈາກການເລືອກລູກຊາຍ

| ຂອບເຂດບັນຫາ | ການເລືອກລູກຊາຍມີຜົນກະທົບແນວໃດຕໍ່ຊີວິດຂອງແມ່ຍິງ (ໃຫ້ຂຽນລາຍຊື່ໄວ້ພາຍໃນ ຫຼື ອ້ອມແອ້ມຂອບເຂດບັນຫາທີ່ສອດຄ່ອງກັນ) |
|---|---|
| **ພາລະບົດບາດ ແລະ ຄວາມຮັບຜິດຊອບ** | • ມີໜ້າທີ່ຮັບຜິດຊອບຫຼາຍໃນການເບິ່ງແຍງຄອບຄົວ ແລະ ລູກ, ເນື່ອງຈາກວ່າ ລາວມີລູກນ້ອຍຫຼາຍຄົນທີ່ຕ້ອງເບິ່ງແຍງ. |
| **ສຸຂະພາບຈະເລີນພັນ ແລະ ສິດທິຕ່າງໆ** | • ຄວາມກົດດັນໃຫ້ມີລູກຊາຍ ໝາຍຄວາມວ່າ ອາດຈະບໍ່ສາມາດເຈລະຈາໃນການ ວາງແຜນຄອບຄົວ ຫຼື ຄວບຄຸມເວລາ ແລະ ໄລຍະຫ່າງຂອງການຖືພາ<br>• ການເກີດລູກ ທີ່ບໍ່ມີການເວັ້ນໄລຍະຫ່າງ ສາມາດສົ່ງຜົນກະທົບບໍ່ດີຕໍ່ສຸຂະພາບຂອງລາວ |
| **ການຕັດສິນໃຈດ້ວຍຕົນ ເອງ ແລະ ສິດທິຄວາມເປັນເຈົ້າ ການຕໍ່ຮ່າງກາຍ (ເຊັ່ນ ການຄວບຄຸມຮ່າງກາຍ ຂອງ ຕົນເອງ)** | • ຄວາມກົດດັນໃຫ້ມີລູກຊາຍ ອາດຈຳກັດຄວາມສາມາດໃນການຕັດສິນໃຈຂອງຕົນເອງ ວ່າເມື່ອໃດຈະມີເພດສຳພັນ, ເມື່ອໃດຈະມີລູກ, ຈະມີລູກຈັກຄົນ<br>• ລາວອາດຖືກເມີນເສີຍ ແລະ ຖືກທາລຸນ – ຈາກຜົວ ແລະ ສະມາຊິກໃນຄອບຄົວ – ຖ້າບໍ່ມີລູກຊາຍ |
| **ຕົນເອງ/ນິຕິບຸກຄົນ** | • ທົນທຸກກັບການຖືກປະຕິເສດ, ຈາກຄົນພາຍໃນຄອບຄົວ ແລະ ຄົນອ້ອມຂ້າງ, ຖ້າຫາກວ່າ ລາວບໍ່ສາມາດມີລູກຊາຍ<br>• ມີຄວາມເຄົາລົບນັບຖືຕົນເອງຕ່ຳ ຖ້າບໍ່ໃຫ້ກຳເນີດລູກຊາຍ<br>• ຄວາມນັບຖືຕົນເອງຂອງເດັກຍິງຄົນອື່ນໆໃນສັງຄົມຕ່ຳ ຍ້ອນເຫັນ ວັດທະນະທຳຂອງ ໃຫ້ຄວາມສຳຄັນກັບການມີລູກ ຊາຍ ຫຼາຍກ່ວາລູກຍິງ |

4. ເຄື່ອງມື ນີ້ຍັງສາມາດໃຊ້ໄດ້ສຳລັບເດັກຍິງ, ເດັກຊາຍ, ຫຼື ກຸ່ມຜູ້ດ້ອຍໂອກາດສະເພາະ ເຊັ່ນ: ແມ່ຍິງຖືພາ ແລະ ແມ່ຍິງລ້ຽງລູກດ້ວຍນົມແມ່, ເດັກຍິງ ທີ່ແຕ່ງດອງແລ້ວ, ແມ່ຍິງໂສດ, ຜູ້ຂາຍບໍລິການທາງເພດຍິງ-ຊາຍ, ແລະ ອື່ນໆ.

5. ໃຊ້ຄຳຖາມດັ່ງຕໍ່ໄປນີ້ເພື່ອອຳນວຍຄວາມສະດວກໃນການ ສົນທະນາລະຫວ່າງຜູ້ເຂົ້າຮ່ວມ:

- ການປະຕິບັດ ຫຼື ພຶດຕິກຳນີ້ສົ່ງຜົນກະທົບຕໍ່ແມ່ຍິງຝ່າຍດຽວບໍ່?
- ການປະຕິບັດ ຫຼື ພຶດຕິກຳເຫຼົ່ານີ້ສົ່ງຜົນກະທົບແນວໃດຕໍ່ຜູ້ຊາຍ?
- ເປັນຫຍັງການປະຕິບັດ ຫຼື ພຶດຕິກຳເຫຼົ່ານີ້ຈຶ່ງໄດ້ຮັບການສົ່ງເສີມ ຫຼື ສືບຕໍ່?

- ໃຜສົ່ງເສີມ ຫຼື ສະແດງໃຫ້ເຫັນວ່າ ການປະຕິບັດ ຫຼື ພຶດຕິກຳເຫຼົ່ານີ້ເປັນທີ່ຍອມຮັບໃນຊຸມຊົນ?
- ການປະຕິບັດ ຫຼື ພຶດຕິກຳເຫຼົ່ານີ້ຖືກຖ່າຍທອດຈາກຄົນຮຸ່ນໜຶ່ງໄປຫາອີກຮຸ່ນໜຶ່ງ ດ້ວຍວິທີໃດ?
- ການຮັກສາການປະຕິບັດ ຫຼື ພຶດຕິກຳ ສຳຄັນກວ່າຜົນກະທົບທີ່ມີຕໍ່ຊີວິດຂອງບຸກຄົນບໍ່?
- ບັນທັດຖານ ຫຼື ການປະຕິບັດ ສາມາດປ່ຽນແປງໄດ້ບໍ່? ໃຜສາມາດຊ່ວຍໃຫ້ມີການປ່ຽນແປງນີ້ໄດ້?

6. ປິດການສົນທະນາໂດຍການຕອບຄຳຖາມ ຫຼື ຄວາມກັງວົນທີ່ຍັງບໍ່ທັນໄດ້ຕອບ ແລະ ຊີ້ແຈງຂໍ້ມູນທີ່ຜິດພາດໃຫ້ຖືກຕ້ອງ. ບອກຜູ້ເຂົ້າຮ່ວມວ່າ ເຖິງ ເຮົາຈະຄິດວ່າ ບາງບັນຫາ ສົ່ງຜົນກະທົບຕໍ່ແມ່ຍິງ ຫລາຍກ່ວາ ຫຼື ຕໍ່ຜູ້ຊາຍຫຼາຍ, ແຕ່ຜົນກະທົບເຫຼົ່ານີ້ສາມາດມີຜົນຕໍ່ກັບລູກ, ຄູ່ຜົວເມຍ ແລະ ຊຸມຊົນຂອງເຮົາໄດ້. ດັ່ງນັ້ນ, ຖ້າເວົ້າເຖິງຄວາມເປັນຢູ່ທີ່ດີ ຂອງແມ່ຍິງຜູ້ໜຶ່ງ ນັ້ນກໍ່ໝາຍເຖິງຄວາມເປັນຢູ່ທີ່ດີຂອງ ລູກຂອງລາວ, ຄອບຄົວ ແລະ ຄວາມເປັນຢູ່ທີ່ດີຂອງຊຸມຊົນອີກດ້ວຍ. ຊຸກຍູ້ໃຫ້ຜູ້ເຂົ້າຮ່ວມສົນທະນາກ່ຽວກັບສິ່ງທີ່ເວົ້າໃນມື້ນີ້ກັບຄອບຄົວ ແລະ ໝູ່ເພື່ອນຂອງເຂົາເຈົ້າ ຖ້າເຂົາເຈົ້າຮູ້ສຶກສະດວກ.
7. ໃນຂະນະທີ່ແຈ້ງໃຫ້ຜູ້ເຂົ້າຮ່ວມຮູ້ຂໍ້ມູນ, ເລື່ອງສ່ວນຕົວ ແລະ ປະສົບການທີ່ໄດ້ແບ່ງປັນກັນ ໃນລະຫວ່າງການສົນທະນາຄວນຮັກສາໄວ້ຢູ່ໃນກຸ່ມ, ຄວນຊຸກຍູ້ໃຫ້ຜູ້ເຂົ້າຮ່ວມ ແບ່ງປັນບັນຫາຕ່າງໆທີ່ໄດ້ຖືກສົນທະນາ ແລະ ສິ່ງທີ່ເຂົາເຈົ້າ ໄດ້ຮຽນຮູ້ ກັບຄອບຄົວ ແລະ ໝູ່ເພື່ອນທີ່ບໍ່ໄດ້ເຂົ້າຮ່ວມ ຖ້າຫາກເຂົາເຈົ້າຮູ້ສຶກສະບາຍໃຈຢາກຈະແບ່ງປັນ. ສຸດທ້າຍ, ບອກໃຫ້ຜູ້ເຂົ້າຮ່ວມຄິດເຖິງວິທີແກ້ໄຂກັບສິ່ງທ້າທາຍຕ່າງໆ ທີ່ໄດ້ສົນທະນາກັນໃນລະຫວ່າງການສົນທະນາກຸ່ມ ເຊິ່ງຈະຊ່ວຍສືບຕໍ່ການສົນທະນາໃນພາກຕໍ່ໄປ.

### ຄຳແນະນຳສຳລັບຜູ້ອຳນວຍຄວາມສະດວກ

- ທຸກໆບັນທັດຖານດ້ານບົດບາດທາງເພດ, ສັງຄົມ, ແລະ ອຳນາດ ມີຜົນກະທົບໃນທາງ ບວກ ຫຼື ທາງລົບ. ເຄື່ອງມືນີ້ ສະແດງໃຫ້ເຫັນວ່າບັນທັດຖານໃດໜຶ່ງ ສາມາດມີອິດທິພົນຕໍ່ ຊີວິດບຸກຄົນໃນຫລາຍໆດ້ານ ແລະ ຍັງສະແດງໃຫ້ເຫັນວ່າຜົນກະທົບດັ່ງກ່າວ ສາມາດສົ່ງຕໍ່ເຖິງເດັກນ້ອຍ, ຄອບຄົວ ແລະ ສັງຄົມນຳອີກ.
- ເຄື່ອງມື ນີ້ ຍັງສະແດງໃຫ້ເຫັນວ່າ ບາງຄັ້ງ ບັນທັດຖານໃດໜຶ່ງທີ່ເຫັນວ່າມີຢູ່ເພື່ອປົກປ້ອງ ຫຼື ເປັນປະໂຫຍດໃຫ້ແມ່ຍິງ ຫຼື ຜູ້ຊາຍສາມາດມີຜົນກະທົບທາງລົບຫຼາຍຢ່າງ ຕໍ່ຊີວິດຂອງເຂົາເຈົ້າໄດ້.

## ການນຳໃຊ້ ແລະ ການດັດປັບຂອງເຄື່ອງມື

| ການດັດປັບ "ໃຜໄດ້ຮັບຜົນກະທົບ ແລະ ກະທົບແນວໃດ" ສຳລັບຂັ້ນຕອນຕ່າງໆ ໃນ ຂະບວນການ SAA |
|---|
| ການປ່ຽນແປງພະນັກງານ |
| ເຄື່ອງມືສາມາດຊ່ວຍໃຫ້ພະນັກງານວິເຄາະຢ່າງລະມັດວັງ ວ່າພະນັກງານເຂົ້າໃຈເຖິງບັນທັດຖານບາງຢ່າງ ທີ່ເຂົາເຈົ້າເຫັນໃນຊີວິດ ຫຼື ການເຮັດວຽກຂອງເຂົາເຈົ້າ ແລະ ເຂົາເຈົ້າວິເຄາະວ່າ ມັນມີຜົນກະທົບປະເພດໃດແດ່ ຕໍ່ຊີວິດ ແລະ ຊຸມຊົນຂອງເຂົາເຈົ້າ. |
| ແຜນປະຕິບັດງານ |
| ເຄື່ອງມືສາມາດນຳໃຊ້ ເພື່ອວິເຄາະບັນທັດຖານຕ່າງໆຂອງການປ່ຽນແປງທີ່ຈຳເປັນ ແລະ ເພື່ອຄົ້ນຫາຂໍ້ມູນໂດຍລວມ ວ່າບັນທັດຖານບາງຢ່າງມີຜົນກະທົບແນວໃດຕໍ່ບຸກຄົນ ແລະ ເປັນຫຍັງ. ມັນຍັງຊ່ວຍໃຫ້ຊຸມຊົນ ວິ ເຄາະບັນທັດຖານບາງຢ່າງ ແລະ ປັດໃຈສຳຄັນຕ່າງໆ ແລະ ເຂົ້າໃຈເຖິງຜົນກະທົບທີ່ຕາມມາໃນທາງລົບ ທີ່ກວ້າງຂວາງ, ອາດຈະສາມາດເປັນຈຸງໃຈແກ່ເຂົາເຈົ້າ ທີ່ພຽງພໍ ເພື່ອຄິດຊອກຫາວິທີທາງແກ້ໄຂບັນຫາ. |

## ການດັດປັບ ໃຫ້ໄດ້ຮັບຜົນກະທົບ ແລະ ກະທົບແນວໃດ ສໍາລັບຂະແໜງການຕ່າງໆ

### ສຸຂະພາບຈະເລີນພັນ ແລະ ສິດທິຕ່າງໆ (SRHR)

**SRHR-ຕົວຢ່າງສະເພາະຂອງບັນທັດຖານ, ການປະຕິບັດ ຫຼື ພຶດຕິກໍາ ເພື່ອການຄົ້ນຄົ້ວ**

**-ການເລືອກລູກຊາຍ**

- ແມ່ຍິງບໍ່ຄວນອອກໄປນອກບ້ານໃນຕອນກາງຄືນ
- ແມ່ຍິງບໍ່ຄວນປະຕິເສດຕໍ່ຄໍາຮ້ອງຂໍຂອງຜົວເພື່ອມີເພດສໍາພັນ
- ເປັນທີ່ຍອມຮັບໄດ້ ທີ່ຜູ້ຊາຍ ຈະຕີເມຍຂອງຕົນ
- ການວາງແຜນຄອບຄົວເປັນບັນຫາຂອງແມ່ຍິງ
- ແມ່ຍິງມີຄວາມຮັບຜິດຊອບໃນການຫຼີກລ້ຽງຄວາມຮຸນແຮງ
- ແມ່ຍິງຄວນກິນເປັນຄົນສຸດທ້າຍ
- ການດັດແປງອະໄວຍະວະເພດຍິງ
- ການແຕ່ງດອງກ່ອນໄວອາຍຸ
- ແມ່ຍິງຄວນເປັນສາວບໍລິສຸດສໍາລັບການແຕ່ງດອງ
- ການຄຸມກໍາເນີດໂດຍເດັກຍິງ ແມ່ນເປັນທີ່ຍອມຮັບບໍ່ໄດ້
- ເດັກຍິງ ບໍ່ຄວນໄດ້ຮັບການສຶກສອນເລື່ອງເພດ
- ຜູ້ຊາຍ ມີປະສົບການ ມີເພດສໍາພັນໂດຍທໍາມະຊາດ
- ແມ່ຍິງທີ່ຝຶກພາຖົງຢາງອະນາໄມ ມີປະສົບການ ມີເພດສໍາພັນ

### ຂອບເຂດຄວາມສາມາດດ້ານເສດຖະກິດຂອງແມ່ຍິງ (WEE)

**WEE-ຕົວຢ່າງສະເພາະຂອງບັນທັດຖານ, ການປະຕິບັດ ຫຼື ພຶດຕິກໍາ ເພື່ອການຄົ້ນຫາຂໍ້ມູນ**

- ແມ່ຍິງບໍ່ສາມາດຈັດການເລື່ອງເງິນໄດ້
- ແມ່ຍິງ ບໍ່ມີຄວາມລະມັດລະວັງໃນການໃຊ້ຈ່າຍ
- ຜູ້ຊາຍເປັນຜູ້ຫາລາຍໄດ້ໃຫ້ຄອບຄົວ
- ວຽກງານຂອງແມ່ຍິງແມ່ນຢູ່ພາຍໃນບ້ານ
- ແມ່ຍິງບໍ່ຄວນເຮັດວຽກໃນຕອນກາງຄືນ

### Using the tool for GBV

**GBV-ຕົວຢ່າງສະເພາະຂອງບັນທັດຖານ, ການປະຕິບັດ ຫຼື ພຶດຕິກໍາ ເພື່ອການຄົ້ນຫາຂໍ້ມູນ**

- ເປັນທີ່ຍອມຮັບທີ່ຜູ້ຊາຍ ຈະຕີເມຍຂອງຕົນ
- ການເດີນທາງໃນຕອນກາງຄືນເປັນອັນຕະລາຍຕໍ່ແມ່ຍິງ
- ແມ່ຍິງບໍ່ສາມາດປະຕິເສດຕໍ່ຄໍາຮ້ອງຂໍຂອງຜົວເພື່ອມີເພດສໍາພັນ
- ການດັດແປງອະໄວຍະວະເພດຍິງ
- ຂອງໝັ້ນ/ຂອງກໍານັນ
- ການແຕ່ງດອງກ່ອນໄວ
- ແມ່ຍິງທີ່ລົມກັບຜູ້ຊາຍແມ່ນ "ເປັນຄົນປ່ອຍເນື້ອປ່ອຍໂຕ"
- ແມ່ຍິງມີຄວາມຮັບຜິດຊອບໃນການຫຼີກລ້ຽງຄວາມຮຸນແຮງ
- ແມ່ຍິງ/ເດັກຍິງ ຄວນແຕ່ງຕົວຢ່າງເໝາະສົມເພື່ອຫຼີກລ້ຽງ ການລວນລາມທາງເພດ

# 10. ການສ້າງແຜນ**ອາດ** ແລະ ການວິເຄາະ**ພາກສ່ວນກ່ຽວຂ້ອງ** - Stakeholder Mapping

## ຈຸດປະສົງຂອງເຄື່ອງມື

ເພື່ອລະບຸພາກສ່ວນກ່ຽວຂ້ອງແລະ ວິເຄາະບົດບາດທີ່ສຳຄັນຂອງເຂົາເຈົ້າ ໃນຂະນະທີ່ຈັດຕັ້ງປະຕິບັດກິດຈະກຳໃນການປ້ອງກັນບັນຫາທາງເພດ, ສັງຄົມ ແລະ ອຳນາດ.

## ເວລາປະຕິບັດ

1 ຊົ່ວໂມງ

## ອຸປະກອນ ແລະ ການກະກຽມອື່ນໆທີ່ຈຳເປັນ

- ເຈ້ຍແຜ່ນໃຫຍ່, ບິກເຝີດສີ ຫຼື ບິກໃຊ້ແຕ້ມຮູບມີຫຼາຍສີ, ບັດເຈ້ຍ, ສະກອັດຕິດເຈ້ຍ.
- ກະກຽມບັດເຈ້ຍທີ່ມີຫົວຂໍ້ດັ່ງນີ້: ຜູ້ສະໜັບສະໜູນ, ຜູ້ຕໍ່ຕ້ານ, ຊຸມຊົນ.
- ເລືອກເອົາບັນທັດຖານ ຫຼື ພຶດຕິກຳໃດໜຶ່ງ ທີ່ກ່ຽວພັນກັບເປົ້າໝາຍ ແລະ ຈຸດປະສົງຂອງໂຄງການເພື່ອສົນທະນາ, ຖ້າຫາກສຳເລັດກິດຈະກຳດັ່ງກ່າວໃນລະຫວ່າງການວາງແຜນ ສຳລັບຂັ້ນຕອນການປະຕິບັດ, ຜູ້ອຳນວຍຄວາມສະດວກ ຄວນເລືອກບັນທັດຖານທີ່ກຸ່ມໄດ້ປຶກສາຫາລື ໃນລະຫວ່າງກິດຈະກຳທີ່ ມີການສົນທະນາທົບທວນຄືນ ເພື່ອເປັນການຝຶກຊ້ອມ ຫຼື ພຶດຕິກຳຕ່າງໆ ທີ່ກຸ່ມຕ້ອງການຈະປ່ຽນແປງ. ວິທີນີ້ເພື່ອເຮັດໃຫ້ແນ່ໃຈວ່າ ຜູ້ອຳນວຍຄວາມສະດວກບໍ່ໄດ້ບັງຄັບໃຫ້ກຸ່ມຊຸມຊົນ ລົງມືປະຕິບັດແກ້ໄຂບັນຫາທີ່ພວກເຂົາບໍ່ມີຄວາມກະຕືລືລົ້ນ ຫລືຕ້ອງການປ່ຽນແປງ.

## ຂັ້ນຕອນ (ວິທີອຳນວຍຄວາມສະດວກ ເຄື່ອງມື)

1. ແນະນຳເຄື່ອງມື. ໃຫ້ອະທິບາຍວ່າ ການວາງແຜນ ແລະ ການຈັດຕັ້ງປະຕິບັດມາດຕະການໃດໜຶ່ງ ທີ່ປັດສະຈາກ ການວິເຄາະພາກສ່ວນກ່ຽວຂ້ອງ ສາມາດກໍ່ໃຫ້ເກີດຜົນໄດ້ຮັບທີ່ບໍ່ຄາດຫວັງ. ມັນເປັນສິ່ງສຳຄັນ ທີ່ຈະຮູ້ວ່າພາກສ່ວນກ່ຽວຂ້ອງແມ່ນໃຜ, ຮູ້ວ່າເຂົາເຈົ້າສົ່ງເສີມບັນທັດຖານ ໃນປະຈຸບັນ ຫຼື ເຫັນດີ ຕໍ່ການປັບປຸງແກ້ໄຂບັນຫາ, ຫລືຮູ້ວ່າ ເຂົາເຈົ້າ ເປັນຜູ້ສົ່ງເສີມທີ່ສຳຄັນ ຫຼື ເປັນຜູ້ຂັດຂວາງ ຕໍ່ການປະຕິບັດ. ການສ້າງແຜນວາດພາກສ່ວນກ່ຽວຂ້ອງຊ່ວຍຕອບຄຳຖາມດັ່ງກ່າວ.
2. ບອກໃຫ້ກຸ່ມສ້າງລາຍຊື່ພາກສ່ວນກ່ຽວຂ້ອງຫຼື ຄົນທີ່ມີອິດທິພົນຕໍ່ບັນທັດຖານ ຫຼື ພຶດຕິກຳ, ຂຽນລາຍຊື່ພາກສ່ວນກ່ຽວຂ້ອງແຕ່ລະພາກສ່ວນ ໃສ່ໃນບັດເຈ້ຍຕ່າງຫາກ. ຕົວຢ່າງ: ສຳລັບມາດຕະຖານກ່ຽວກັບການວາງແຜນຄອບຄົວ, ພາກສ່ວນກ່ຽວຂ້ອງຈະແມ່ນຜູ້ຊາຍ ແລະ ແມ່ຍິງ, ຜູ້ໃຫ້ບໍລິການດ້ານສຸຂະພາບ, ແມ່ເຖົ້າ, ຜູ້ນຳທາງສາສະໜາ, ໝູ່ເພື່ອນ, ແລະ ອື່ນໆ.
3. ເມື່ອສ້າງບັນຊີລາຍຊື່ສຳເລັດແລ້ວ ໃຫ້ວາງບັດເຈ້ຍໄວ້ໃນຈຸດໃຈກາງ ແລະ ບອກໃຫ້ຜູ້ເຂົ້າຮ່ວມວາງບັດເຈ້ຍອື່ນໆອ້ອມຮອບຈຸດດັ່ງກ່າວ ຕາມວິທີຕໍ່ໄປນີ້: ຍິ່ງມີບັດເຈ້ຍຫ່າງຈາກຊຸມຊົນຫຼາຍເທົ່າໃດ, ຍິ່ງຍາກທີ່ຈະເຂົ້າເຖິງພາກສ່ວນກ່ຽວຂ້ອງ ບັດເຈ້ຍທີ່ຢູ່ໃກ້ກັບຊຸມຊົນຫຼາຍເທົ່າໃດ,



ຍິ່ງງ່າຍຂຶ້ນທີ່ຈະເຂົ້າເຖິງພາກສ່ວນກ່ຽວຂ້ອງ

4. ຂັ້ນຕອນຕໍ່ໄປ, ບອກຜູ້ເຂົ້າຮ່ວມ ແຕ້ມວົງມົນອ້ອມຮອບພາກສ່ວນກ່ຽວຂ້ອງແຕ່ລະຝ່າຍ ຕາມວິທີຕໍ່ໄປນີ້: ວົງມົນຍິ່ງໃຫຍ່ເທົ່າໃດ, ພາກສ່ວນກ່ຽວຂ້ອງຍິ່ງມີຄວາມສໍາຄັນຫຼາຍຂຶ້ນເທົ່ານັ້ນ; ວົງມົນຍິ່ງນ້ອຍເທົ່າໃດ, ພາກສ່ວນກ່ຽວຂ້ອງຍິ່ງມີຄວາມສໍາຄັນໜ້ອຍລົງເທົ່ານັ້ນ.
5. ຂັ້ນຕອນຕໍ່ໄປ, ບອກໃຫ້ຜູ້ເຂົ້າຮ່ວມ ແຕ້ມເສັ້ນລະຫວ່າງພາກສ່ວນກ່ຽວຂ້ອງແລະ ຊຸມຊົນ ຕາມວິທີຕໍ່ໄປນີ້: ເສັ້ນໜາຫຼາຍເທົ່າໃດ, ພາກສ່ວນກ່ຽວຂ້ອງຍິ່ງສົ່ງເສີມການປ່ຽນແປງຫຼາຍຂຶ້ນເທົ່ານັ້ນ; ເສັ້ນນ້ອຍຫຼາຍເທົ່າໃດ, ພາກສ່ວນກ່ຽວຂ້ອງຍິ່ງເປັນຜູ້ຂັດຂວາງຕໍ່ການປ່ຽນແປງຫຼາຍເທົ່ານັ້ນ.
6. ເພື່ອເຮັດໃຫ້ການວິເຄາະງ່າຍຂຶ້ນ, ໃຫ້ເອົາຂໍ້ມູນໃສ່ໃນ ຕາຕະລາງຕາມແບບ ຕົວຢ່າງຂ້າງລຸ່ມນີ້, ການຈັດລໍາດັບຄວາມສໍາຄັນ, ການເຂົ້າເຖິງ, ແລະ ການສົ່ງເສີມ ຈາກຕໍ່າ (1) ໄປຫາສູງ (4).

### ຕົວຢ່າງ ຕາຕະລາງການວິເຄາະ:

| ຜູ້ມີສ່ວນຮ່ວມ | ການເຂົ້າເຖິງ | ຄວາມສໍາຄັນ | ຜູ້ສົ່ງເສີມ/ຜູ້ຕໍ່ຕ້ານ |
|---|---|---|---|
| ຜູ້ຊາຍ | 3 | 1 | ຜູ້ຕໍ່ຕ້ານ |
| ແມ່ຍິງ | 1 | 1 | ຜູ້ສົ່ງເສີມ |
| ຜູ້ໃຫ້ບໍລິການດ້ານສຸຂະພາບ | 2 | 2 | ຜູ້ຕໍ່ຕ້ານ |
| ແມ່ຍ່າ | 1 | 3 | ຜູ້ຕໍ່ຕ້ານ |
| ຜູ້ນໍາທາງສາດສະໜາ | 4 | 4 | ຜູ້ຕໍ່ຕ້ານ |
| ໝູ່ເພື່ອນ | 1 | 3 | ຜູ້ສົ່ງເສີມ |

7. ໃຫ້ຜູ້ເຂົ້າຮ່ວມ ລະດົມແນວຄວາມຄິດ ກ່ຽວກັບຍຸດທະສາດເພື່ອຈູງໃຈໃຫ້ແຕ່ພາກສ່ວນທີ່ກ່ຽວຂ້ອງເຫັນດີ ເປັນຜູ້ສົ່ງເສີມ, ວິທີການແຕ່ລະຢ່າງ ຄວນຂຽນລົງໃນບັດເຈ້ຍແຍກຕ່າງຫາກ ແລະ ວາງໄວ້ຂ້າງພາກສ່ວນກ່ຽວຂ້ອງທີ່ເຫັນວ່າເໝາະສົມ.
8. ກ່ອນການສະຫຼຸບສັງລວມ, ໃຫ້ວິເຄາະໂດຍລວມວ່າ ຈະສ້າງອິດທິພົນຈູງໃຈໃຫ້ພາກສ່ວນກ່ຽວຂ້ອງໃດກ່ອນ ແລະ ຈະສ້າງແນວໃດ. ຄໍາຖາມທົບທວນຄືນຕໍ່ໄປນີ້ຈະຊ່ວຍໃນການຕັດສິນໃຈ::
    - ເປັນຫຍັງພາກສ່ວນກ່ຽວຂ້ອງ ຈຶ່ງມີຄວາມສໍາຄັນໃນການປັບປຸງບັນທັດຖານ?
    - ຄວາມສໍາພັນດ້ານອໍານາດຂອງຊຸມຊົນກັບພາກສ່ວນກ່ຽວຂ້ອງແມ່ນຫຍັງ?
    - ຈະດີກວ່າບໍ່ ທີ່ຈະໃຫ້ຊຸມຊົນໄປຫາບຸກຄົນໃດໜຶ່ງທີ່ສາມາດເຂົ້າເຖິງໄດ້ງ່າຍ ແລະ ມີຄວາມສໍາຄັນຫຼາຍ ກວ່າໃນຂະບວນການປ່ຽນແປງ ເນື່ອງຈາກວ່າ ຜົນສໍາເລັດເລັກນ້ອຍນີ້ ຈະເພີ່ມຄວາມໝັ້ນໃຈໃຫ້ກັບກຸ່ມ, ຫຼື ຈະໄປຫາຄົນທີ່ເຂົ້າເຖິງຍາກກວ່າ ເນື່ອງຈາກວ່າພວກເຂົາອາດຈະມີອິດທິພົນຫຼາຍທີ່ສຸດ?
    - ພາກສ່ວນກ່ຽວຂ້ອງທີ່ມີບົດບາດແຕກຕ່າງກັນ ສາມາດມີບົດບາດແນວໃດແດ່ຕໍ່ການປັບປຸງບັນທັດຖານ?
    - ຜົນຕອບແທນ ຫຼື ຜົນທີ່ຕາມມາ ແມ່ນຫຍັງ ຖ້າຄົນເຮົາບໍ່ປະຕິບັດຕາມບັນທັດຖານ?
    - ພາກສ່ວນກ່ຽວຂ້ອງທີ່ມີອໍານາດຫຼາຍທີ່ສຸດ ແມ່ນໃຜ ໃນແງ່ຂອງການສົ່ງເສີມທີ່ຈໍາເປັນສໍາລັບການລິງມືເຮັດ ເພື່ອປ່ຽນແປງບັນທັດຖານເຫຼົ່ານັ້ນ?
    - ພາກສ່ວນກ່ຽວຂ້ອງທີ່ມີອໍານາດຫຼາຍທີ່ສຸດ, ຜູ້ທີ່ຈະຕໍ່ຕ້ານຂະບວນການປ່ຽນແປງ ແມ່ນໃຜ?
    - ພາກສ່ວນກ່ຽວຂ້ອງຈະຊ່ວຍປັບປຸງແກ້ໄຂບັນທັດຖານໄດ້ແນວໃດ?
9. ປິດການສົນທະນາໂດຍຕອບຄໍາຖາມ ຫຼື ແກ້ໄຂຄວາມກັງວົນຂອງຜູ້ເຂົ້າຮ່ວມ. ຈາກນັ້ນ, ບອກ ຜູ້ເຂົ້າຮ່ວມວ່າພວກເຮົາກໍາລັງຊອກຫາການປ່ຽນແປງ ເພື່ອໃຫ້ຊີວິດຂອງທຸກຄົນໃນຊຸມຊົນດີຂຶ້ນ. ເພື່ອຈະເຮັດສິ່ງນັ້ນ ເຮົາຕ້ອງເຮັດວຽກຮ່ວມກັບພາກສ່ວນກ່ຽວຂ້ອງເຖິງແມ່ນວ່າບາງຄົນອາດຕໍ່ຕ້ານ ການປ່ຽນແປງກໍ່ຕາມ. ຂອບໃຈຜູ້ເຂົ້າຮ່ວມ ສໍາລັບການເຮັດວຽກຮ່ວມກັນ ແລະ ການເປັນສ່ວນໜຶ່ງຂອງການປ່ຽນແປງທາງບວກຂອງຊຸມຊົນ.

10. ໃນຂະນະທີ່ແຈ້ງ ໃຫ້ຜູ້ເຂົ້າຮ່ວມຮູ້ວ່າຂໍ້ມູນ, ເລື່ອງສ່ວນຕົວ ແລະ ປະສົບການທີ່ໄດ້ແບ່ງປັນກັນ ໃນລະຫວ່າງການສົນທະນາ ຄວນຮັກສາໄວ້ຢູ່ໃນກຸ່ມ, ໃຫ້ຊຸກຍູ້ ໃຫ້ຜູ້ເຂົ້າຮ່ວມ ແບ່ງປັນບັນຫາຕ່າງໆທີ່ໄດ້ຖືກສົນທະນາ ແລະ ສິ່ງທີ່ເຂົາເຈົ້າ ໄດ້ຮຽນຮູ້ຈາກ ຄອບຄົວ ແລະ ໝູ່ເພື່ອນ ຜູ້ທີ່ບໍ່ໄດ້ເຂົ້າຮ່ວມການຝຶກອົບຮົມຄັ້ງນີ້ ຖ້າຫາກເຂົາເຈົ້າ ຮູ້ສຶກສະບາຍໃຈທີ່ຈະແບ່ງປັນ. ສຸດທ້າຍ, ບອກໃຫ້ຜູ້ເຂົ້າຮ່ວມຄິດເຖິງວິທີແກ້ໄຂກັບສິ່ງທ້າທາຍຕ່າງໆ ທີ່ໄດ້ສົນທະນາກັນໃນລະຫວ່າງ ການສົນທະນາກຸ່ມ ເຊິ່ງມັນຈະຊ່ວຍໃນການສືບຕໍ່ການສົນທະນາໃນພາກຕໍ່ໄປ.

## ໝາຍເຫດສໍາລັບຜູ້ອໍານວຍຄວາມສະດວກ

ພາກສ່ວນກ່ຽວຂ້ອງແມ່ນຢູ່ໃນປະເພດທີ່ແຕກຕ່າງກັນ ແລະ ດ້ວຍເຫດນີ້ ການຮ່ວມມືກັບພາກສ່ວນກ່ຽວຂ້ອງ ຄວນຈະໃຊ້ວິທີທີ່ ແລະ ຍຸດຖະສາດທີ່ແຕກຕ່າງ, ບາງບັນທັດຖານດ້ານບົດບາດທາງເພດ ແລະ ສັງຄົມ ເປັນສິ່ງ ສໍາຄັນສໍາລັບບາງພາກສ່ວນທີ່ກ່ຽວຂ້ອງ ທີ່ຈະຮັກສາອໍານາດຂອງເຂົາເຈົ້າ, ແລະ ການປັບປຸງແກ້ໄຂບັນທັດຖານດັ່ງກ່າວ ຈະຖືກເຂົ້າເຈົ້າຕໍ່ຕ້ານຢ່າງໜັກ. ໃນອີກດ້ານໜຶ່ງ, ບາງພາກສ່ວນທີ່ກ່ຽວຂ້ອງ ຈະເປັນພັນທະມິດທີ່ສໍາຄັນທີ່ຈະແກ້ໄຂບັນທັດຖານທີ່ເປັນອັນຕະລາຍ ໃຫ້ດີຂຶ້ນ.

## ການນໍາໃຊ້ ແລະ ການດັດປັບ ເຄື່ອງມື

**ການດັດປັບການສ້າງແຜນອາດພາກສ່ວນກ່ຽວຂ້ອງ ແລະ ການວິເຄາະ ສໍາລັບຂະແໜງການຕ່າງໆ ໃນ ຂະບວນການ SAA**

### ການວິເຄາະດ້ານ**ບົດບາດທາງເພດ** ແລະ ອໍານາດການຕັດສິນໃຈ.

ເຄື່ອງມືດັ່ງກ່າວນີ້ສາມາດນໍາໃຊ້ເພື່ອວິເຄາະວ່າ ພາກສ່ວນກ່ຽວຂ້ອງ ແລະ ຜູ້ຖືອໍານາດປະເພດໃດແດ່ ທີ່ມີຢູ່ໃນຊຸມຊົນ, ລັກສະນະດ້ານໃດຂອງຊີວິດ ແລະ ຄວາມເປັນຢູ່ທີ່ດີ ທີ່ເຂົາເຈົ້າຄວບຄຸມຢູ່, ແລະ ພາກສ່ວນກ່ຽວຂ້ອງກຸ່ມໃດແດ່ ທີ່ສາມາດຊ່ວຍເພື່ອສົ່ງເສີມການປ່ຽນແປງ.

### ແຜນປະຕິບັດງານ

ເຄື່ອງມືດັ່ງກ່າວນີ້ສາມາດຊ່ວຍໃຫ້ຊຸມຊົນ ທົບທວນຄືນຢ່າງລະມັດລະວັງ ວ່າພາກສ່ວນກ່ຽວຂ້ອງໃດແດ່ ທີ່ຈະຖືເປັນພັນທະມິດ, ເຊິ່ງພາກສ່ວນກ່ຽວຂ້ອງບາງກຸ່ມ ອາດເຮັດໜ້າທີ່ເປັນອຸປະສັກຕໍ່ການປ່ຽນແປງ, ແລະ ວິທີການໃດແດ່ ທີ່ອາດເປັນໄປໄດ້ທີ່ຈະເຮັດໃຫ້ພາກສ່ວນກ່ຽວຂ້ອງກຸ່ມນີ້ສາມາດຊ່ວຍໃນຂະບວນການປ່ຽນແປງ.

### ການປະຕິບັດແຜນງານ

ຈຸດສຸມຂອງເຄື່ອງມືນີ້, ລວມທັງບັນທັດຖານ ຫຼື ການປ່ຽນແປງໃນບັນທັດຖານທີ່ກໍາລັງສົນທະນາ, ຄວນເອົາມາຈາກຜົນການວິເຄາະດ້ານບົດບາດທາງເພດ ແລະ ອໍານາດການຕັດສິນໃຈ.. ດັ່ງທີ່ໄດ້ກ່າວມາຂ້າງເທິງນີ້, ຜູ້ອໍານວຍຄວາມສະດວກ ຄວນລະວັງບໍ່ໃຫ້ບັງຄັບ ໃຫ້ມີການປ່ຽນແປງໃນກຸ່ມຂອງຊຸມຊົນ. ເພື່ອສ້າງແຜນການປະຕິບັດນີ້, ບັນທັດຖານ ຫຼື ການປ່ຽນແປງໃນບັນທັດຖານ ໃນການ ສົນທະນານີ້ ຄວນມາຈາກການສົນທະນາ ແລະ ການປຶກສາຫາລືຂອງຊຸມຊົນເອງ.

## 11. ການຈັດອາງບຸລິມະສິດຂອງບັນທັດຖານທາງສັງຄົມ - Social Norm Priori

### ຈຸດປະສົງຂອງເຄື່ອງມື:

ໃນລະຫວ່າງ ການປ່ຽນແປງພະນັກງານ, ລວມທັງ ການຝຶກອົບຮົມຄູຝຶກ ຫຼື ການສົນທະນາກຸ່ມ ຫຼັງຈາກສຳເລັດການວິເຄາະດ້ານບົດບາດທາງເພດ ແລະ ອຳນາດ, ເຄື່ອງມືດັ່ງກ່າວນີ້ຈະ ຊ່ວຍໃຫ້ພະນັກງານໂຄງການວິເຄາະ ແລະ ຈາກນັ້ນວາງບຸລິມະສິດວ່າບັນທັດຖານດ້ານບົດບາດທາງເພດ, ສັງຄົມ ແລະ ອຳນາດແບບໃດທີ່ຈະແກ້ໄຂ ຜ່ານການສົນທະນາຖອດຖອນບົດຮຽນກັບຊຸມຊົນ ເພື່ອເພີ່ມຜົນກະທົບທີ່ດີຂອງໂຄງການສະເພາະ ຂອງຂະແໜງການໃດໜຶ່ງ.

### ເວລາປະຕິບັດ

30 ຫາ 45 ນາທີ

### ອຸປະກອນ ແລະ ການກະກຽມອື່ນໆທີ່ຈຳເປັນ

- ເຈ້ຍແຜ່ນໃຫຍ່, ບິກເຟີດ ຫຼື ສຳເນົາເອົາຕາຕະລາງ ເພື່ອແຈກຢາຍໃຫ້ຜູ້ເຂົ້າຮ່ວມແຕ່ລະຄົນ (ໃຫ້ເບິ່ງເອກະສານແຈກຢາຍຂ້າງລຸ່ມນີ້ ເພື່ອຕື່ມຂໍ້ມູນໃສ່ຕາຕະລາງໃຫ້ສຳເລັດ)
- ຖ້າໃຊ້ເຄື່ອງມືດັ່ງກ່າວນີ້ກັບພະນັກງານໂຄງການທີ່ບໍ່ໄດ້ມີສ່ວນຮ່ວມໃນການວິເຄາະດ້ານບົດບາດທາງເພດ ແລະ ອຳນາດ, ໃຫ້ສະໜອງຂໍ້ມູນຜົນການຄົ້ນຄວ້າໃຫ້ແກ່ຜູ້ເຂົ້າຮ່ວມ.

### ຂັ້ນຕອນ (ວິທີການນຳໃຊ້ເຄື່ອງມື)

1. ແຈກຢາຍເອກະສານ (ຂ້າງລຸ່ມ) ຫຼື ແຕ້ມຕາຕະລາງຂະໜາດໃຫຍ່ທີ່ມີຫົກຖັນສຳລັບ 1) ບັນທັດຖານທາງສັງຄົມ, 2) ຄົນທີ່ໄດ້ຮັບຜົນກະທົບຈາກບັນທັດຖານທາງສັງຄົມ, 3) ຜົນກະທົບດ້ານສຸຂະພາບ (ຫຼືດ້ານຂະແໜງການສະເພາະໃດໜຶ່ງ), 4) ຜົນກະທົບຕໍ່ຄົວເຮືອນ, 5) ການປ່ຽນແປງໃນທາງບວກທີ່ເກີດຈາກການແກ້ໄຂອຸປະສັກທາງສັງຄົມ, ແລະ 6) ການປ່ຽນແປງຈະເກີດຂຶ້ນງ່າຍປານໃດ? ຖ້າແຕ້ມຮູບໃນເຈ້ຍແຜ່ນໃຫຍ່, ໃຫ້ອ້າງອີງເຖິງເອກະສານແຈກຢາຍຂ້າງລຸ່ມນີ້ ສຳລັບຕາຕະລາງຕົວຢ່າງ.
   - "ຜົນກະທົບສະເພາະຂອງຂະແໜງການ" ສາມາດປ່ຽນແທນໂດຍການຕັ້ງຊື່ຂະແໜງຈຸດສຸມຂອງໂຄງການ ໂດຍການນຳໃຊ້ເຄື່ອງມືວິເຄາະ ແລະ ການປ່ຽນແປງສັງຄົມ ເຊັ່ນ "ຜົນກະທົບດ້ານໂພຊະນາການ" ຫຼື "ຜົນກະທົບດ້ານການຄ້ຳປະກັນລາຍຮັບ"
2. ນຳພາຜູ້ເຂົ້າຮ່ວມສົນທະນາເພື່ອລະດົມແນວຄວາມຄິດໄປພ້ອມກັນ ເພື່ອຕື່ມຂໍ້ມູນໃນແຕ່ລະຊ່ອງຂອງຕາຕະລາງ.
3. ເມື່ອສຳເລັດແລ້ວ ບອກໃຫ້ຜູ້ເຂົ້າຮ່ວມຄິດໄຕ່ຕອງເບິ່ງເນື້ອໃນຂອງຕາຕະລາງ ແລະ ສົນທະນາກ່ຽວກັບບັນທັດຖານທີ່ເຂົາເຈົ້າຕ້ອງການແກ້ໄຂ ໃນລະຫວ່າງການສົນທະນາ ແລະ ຍ້ອນຫຍັງ. ຕໍ່ໄປນີ້ແມ່ນບາງວິທີທີ່ຈະຊ່ວຍ ໃຫ້ຜູ້ເຂົ້າຮ່ວມຈັດບຸລິມະສິດຄວາມສຳຄັນ:
   - ພິຈາລະນາວ່າ ບັນທັດຖານໃດທີ່ມີຜົນກະທົບຕໍ່ຈຳນວນຜູ້ຄົນທີ່ຫຼາຍທີ່ສຸດ ຫຼື ວ່າບັນທັດຖານໃດທີ່ມີຜົນກະທົບຕໍ່ປະຊາຊົນທີ່ມີຄວາມອ່ອນແອ ແລະ ດ້ອຍໂອກາດຫຼາຍທີ່ສຸດ?
   - ຖ້າກຸ່ມບໍ່ສາມາດຕົກລົງເຫັນດີນຳກັນ, ຜູ້ອຳນວຍຄວາມສະດວກສາມາດໃຫ້ຜູ້ເຂົ້າຮ່ວມລົງຄະແນນສຽງ.

| ບັນທັດຖານ/ ບັນຫາທາງສັງຄົມ | ຜູ້ຄົນທີ່ຖືກຜົນກະທົບຈາກບັນທັດຖານ | ຜົນກະທົບຕໍ່ຂະແໜງການສະເພາະ | ຜົນກະທົບຕໍ່ຄົວເຮືອນ | ການປ່ຽນແປງໃນທາງບວກເນື່ອງຈາກມີການປ່ຽນແປງບັນທັດຖານ | ການປ່ຽນແປງງ່າຍເທົ່າໃດ? |
|---|---|---|---|---|---|
| | | | | | |
| | | | | | |

4. ຖ້າມີເວລາ, ໃຫ້ຜູ້ເຂົ້າຮ່ວມເລີ່ມວາງແຜນສຳລັບການຈັດຕັ້ງປະຕິບັດ SAA ສຳລັບການວາງບູລິມະສິດຂອງບັນທັດຖານທາງສັງຄົມ ໂດຍຕອບຄຳຖາມດັ່ງຕໍ່ໄປນີ້:
    - ເຄື່ອງມືໃດທີ່ກ່ຽວຂ້ອງ ແລະ ເໝາະສົມທີ່ສຸດ ໃນການແກ້ໄຂບັນທັດຖານທີ່ເປັນບູລິມະສິດ?
    - ການສົນທະນາເຫຼົ່ານີ້ຈະເກີດຂຶ້ນເມື່ອໃດ?
    - ໃຜຈະອຳນວຍຄວາມສະດວກໃນການສົນທະນາເຫຼົ່ານີ້ ແລະ ການຝຶກອົບຮົມ ແລະ/ຫຼື ການສະໜັບສະໜູນອັນໃດທີ່ພວກເຂົາຕ້ອງການໃຫ້ມີປະສິດທິຜົນ?

## ຄໍາແນະນໍາສໍາລັບຜູ້ອໍານວຍຄວາມ

ຖ້າເປັນໄປໄດ້ ເຄື່ອງມືດັ່ງກ່າວນີ້ຄວນຖືກນຳໃຊ້ຮ່ວມກັບຜົນໄດ້ຮັບຈາກການວິເຄາະດ້ານບົດບາດທາງເພດ ແລະ ອຳນາດ. ເພື່ອປະຕິບັດສິ່ງດັ່ງກ່າວ, ໃຫ້ຜູ້ເຂົ້າຮ່ວມມີເວລາໃນການທົບທວນຄືນຜົນການຄົ້ນຄວ້າຈາກການວິເຄາະບົດບາດທາງເພດ ແລະ ອຳນາດ (ໂດຍການອ່ານບົດສະຫຼຸບ, ນຳສະເໜີກ່ຽວກັບຜົນການຄົ້ນຄວ້າຢ່າງໄວວາ ແລະ ອື່ນໆ). ຈາກນັ້ນ, ຂັ້ນຕອນທີ 2 ຄວນລວມເອົາການສົນທະນາກ່ຽວກັບ ບັນທັດຖານໃດທີ່ຍັງເກີດຂຶ້ນໃນປະຈຸບັນ ແລະ ສຳຄັນທີ່ສຸດທີ່ໄດ້ມາຈາກຜົນການຄົ້ນຄວ້າວິໄຈ. ຖ້າຫາກມີເວລາຈຳກັດ, ຂັ້ນຕອນທີ 4 ຄວນນຳພາໂດຍຜູ້ຈັດການໂຄງການໃນເວລາຕໍ່ມາ ໂດຍໃຊ້ຂໍ້ມູນທີ່ມີໃນຕາຕະລາງ ເພື່ອວາງແຜນການຈັດຕັ້ງປະຕິບັດເຄື່ອງມືວິເຄາະທາງສັງຄົມເພື່ອການປ່ຽນແປງ (SAA) ໂດຍການປະສານງານກັບກິດຈະກຳຂອງໂຄງການອື່ນໆ.